ກະຊວງສຶກສາທິການ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ



# ບົດສະຫຼຸບການປະຕິບັດ ແຜນພັດທະນາການສຶກສາ 2003-2004 ແລະ ແຜນພັດທະນາການສຶກສາ 2004-2005

ສິງຫາ 2004

# ບົດສະຫລຸບການປະຕິບັດ

# ແຜນການພັດທະນາການສຶກສາ 2003-2004

# ແລະ

# ແຜນການພັດທະນາການສຶກສາ

# 2004-2005

ສິງຫາ 2004

# ຄຳນຳ

ກອງປະຊຸມຜູ້ບໍລິຫານການສຶກສາທົ່ວປະເທດປະຈຳປີ 2004 ໄດ້ຈັດຂຶ້ນທີ່ເມືອງປາກເຊ, ແຂວງຈຳ ປາສັກ ແຕ່ວັນທີ 19-23 ກໍລະກົດ 2004, ມີຜູ້ບໍລິຫານການສຶກສາ ພ້ອມດ້ວຍແຂກທີ່ຖືກເຊີນຈາກສູນກາງ ແລະ ທ້ອງຖິ່ນເຂົ້າຮ່ວມທັງໝົດ 109 ທ່ານ: ໃນນັ້ນຈາກກົມ ແລະ ສະຖາບັນອ້ອມຂ້າງກະຊວງສຶກສາທິການ 34 ທ່ານ, ຈາກປົກຄອງແຂວງ 17 ທ່ານ, ຈາກພະແນກສຶກສາປະຈຳແຂວງ-ນະຄອນຫລວງວຽງຈັນ ແລະ ເຂດພິເສດ 18 ທ່ານ, ຈາກກະຊວງ ແລະ ອົງການທຽບເທົ່າອ້ອມຂ້າງສູນກາງ 7 ທ່ານ ແລະ ຜູ້ແທນອ້ອມຂ້າງແຂວງຈຳປາສັກ 23 ທ່ານ. ພິເສດໃນກອງປະຊຸມປະຈຳປີນີ້ຍັງໄດ້ຮັບກຽດ ຈາກ ທ່ານ ບົວສອນ ບຸບຜາວັນ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ຜູ້ປະຈຳ ການລັດຖະບານ ໄດ້ເຂົ້າຮ່ວມເປັນປະທານຕະຫລອດໄລຍະດຳເນີນກອງປະຊຸມ.

ໃນກອງປະຊຸມຄັ້ງນີ້ໄດ້ຄົ້ນຄວ້າຜ່ານເອກະສານສຳຄັນຂອງຂະແໜງການສຶກສາຄື: ຮ່າງບົດສະຫລຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ປະຈຳສົກຮຽນ 2003-04 ແລະ ຮ່າງແຜນພັດທະນາການສຶກສາ ສົກຮຽນ 2004-05, ຮ່າງບົດສະຫລຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ 5 ປີ ຄັ້ງທີ V (2001-05) ແລະ ຮ່າງແຜນພັດທະນາການສຶກສາ 5 ປີ ຄັ້ງທີ VI (2005-10). ເຖິງວ່າສະພາບການສາກົນ ແລະ ພາກພື້ນ ຍັງສືບຕໍ່ຜັນແປໄປຢ່າງສັບສົນ, ສະພາບເສດຖະກິດ ຊີວິດການເປັນຢູ່ພາຍໃນປະເທດຍັງພົບຄວາມຫຍຸ້ງຍາກ, ແຕ່ພະນັກງານ, ຄູ - ອາຈານ ແລະ ນັກຮຽນ - ນັກສຶກສາສ່ວນຫລວງຫລາຍແມ່ນມີຄວາມບຸກບືນຜ່ານຜ່າຕໍ່ຄວາມຫຍຸ້ງຍາກນາໆປະການ, ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານທີ່ຖືກມອບໝາຍດ້ວຍຄວາມຮັບຜິດຊອບ ເຮັດໃຫ້ການສຶກສາໃນທຸກຊັ້ນທຸກສາຍ ໂດຍທົ່ວໄປແລ້ວແມ່ນມີການຂະຫຍາຍຕົວເປັນປົກກະຕິ. ໃນນັ້ນ ຊັ້ນຮຽນທີ່ມີການຂະຫຍາຍຕົວໄວແມ່ນຊັ້ນມັດທະຍົມສຶກສາ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ຍ້ອນໄດ້ມີການສ້າງຕັ້ງໂຮງຮຽນຂຶ້ນໃໝ່ຫລາຍແຫ່ງນັບທັງພາກລັດ ແລະ ເອກະຊົນ, ມະຫາວິທະຍາໄລກໍໄດ້ສ້າງຕັ້ງຂຶ້ນໃໝ່ 2 ແຫ່ງຄື: ຢູ່ພາກໃຕ້ທີ່ແຂວງຈຳປາສັກ ແລະ ຢູ່ພາກເໜືອ ທີ່ແຂວງ ຫລວງພະບາງ.

ຄຽງຄູ່ກັບຜົນສຳເລັດໃນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາໃນໄລຍະທີ່ຜ່ານມາ, ກອງປະຊຸມຍັງໄດ້ສັງເກດຕີລາຄາຈຸດອ່ອນ ຂໍ້ຄົງຄ້າງຂອງຂະແໜງສຶກສາໃນບາງດ້ານເປັນຕົ້ນ: ການຂະຫຍາຍໂອກາດການເຂົ້າຮຽນໃນຊັ້ນອານຸບານ ແລະ ຊັ້ນປະຖົມມີການເພີ່ມຂຶ້ນຊ້າກວ່າຊັ້ນຮຽນອື່ນ, ພ້ອມດຽວກັນນັ້ນການຄ້າງຫ້ອງ ແລະ ປະລະການຮຽນຂອງຊັ້ນປະຖົມກໍຍັງມີອັດຕາສ່ວນສູງຄືກັບ 2 ສົກຮຽນຜ່ານມາ. ບັນຫາຄົງຄ້າງທີ່ເປັນພື້ນຖານ ຂອງຂະແໜງການສຶກສາໃນປັດຈຸບັນແມ່ນການຂາດເຂີນຄູສອນໃນທຸກຊັ້ນຮຽນຢູ່ທຸກທ້ອງຖິ່ນ, ແຕ່ລະສົກຮຽນສະຖາບັນສ້າງຄູໄດ້ສ້າງຄູໃໝ່ ອອກຈຳນວນຫລາຍສົມຄວນແຕ່ກໍບໍ່ສາມາດສັບຊ້ອນໄປສອນໄດ້ໝົດ ຍ້ອນໂກຕາຮັບເອົາຄູສອນເຂົ້າໃໝ່ມີຈຳກັດ ແລະ ອີກດ້ານໜຶ່ງຜູ້ທີ່ຈົບອອກໃໝ່ຈຳນວນໜຶ່ງບໍ່ໄປຕາມການສັບຊ້ອນຈຶ່ງເຮັດໃຫ້ແຕ່ລະທ້ອງຖິ່ນຈຳເປັນຕ້ອງໄດ້ຮັບເອົາຄູສັນຍາຈ້າງເຂົ້າ

ສອນຕາມຄວາມຮຽກຮ້ອງຕ້ອງການຂອງແຕ່ລະທ້ອງຖິ່ນ, ບັນຫາດັ່ງກ່າວໄດ້ເປັນຜົນສະທ້ອນຕໍ່ກັບການສອນ-ການຮຽນ ບໍ່ມີຄຸນນະພາບເທົ່າທີ່ຄວນ.

ນອກຈາກນັ້ນກອງປະຊຸມຍັງໄດ້ຄົ້ນຄວ້າປະກອບຄຳເຫັນໃສ່ເອກະສານສຳຄັນຂອງຂະແໜງການສຶກສາ ຕື່ມ ອີກ ເຊັ່ນ: ແຜນປະຕິບັດງານການສຶກສາເພື່ອທຸກຄົນ (2004-15), ແຜນຍຸດທະສາດພັດທະນາຄູແຫ່ງຊາດ ແຕ່ນີ້ເຖິງປີ 2007, ເສດຖະສາດການສຶກສາ, ໂຄງການພັດທະນາການສຶກສາໄລຍະ 2, ໂຄງການ ຮ່ວມມືລາວ-ເຢຍລະມັນ... ອັນໄດ້ເຮັດໃຫ້ຜູ້ແທນຢູ່ໃນກອງປະຊຸມຮັບຮູ້ ແລະ ເຂົ້າໃຈເພື່ອສ້າງເງື່ອນໄຂ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າ.

ໃນສົກຮຽນ (2004-05) ທີ່ຈະມາເຖິງນີ້, ໃຫ້ທຸກກົມກອງ, ສະຖາບັນການສຶກສາອ້ອມຂ້າງກະຊວງສຶກສາທິການ, ພະແນກສຶກສາປະຈຳແຂວງ, ນະຄອນຫລວງວຽງຈັນ ແລະ ເຂດພິເສດ ໃນທົ່ວປະເທດຈົ່ງນຳໃຊ້ເອກະສານສະບັບນີ້ເປັນບ່ອນອີງໃນການຄົ້ນຄວ້າ ແລະ ຜັນຂະຫຍາຍເປັນແຜນການ ເພື່ອຈັດຕັ້ງປະຕິບັດໃນຂັ້ນຂອງຕົນໃຫ້ໄດ້ຮັບໝາກຮັບຜົນຕົວຈິງ ພ້ອມນັ້ນກໍໃຫ້ເອົາໃຈໃສ່ຕິດຕາມ, ປະເມີນຜົນ ແລະ ສະຫລຸບລາຍງານຄວາມຄືບໜ້າໃຫ້ກະຊວງສຶກສາທິການຊາບເປັນປົກກະຕິ.

ນະຄອນຫລວງວຽງຈັນ, ວັນທີ 17 ສິງຫາ 2004

ລັດຖະມົນຕີວ່າການກະຊວງສຶກສາທິການ

ສົມມະຂອງ ເລືອງຄຳມາ

**ສາລະບານ**

**ພາກທີໜຶ່ງ**

**ບົດສະຫຼຸບການປະຕິບັດແຜນການພັດທະນາການສຶກສາປະຈຳປີຮຽນ 2003-2004**


| | ຄຳນຳ | ໜ້າ |
|---|---|---|
| I | **ແຜນງານຂະຫຍາຍໂອກາດ** | **1** |
| | 1. ວຽກງານສາມັນສຶກສາ | 1 |
| | 1.1 ວຽກງານລ້ຽງເດັກ ແລະ ອະນຸບານ | 1 |
| | 1.2 ວຽກງານປະຖົມສຶກສາ | 2 |
| | 1.3 ວຽກງານມັດທະຍົມສຶກສາ | 5 |
| | 2. ວຽກງານສ້າງຄູ | 8 |
| | 3. ວຽກງານສຶກສານອກລະບົບໂຮງຮຽນ | 10 |
| | 4. ວຽກງານອາຊີວະສຶກສາ ແລະ ການສຶກສາຊັ້ນສູງ | 11 |
| | 4.1 ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ | 11 |
| | 4.2 ວຽກງານການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລ | 11 |
| II | **ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ** | 14 |
| | 1. ການບຳລຸງຄູ | 14 |
| | 2. ການພັດທະນາຫຼັກສູດ | 14 |
| | 3. ການຝຶກອົບຮົມ | 15 |
| | 4. ການປັບປຸງນະໂຍບາຍ ແລະ ລະບຽບການຕ່າງໆ | 17 |
| | 5. ການປະກອບວັດຖຸ ອຸປະກອນຮັບໃຊ້ການສອນ-ການຮຽນ | 17 |
| III | **ແຜນງານການຍົກລະດັບການບໍລິຫານ ແລະ ຄຸ້ມຄອງການສຶກສາ** | 18 |
| | 1. ວຽກງານປັບປຸງກົງຈັກ ແລະ ການຈັດຕັ້ງ | 18 |
| | 2. ວຽກງານຄຸ້ມຄອງລັດຖະກອນ | 19 |
| | 3. ວຽກງານຄຸ້ມຄອງ ງົບປະມານ ການເງິນ | 20 |
| | 4. ວຽກງານກວດກາການສຶກສາ | 21 |
| | 5. ວຽກງານແຜນການ, ການຮ່ວມມື ແລະ ພົວພັນກັບຕ່າງປະເທດ | 21 |
| IV | **ຕີລາຄາລວມ** | 23 |
| | 4.1ດ້ານດີ | 23 |
| | 4.2ດ້ານອ່ອນ ແລະ ຂໍ້ຄົງຄ້າງ | 24 |
| | 4.3 ສາເຫດພາໃຫ້ມີຈຸດອ່ອນ | 24 |
| | 4.4 ຖອດຖອນບົດຮຽນ | 25 |

# ພາກທີ່ສອງ

## ແຜນພັດທະນາການສຶກສາປະຈຳປີສົກຮຽນ 2004-2005

**1. ທິດທາງໜ້າທີ່ ແລະ ລະດັບຄາດໝາຍລວມ** 28

1.1 ທິດທາງໜ້າທີ່ລວມ 28

1.2 ລະດັບຄາດໝາຍລວມ 29

**2. ແຜນງານພັດທະນາການສຶກສາ** 29

2.1 ແຜນງານຂະຫຍາຍໂອກາດການເຂົ້າຮຽນ 29

2.2 ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ 31

1. ການປັບປຸງວິທີການສອນຂອງຄູ 32

2. ການກວດກາການສຶກສາ 32

2.3 ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ 33

2.3.1 ການຄຸ້ມຄອງການເມືອງແນວຄິດ 33

2.3.2 ວຽກງານຄຸ້ມຄອງລັດຖະກອນ 33

2.3.3 ການປັບປຸງກົງຈັກການຈັດຕັ້ງ 34

2.3.4 ການປັບປຸງລະບຽບການປົກຄອງ ແລະ ຄຸ້ມຄອງ 35

## ພາກທີໜຶ່ງ
## ບົດສະຫລຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ
## ສົກຮຽນ 2003 - 2004.

ໂດຍປະຕິບັດຕາມເນື້ອໃນຈິດໃຈຂອງກອງປະຊຸມຜູ້ບໍລິຫານງານການສຶກສາທົ່ວປະເທດ ປະຈຳປີ 2003 ທີ່ແຂວງບໍລິຄຳໄຊ, ການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ສົກຮຽນ 2003 - 2004 ນີ້ ໄດ້ສືບຕໍ່ດຳເນີນຕາມ 3 ແຜນງານ ດັ່ງນີ້:

* ແຜນງານ ຂະຫຍາຍໂອກາດການເຂົ້າຮຽນ
* ແຜນງານ ປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ
* ແຜນງານ ບໍລິຫານ ແລະ ຄຸ້ມຄອງການສຶກສາ

ຜ່ານການຈັດຕັ້ງປະຕິບັດ 3 ແຜນງານດັ່ງກ່າວ ຂະແໜງການສຶກສາໄດ້ມີທ່າກ້າວ ຂະຫຍາຍຕົວທັງດ້ານປະລິມານ ແລະ ຄຸນນະພາບ ດັ່ງນີ້:

### *I. ແຜນງານຂະຫຍາຍໂອກາດການເຂົ້າຮຽນ.*

#### *1 ວຽກງານສາມັນສຶກສາ.*

#### *1.1 ວຽກງານລ້ຽງເດັກ ແລະ ອະນຸບານ:*

ສົກຮຽນ 2003-2004 ທົ່ວປະເທດ, ມີໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ທັງໝົດ 867 ແຫ່ງ, ໃນນີ້ໂຮງຮຽນພາກເອກະຊົນມີ 123 ແຫ່ງ, ຖ້າທຽບໃສ່ປີຮຽນຜ່ານມາຈຳນວນໂຮງຮຽນເພີ່ມຂຶ້ນ 47 ແຫ່ງ (ເທົ່າກັບ 5.7%), ພາກເອກະຊົນເພີ່ມຂຶ້ນ 22 ແຫ່ງ. **ຫ້ອງຮຽນທັງໝົດ**ມີ 1,676 ຫ້ອງ ເພີ່ມຂຶ້ນ 111 ຫ້ອງ ( 7.1%); ພາກເອກະຊົນມີ 368 ຫ້ອງ ເພີ່ມຂຶ້ນ 72 ຫ້ອງ ( 19.57%).

ຄູສອນທັງໝົດມີ_2,507 ຄົນ/ ຍິງ 2,494 ຄົນ(99.4%), ໃນນີ້ ຄູພາກເອກະຊົນມີ 537 ຄົນ/ຍິງ 529 ຄົນ(98.5%) , ຄູເພີ່ມຂຶ້ນທັງໝົດ 130 ຄົນ( 5.5%), ຄູພາກເອກະຊົນເພີ່ມຂຶ້ນ 99 ຄົນ (18.44%).

ເດັກນັກຮຽນທັງໝົດມີ 41,624 ຄົນ/ຍິງ 20,974 ຄົນ ( 50.4%), ໃນນີ້ ນັກຮຽນ ພາກເອກະຊົນມີ 9,814 ຄົນ/ຍິງ 4,805 ຄົນ(49%), ນັກຮຽນທັງໝົດເພີ່ມຂຶ້ນ 2,645 (6.8% ), ໃນນີ້ ພາກເອກະຊົນ ເພີ່ມຂຶ້ນ 1,559 ຄົນ(15.89%), ອັດຕາເຂົ້າຮຽນລວມ ຂອງຊັ້ນອະນຸບານບັນລຸໄດ້ 8.1% (ຍິງ 8.4%) ລື່ນຄາດໝາຍ 0.1% (ຄາດໝາຍ 8.0 %).

ອັດຕາສ່ວນນັກຮຽນຕໍ່ຄູສະເລ່ຍທົ່ວປະເທດ ເທົ່າກັບ 17:1 , ອັດຕາສ່ວນນັກຮຽນຕໍ່ຫ້ອງ 25:1 (ເທົ່າກັບ ສົກຮຽນຜ່ານມາ)

ວຽກງານລ້ຽງເດັກ ແລະ ອະນຸບານ ໃນສົກຮຽນນີ້ໄດ້ມີການຂະຫຍາຍຕົວຄື: ນັກຮຽນເພີ່ມຂຶ້ນ 6.8%, ແຕ່ມີການແຕກໂຕນກັນລະຫວ່າງແຂວງຕໍ່ແຂວງ ເຊັ່ນ: ແຂວງທີ່ມີອັດຕາເພີ່ມຂຶ້ນສູງ ກວ່າ 20% ມີ 2 ແຂວງ: ນະຄອນຫຼວງວຽງຈັນ (22.6%) ແລະ ແຂວງຫຼວງພະບາງ (20.3%), ເພີ່ມຂຶ້ນລະຫວ່າງ 10-20% ມີ 6 ແຂວງ: ແຂວງຜົ້ງສາລີ (11.9%), ແຂວງຫຼວງນ້ຳທາ (18.1%), ແຂວງອຸດົມໄຊ (18%), ແຂວງບໍ່ແກ້ວ (17.6%), ແຂວງເຊກອງ (17.9%), ແລະ ເຂດພິເສດ (14.8%), ເພີ່ມຂຶ້ນ ແຕ່ 1-5% ມີ 4 ແຂວງ: ແຂວງຫົວພັນ (3.9%), ແຂວງໄຊຍະບູລີ (2.1%), ແຂວງຄຳມ່ວນ (4.3%) ແລະ ແຂວງຈຳປາສັກ (3.2%) ແລະ ມີ 5 ແຂວງທີ່ມີອັດຕານັກຮຽນຫຼຸດລົງ ຄື: ແຂວງຊຽງຂວາງ(22.5%), ແຂວງວຽງຈັນ(0.2%), ແຂວງບໍລິຄຳໄຊ(9.2%), ແຂວງ ສາລະວັນ(19.9%) ແລະ ແຂວງອັດຕະປື (1.7%).

ນອກຈາກນີ້ ຍັງໄດ້ທົດລອງຂະຫຍາຍ ຫ້ອງຮຽນອະນຸບານຕິດກັບໂຮງຮຽນປະຖົມຢູ່ແຂວງຫຼວງພະບາງ 20 ແຫ່ງ, ມີ 20 ຫ້ອງ, ມີຄູ 20 ຄົນ(ຍິງທັງໝົດ); ມີນັກຮຽນ 438 ຄົນ/ຍິງ 256 ຄົນ(58.44%) ແລະ ນະຄອນຫຼວງວຽງຈັນມີ 4 ແຫ່ງ ມີ 4 ຫ້ອງ, ມີຄູ 4 ຄົນ(ຍິງທັງໝົດ)ມີນັກຮຽນ 90 ຄົນ/ຍິງ 39 ຄົນ (43.33%).

### *1.2 ວຽກງານປະຖົມສຶກສາ*

ສົກຮຽນ 2003-04 ທົ່ວປະເທດມີໂຮງຮຽນປະຖົມທັງໝົດ 8,529 ແຫ່ງ ທຽບປີຜ່ານມາ ເພີ່ມຂຶ້ນ 43 ແຫ່ງ (0.5%); ໃນນີ້ໂຮງຮຽນພາກເອກະຊົນມີ 87 ແຫ່ງ. ໂຮງຮຽນປະຖົມສົມບູນທັງໝົດມີ 3,651 ແຫ່ງ (42.8%), ໃນນັ້ນພາກເອກະຊົນມີ 69 ແຫ່ງ. ໃນນີ້ມີ ໂຮງຮຽນປະຖົມກິນນອນຊົນເຜົ່າ 11 ແຫ່ງ, ໂຮງຮຽນປະຖົມສົງມີ 11 ແຫ່ງທຽບໃສ່ປີຜ່ານມາເພີ່ມຂຶ້ນ 5 ແຫ່ງ (45.45%). ການຈັດຕັ້ງກຸ່ມໂຮງຮຽນເພື່ອຈຸດປະສົງຊ່ວຍເຫຼືອຊຶ່ງ ກັນ ແລະ ກັນທາງດ້ານວິຊາການນັ້ນ, ປັດຈຸບັນມີທັງໝົດ 317 ກຸ່ມ, ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 5 ກຸ່ມ.

ສັງລວມແລ້ວ ຈຳນວນໂຮງຮຽນໄດ້ເພີ່ມຂຶ້ນ 0.5%, ໃນນີ້ມີ 12 ແຂວງ ທີ່ມີຈຳນວນໂຮງຮຽນປະຖົມເພີ່ມຂຶ້ນ, 1 ແຂວງມີຈຳນວນເທົ່າເດີມ ແລະ ອີກ 5 ແຂວງມີຈຳນວນຫຼຸດລົງ. ຕົວເລກດັ່ງກ່າວນີ້ ສະແດງໃຫ້ເຫັນວ່າການລົງທຶນໃສ່ການປຸກສ້າງໂຮງຮຽນແມ່ນເພື່ອທົດແທນໂຮງຮຽນເກົ່າທີ່ເປ່ເພ ແລະ ມີລັກສະນະຊົ່ວຄາວເປັນຕົ້ນຕໍ.

ຫ້ອງຮຽນທັງໝົດມີ 27,428 ຫ້ອງ ທຽບໃສ່ສົກຮຽນຜ່ານມາຫ້ອງຮຽນຫລຸດລົງ 152 ຫ້ອງ(0.6%), (ຫ້ອງຄວບທັງໝົດມີ 6,666 ຫ້ອງ ເທົ່າກັບ 24.3%, ເພີ່ມຂຶ້ນ 498 ຫ້ອງ (8.1), ໃນນີ້ ຫ້ອງຮຽນສົງມີ 22 ຫ້ອງ. ໃນຈຳນວນຫ້ອງຮຽນທັງໝົດນີ້, ຈຳນວນຫ້ອງຮຽນຂອງພາກເອກະຊົນມີ 536 ຫ້ອງ, ເພີ່ມຂຶ້ນ 23 ຫ້ອງ, ໃນນີ້ຫ້ອງຄວບ19 ຫ້ອງ ເທົ່າກັບ 3.5% .

ຈຳນວນຫ້ອງຮຽນ (ຫ້ອງດ່ຽວ) ຫຼຸດລົງ 0.6% ຍ້ອນ 17 ແຂວງໄດ້ສ້າງຫ້ອງຄວບເພີ່ມຂຶ້ນ 8.1% , ມີພຽງ 1 ແຂວງເທົ່ານັ້ນທີ່ຈຳນວນຫ້ອງຄວບຫຼຸດລົງ ( ແຂວງໄຊຍະບູລີ ); ຕົວເລກດັ່ງກ່າວໄດ້ສະແດງໃຫ້ເຫັນວ່າຄູສອນຍັງບໍ່ພຽງພໍກັບຈຳນວນຫ້ອງຮຽນ.

**ຄູສອນທັງໝົດ ມີ** 27,684 ຄົນ/ຍິງ 12,413 ຄົນ ( 44.8%); ໃນນັ້ນ ຄູສອນໂຮງຮຽນສົງມີ 29 ອົງ, ຄູສອນພາກເອກະຊົນມີ 654 ຄົນ/ຍິງ 511 ຄົນ ( 78.1%) ແລະ ຄູສຶກສານິເທດມີທັງໝົດ 492 ຄົນ/ຍິງ 69 ຄົນ(14.02%) ໃນນີ້ ມີຄູນິເທດໃນໂຄງການການສຶກສາພື້ນຖານເພື່ອເດັກຍິງມີ 52 ຄົນ/ຍິງ 41 ຄົນ (78.84%). ຈຳນວນຄູໃນທົ່ວປະເທດຫຼຸດລົງ 887 ຄົນ(3.1%) ໃນນັ້ນມີ 12 ແຂວງທີ່ ຈຳນວນຄູຫຼຸດລົງແຕ່ 0.1% (ນະຄອນຫຼວງວຽງຈັນ) ເຖິງ 15.6% (ແຂວງຫຼວງນ້ຳທາ). ສາຍເຫດຂອງຈຳນວນຄູຫລຸດລົງ ຍ້ອນຄູສັນຍາ ຈ້າງຈາກໂຄງການຊ່ວຍເຫຼືອ ຂອງຕ່າງ ປະເທດໝົດກຳນົດແລ້ວພາໃຫ້ໂຮງຮຽນຖືກຍຸບ.

**ນັກຮຽນຊັ້ນປະຖົມທັງຫມົດມີ** 884,629 ຄົນ/ຍິງ 406,208 ຄົນ (ເທົ່າກັບ 45.9%) ເພີ່ມຂຶ້ນ 7,980 ຄົນ (0.9%); ໃນນີ້ ນັກຮຽນໂຮງຮຽນຊົນເຜົ່າທັງໝົດມີ 2,456 ຄົນ/ຍິງ 676 ຄົນ ( 27.52%) ແລະ ໄດ້ຮັບເບ້ຍລ້ຽງຈາກລັດຖະບານທັງໝົດ. ນັກຮຽນສົງທັງໝົດມີ 368 ອົງ, ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 2 ອົງ ແລະ ພາກເອກະຊົນມີນັກຮຽນທັງໝົດ 18,223 ຄົນ/ຍິງ 8,433 ຄົນ(46.3%) .

ຈຳນວນນັກຮຽນທົ່ວປະເທດເພີ່ມຂຶ້ນ 0.9%, ຍ້ອນບາງແຂວງມີຈຳນວນນັກຮຽນຫຼຸດລົງທຽບໃສ່ສົກຮຽນຜ່ານມາຢູ່ແຂວງຊຽງຂວາງນັກຮຽນຫລຸດລົງ (3.9%) ຍ້ອນໝົດໂຄງການແລ້ວໂຮງຮຽນຍຸບ.

ສະພາບການຂະຫຍາຍໂອກາດການເຂົ້າຮຽນໃນສົກຮຽນ 2003 - 2004 ຂອງຊັ້ນປະຖົມທົ່ວປະເທດ, ສາມາດເວົ້າໄດ້ວ່າ:

1. ອັດຕາຄ້າງຫ້ອງຫລຸດລົງພຽງເລັກນ້ອຍຄືຈາກ 20.3% ສົກຮຽນຜ່ານມາ ເປັນ 20.1% *(ຍິງ 18.8%) ໃນສົກຮຽນນີ້* (ຄາດໝາຍ 18%).
2. ອັດຕາປະລະການຮຽນໄດ້ເພີ່ມຂຶ້ນຈາກ 8.4% ໃນສົກຮຽນ 2002-2003 ເປັນ 10% ໃນສົກຮຽນ 2003 - 2004 ຍ້ອນນັກຮຽນ ເສັງຕົກປີຜ່ານມາ ບໍ່ມາເຂົ້າຮຽນຄືນ. ສັງລວມແລ້ວ ອັດຕາການຄ້າງຫ້ອງ ແລະ ອັດຕາການປະລະ ປີ 2003-04 ນີ້ ເທົ່າກັບ 30.1% ສ່ວນ ປີກາຍ ມີພຽງ 28.7%. ຖ້າຢາກຫຼຸດອັດຕາການຄ້າງຫ້ອງ ແລະ ປະລະການຮຽນລົງ ຕ້ອງໄດ້ເອົາໃຈ ໃສ່ຈຳນວນນັກຮຽນເສັງຕົກຫຼຸດລົງ ໝາຍຄວາມວ່າ ຕ້ອງໄດ້ປັບປຸງ ການຮຽນ - ການສອນໃຫ້ດີຂຶ້ນ. ໂດຍສະເພາະຂັ້ນ ປ.1 ການຄ້າງຫ້ອງໄດ້ເພີ່ມຂຶ້ນຈາກ 34.7% ສົກຮຽນຜ່ານມາ ເປັນ 34.8% *(ຍິງ34.2%)* ( ຄາດໝາຍ 32.7% ); ໝົດຊັ້ນປະຖົມອັດຕາຄ້າງຫ້ອງສູງກວ່າໝູ່ແມ່ນແຂວງຫຼວງນ້ຳທາ 28.1% *(ຍິງ 29.2%)* ແລະ ຕ່ຳກວ່າຫມູ່ແມ່ນແຂວງ ຈຳປາສັກ 11.7% *(ຍິງ 10.3%)*;
3. ອັດຕາເລື່ອນຂັ້ນ ໃນຊັ້ນປະຖົມໄດ້ຫຼຸດລົງຈາກ 71.3%/ຍິງ72.9% ໃນປີຜ່ານມາເປັນ 69.9% */ຍິງ 71.2%)*. ແຂວງ ທີ່ມີອັດຕາເລື່ອນຂັ້ນສູງກ່ວາໝູ່ແມ່ນ ນະຄອນຫຼວງວຽງຈັນ 81.1%/*ຍິງ 83.8%* ແລະ ຕ່ຳກວ່າໝູ່ ແມ່ນແຂວງສາລະ ວັນ 57.8%*(ຍິງ 57.5%)*.

4. ອັດຕາການເຂົ້າຮຽນລວມຂອງຊັ້ນປະຖົມແມ່ນ 112.7%(ຍິງ104.8%) ແລະ ອັດຕາເຂົ້າຮຽນສຸດທິ ແມ່ນ 81.8%(ຍິງ 78.8%), ( ຄາດໝາຍ 84%), ຫຼຸດຈາກປີຜ່ານມາ 0.9% ແລະ 0.8% ຕາມລຳດັບ. ການເຂົ້າຮຽນຂອງເດັກໃນຊັ້ນປະຖົມເວົ້າລວມຍັງເຂົ້າຮຽນບໍ່ຖືກຕາມເກນອາຍຸ ແລະ ເດັກທີ່ມີອາຍຸ 6 ຫາ 10 ປີ ຍັງ 16.3% ທີ່ຍັງບໍ່ທັນໄດ້ເຂົ້າຮຽນ.
5. ອັດຕາເຂົ້າຮຽນໃໝ່ສຸດທິຂັ້ນ ປ.1 ສົມທຽບໃສ່ສົກຮຽນຜ່ານມາ ຫຼຸດລົງຈາກ 61.7% ມາ ເປັນ 59.7%(ຍິງ 95.5%) (ຄາດໝາຍ 65%); ສັງລວມແລ້ວ ເດັກອາຍຸ 6 ປີທີ່ບໍ່ໄດ້ເຂົ້າຮຽນຍັງ 37.9%.
6. ສະເລ່ຍທົ່ວປະເທດອັດຕາສ່ວນນັກຮຽນຕໍ່ຫ້ອງເທົ່າກັບ 32:1 ແລະ ອັດຕາສ່ວນນັກຮຽນຕໍ່ຄູເທົ່າກັບ 32:1 ສົມທຽບກັບສົກຮຽນ 2002-2003 ເຫັນວ່າອັດຕາສ່ວນທັງສອງປະເພດເພີ່ມ ຂຶ້ນ 0.6:1 ແລະ 1.3:1 ຕາມລຳດັບ.

ຖ້າເບິ່ງຈາກຈຳນວນຫ້ອງຮຽນ ທີ່ມີ 27,428 ຫ້ອງ ແລະ ຈຳນວນຄູ ມີ 27,684 ຄົນເຫັນວ່າ ຄູເຫຼືອຫ້ອງ ແຕ່ໃນສະເພາະຕົວຈິງແລ້ວຍັງຂາດຄູສອນຫຼາຍຊຶ່ງມີຫຼາຍປັດໄຈທີ່ບົ່ງບອກວ່າຄູປະຖົມສຶກສາ ຍັງບໍ່ພຽງພໍຫຼາຍ ໂດຍສະເພາະໃນເຂດພູດອຍ ຫ່າງໄກ ສອກຫຼີກ ເຊັ່ນ :

1. ໃນຈຳນວນຄູທັງໝົດ ນັບທັງຜູ້ອຳນວຍການໂຮງຮຽນປະຖົມສົມບູນ 3,644 ຄົນທີ່ເປັນຜູ້ ບໍລິຫານ ແລະ ສອນຊ່ວຍໃນຍາມຈຳເປັນເທົ່ານັ້ນ.
2. ໃນຈຳນວນຄູທັງໝົດນີ້ ມີຄູສັນຍາຈ້າງປະມານ 5,000 ຄົນ (ໃນນັ້ນລັດຈ້າງໄດ້ຮັບອະນຸມັດຈາກກົມກົງຈັກ ມີ 500 ຄົນ) ແລະ ອີກປະມານ 4,500 ຄົນ ແມ່ນມີທັງໂຄງການຕ່າງປະ ເທດ, ແຂວງ ແລະ ປະຊາຊົນຈ້າງຕາມເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ, ສະເພາະ 2 ປັດໄຈຂ້າງເທິງນີ້ ສະແດງໃຫ້ເຫັນວ່າຍັງມີການຂາດຄູສອນໃນຊັ້ນຮຽນນີ້ ປະມານ 8,644 ຄົນ.

*ຜົນການສອບເສັງເລື່ອນຊັ້ນ ເລື່ອນຂັ້ນຂອງນັກຮຽນຊັ້ນປະຖົມສຶກສາ:*

| ຂັ້ນ | ນັກຮຽນເຂົ້າເສັງ | | ນັກຮຽນເສັງໄດ້ | | % ນັກຮຽນເສັງໄດ້ | |
|---|---|---|---|---|---|---|
| | ລວມ | ຍິງ | ລວມ | ຍິງ | ລວມ | ຍິງ |
| ປ.1 | 256,389 | 120,491 | 152,275 | 82,431 | 59 | 68 |
| ປ.2 | 182,298 | 83,467 | 145,555 | 67,780 | 80 | 81 |
| ປ.3 | 151,230 | 69,138 | 129,456 | 60,151 | 86 | 87 |
| ປ.4 | 126,419 | 58,535 | 112,200 | 52,338 | 89 | 89 |
| ປ.5 | 108,704 | 49,753 | 100,053 | 46,411 | 92 | 93 |
| ລວມ | 824,040 | 381,384 | 639,539 | 309,811 | 78 | 81 |

## *1.3 ວຽກງານມັດທະຍົມສຶກສາ*

ສົກຮຽນ 2003-04 ມີໂຮງຮຽນມັດທະຍົມທັງໝົດມີ 926 ແຫ່ງ, ເພີ່ມຂຶ້ນ 47 ແຫ່ງ, ( ມັດທະຍົມຕອນຕົ້ນມີ 626 ແຫ່ງ, ມັດທະຍົມຕອນປາຍມີ 30 ແຫ່ງ ແລະ ມັດທະຍົມສົມບູນມີ 270 ແຫ່ງ, ໂຮງຮຽນກິນນອນຊົນ ເຜົ່າມີ 3 ແຫ່ງ), ໃນນີ້ໂຮງຮຽນພາກເອກະຊົນມີ 24 ແຫ່ງ ( ເພີ່ມຂຶ້ນ 4 ແຫ່ງ),ໂຮງ ຮຽນສົງ ມີ 31 ແຫ່ງ. ປັດຈຸບັນ ມີສູນສຶກສານິເທດທັງໝົດ 18 ແຫ່ງ ເພື່ອຕິດຕາມຊຸກຍູ້ ແລະ ຊ່ວຍເຫຼືອ ຄູ-ອາຈານທາງດ້ານວິຊາການ.

ສັງລວມແລ້ວ ຈຳນວນໂຮງຮຽນມັດທະຍົມສຶກສາເພີ່ມຂຶ້ນ 5%, ໃນນັ້ນ ມັດທະຍົມຕອນຕົ້ນ ເພີ່ມຂຶ້ນ 2.7%, ແຕ່ວ່າຢູ່ ຊັ້ນມັດທະຍົມຕອນປາຍຫຼຸດລົງ (6.6%) ແລະ ມັດທະຍົມສົມບູນເພີ່ມຂຶ້ນ 12%. ຕົວເລກດັ່ງກ່າວນີ້ ສະແດງໃຫ້ເຫັນວ່າມີຫຼາຍແຂວງໄດ້ເຕົ້າໂຮມໂຮງຮຽນມັດທະຍົມຕອນຕົ້ນແລະມັດທະຍົມຕອນປາຍໃຫ້ເປັນໂຮງຮຽນມັດທະຍົມສົມບູນ. ມີພຽງແຕ່ 3 ແຂວງເທົ່ານັ້ນທີ່ບໍ່ໄດ້ຂະຫຍາຍໂຮງຮຽນມັດທະ ຍົມສົມບູນ ຄື: ແຂວງອຸດົມໄຊ, ແຂວງຊຽງຂວາງ ແລະ ແຂວງ ວຽງຈັນ.

ຫ້ອງຮຽນທັງໝົດມີ 7,523 ຫ້ອງ, ເພີ່ມຂຶ້ນ 449 ຫ້ອງ (ຫ້ອງຮຽນ ມ.ຕົ້ນ 5,090 ຫ້ອງ, ຫ້ອງຮຽນ ມ.ປາຍ 2,433 ຫ້ອງ), ໃນນັ້ນ ຫ້ອງຮຽນສົງ 130 ຫ້ອງ. ຫ້ອງຮຽນພາກເອກະຊົນມີ 127 ຫ້ອງ, ເພີ່ມຂຶ້ນ 40 ຫ້ອງ.

ສັງລວມແລ້ວ ຈຳນວນຫ້ອງຮຽນມັດທະຍົມຕອນຕົ້ນ ເພີ່ມຂຶ້ນ 4.3%, ການເພີ່ມຫ້ອງຮຽນມີການແຕກໂຕນກັນລະຫວ່າງແຂວງ ເຊັ່ນ: ການເພີ່ມສູງກ່ວາໝູ່ແມ່ນ 26.4% ຢູ່ແຂວງສາລະວັນ, ການ ເພີ່ມແຕ່ 1-10% ມີ 6 ແຂວງ ( ຫຼວງນ້ຳທາ, ຫົວພັນ, ໄຊຍະບູລີ, ຊຽງຂວາງ, ບໍລິຄຳໄຊ, ຈຳປາສັກ ), ເພີ່ມແຕ່ 10% ຂຶ້ນໄປ ມີ 6 ແຂວງ (ອຸດົມໄຊ, ບໍ່ແກ້ວ, ຄຳມ່ວນ, ເຊກອງ, ອັດຕະປື, ເຂດພິເສດ ) ແລະ ມີ 4 ແຂວງ

ທີ່ຫ້ອງຮຽນຫຼຸດລົງ ຄື: ແຂວງຜົ້ງສາລີ (2.8%), ແຂວງຫຼວງພະບາງ (0.7%), ແຂວງວຽງຈັນ (0.4%) ແລະ ແຂວງສະຫວັນນະ ເຂດ (9%).

ຈຳນວນຫ້ອງຮຽນມັດທະຍົມຕອນປາຍ ເພີ່ມຂຶ້ນ 9.3% ແລະ ເພີ່ມຂຶ້ນເຖິງ 50% ມີ 2 ແຂວງ ຄື: ແຂວງສາລະວັນ (58.5%), ແຂວງເຊກອງ (50%), ເພີ່ມແຕ່ 15-40% ມີ 5 ແຂວງຄື: ແຂວງຜົ້ງສາລີ (36.7%), ແຂວງບໍ່ແກ້ວ (21.7%), ແຂວງໄຊຍະບູລີ (15.2%), ແຂວງອັດຕະປື (22.2%) ແລະ ເຂດພິເສດ (28.6%), ສ່ວນແຂວງຊຽງຂວາງ ຈຳນວນຫ້ອງຮຽນແມ່ນຫຼຸດລົງ (-0.8%).

ຄູສອນທັງໝົດມີ 13,989 ຄົນ/ຍິງ 5,940 ຄົນ, ໃນນີ້ຄູພາກເອກະຊົນມີ 221 ຄົນ/ຍິງ 81 ຄົນ *(36.7%),* ທຽບໃສ່ປີຜ່ານມາຄູເພີ່ມຂຶ້ນ 631 ຄົນ; ຄູສອນໂຮງຮຽນສົງ 303 ຄົນ/ຍິງ 9 ຄົນ ແລະ ຄູສຶກສານິເທດມີ 144 ຄົນ/ຍິງ 29 ຄົນ ( 20.13%).

ສັງລວມແລ້ວ ຈຳນວນຄູສອນມັດທະຍົມໃນທົ່ວປະເທດເພີ່ມຂຶ້ນ 4.5%, ໃນນີ້ມີ 2 ແຂວງທີ່ອັດຕາເພີ່ມສູງຄື: ແຂວງ ສາລະວັນ( 28.9%), ເຂດພິເສດ (25.8%), ເພີ່ມ ແຕ່ 10-20% ມີ 4 ແຂວງຄື: ແຂວງບໍ່

ແກ້ວ(10.7%), ແຂວງຫົວພັນ (17.1%), ແຂວງເຊກອງ (16.8%) ແລະ ແຂວງອັດຕະປື (14.3%) , ອັດຕາເພີ່ມຕ່ຳສຸດ ແມ່ນ 0.4% ຢູ່ແຂວງບໍລິຄຳໄຊ.

ນັກຮຽນມັດທະຍົມຕອນຕົ້ນທັງໝົດມີ 239,554 ຄົນ/ຍິງ 103,458 ຄົນ ( 43.1%), ເພີ່ມຂຶ້ນ 10,531 ຄົນ ເທົ່າກັບ 4.3%, ນັກຮຽນມັດທະຍົມສົງຕອນຕົ້ນມີ 2,119 ອົງ ເພີ່ມຂຶ້ນ 346 ອົງ, ນັກຮຽນພາກເອກະຊົນມີ 3,728 ຄົນ/ຍິງ 1,719 ຄົນ (46.1%).

ນັກຮຽນມັດທະຍົມຕອນປາຍທັງໝົດມີ 134,866 ຄົນ/ຍິງ 55,029 ຄົນ (40.81%) ເພີ່ມຂຶ້ນ 15,580 ຄົນ ( 11.5%). ນັກຮຽນມັດທະຍົມສົງ ຕອນປາຍມີ 2,082 ອົງ ເພີ່ມຂຶ້ນ 202 ອົງ (10.7%). ນັກຮຽນຊົນເຜົ່າທີ່ໄດ້ຮັບເບັ້ຍລ້ຽງຈາກລັດຖະບານມີທັງໝົດ 7,995 ຄົນ/ຍິງ 2,295 ຄົນ (28.7%) ນັກຮຽນກິນນອນຊົນເຜົ່າ ທີ່ໄດ້ຮັບ ເບ້ຍລ້ຽງກວມ 2.13% ຂອງ ນັກຮຽນມັດທະຍົມທົ່ວປະເທດ; ນັກຮຽນພາກເອກະຊົນມີ 502 ຄົນ/ຍິງ 246ຄົນ(49%).

ສັງລວມແລ້ວ ຈຳນວນນັກຮຽນ ມັດທະຍົມຕອນຕົ້ນເພີ່ມຂຶ້ນ 4.3% ໃນທົ່ວປະເທດ, ອັດຕາເພີ່ມສູງແມ່ນ 28.9% ຢູ່ແຂວງສາລະວັນ, ແຂວງເຊກອງ 16.3%, ອັດຕາເພີ່ມ 10% ລົງມາ ມີ 15 ແຂວງ, ສ່ວນນະຄອນຫຼວງ ວຽງຈັນຈຳນວນນັກຮຽນແມ່ນຫຼຸດລົງ (1.1% ).

ຈຳນວນນັກຮຽນມັດທະຍົມຕອນປາຍເພີ່ມຂຶ້ນ 11.5%, ແລະມີການແຕກໂຕນກັນລະຫວ່າງແຂວງ, ອັດຕາເພີ່ມສູງສຸດ 68.7% ຢູ່ ແຂວງສາລະວັນ, 44.1% ຢູ່ແຂວງ ເຊກອງ, ເພີ່ມແຕ່ 10-30% ມີ 14 ແຂວງ ແລະ ອັດຕາເພີ່ມ ຕ່ຳກວ່າ 5% ມີ 2 ແຂວງ: ນະຄອນຫຼວງວຽງຈັນ (4.0%) ແລະ ຊຽງຂວາງ (2.3% ).

ສະພາບການສຶກສາຊັ້ນ ມັດທະຍົມທົ່ວປະເທດໃນສົກຮຽນນີ້ ອີງຕາມຕົວເລກສະຕິຖິ ເຫັນວ່າ:

1. ອັດຕາສ່ວນນັກຮຽນ/ຫ້ອງໃນຊັ້ນມັດທະຍົມຕອນຕົ້ນແມ່ນ 47:1; ມີ 3 ແຂວງ ທີ່ອັດຕາສ່ວນສູງເຖິງ 50:1 ຄື: ນະຄອນຫຼວງ ວຽງຈັນ ( 54:1), ແຂວງ ອຸດົມໄຊ (52:1), ແຂວງ ຫຼວງພະບາງ (51:1), ບໍລິຄຳໄຊ (54:1) ແລະ ສາລະວັນ (53:1), ແລະ ອັດຕາສ່ວນຕ່ຳສຸດແມ່ນ 40 ຢູ່ແຂວງສະຫວັນນະເຂດ.
2. ສ່ວນ ອັດຕາສ່ວນນັກຮຽນຕໍ່ຫ້ອງໃນຊັ້ນມັດທະຍົມຕອນປາຍ ແມ່ນ 55:1; ອັດຕາສ່ວນສູງເຖິງ 60:1 ມີ 2 ແຂວງຄື: ແຂວງຄຳມ່ວນ 64:1, ແຂວງ ບໍລິຄຳໄຊ 61:1, ອັດຕາສ່ວນແຕ່ 50-60 ມີ 14 ແຂວງ ແລະ ຫຼຸດ 50 ມີ 2 ແຂວງຄື: ແຂວງສະຫວັນນະເຂດ(47:1) ແລະ ແຂວງ ເຊກອງ (43:1).

ຕີລາຄາລວມແລ້ວ ໃນຊັ້ນມັດທະຍົມສຶກສາ ການບັນຈຸນັກຮຽນຍັງແອອັດ, ການຂະຫຍາຍຫ້ອງຮຽນບໍ່ທັນພຽງພໍກັບການຂະຫຍາຍຕົວຂອງນັກຮຽນ, ເຖິງວ່າມີການປຸກສ້າງມີໂຮງຮຽນຂຶ້ນຫຼາຍ ກໍຕາມ ແຕ່ວ່າການປຸກສ້າງດັ່ງກ່າວສ່ວນໃຫຍ່ແມ່ນໄປທົດແທນໂຮງຮຽນເກົ່າທີ່ມີລັກສະນະຊົ່ວຄາວ.

3. ສຳລັບອັດຕາສ່ວນນັກຮຽນຕໍ່ຄູໄດ້ເພີ່ມຂຶ້ນຈາກ 26:1 ສົກຮຽນຜ່ານມາ ເປັນ 27:1 ໃນສົກຮຽນ 2003-04. ສະແດງໃຫ້ເຫັນວ່າການເພີ່ມຂຶ້ນຂອງນັກຮຽນ ບໍ່ສົມດູນກັບການເພີ່ມຂຶ້ນຂອງຄູ.
4. ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນໄດ້ເພີ່ມຂຶ້ນຈາກ 51.9% ມາເປັນ 54.3%*(ຍິງ 47.5%)* (ຄາດໝາຍ53%); ມັດທະຍົມຕອນປາຍເພີ່ມຂຶ້ນຈາກ 30% ມາເປັນ 32.8%*(ຍິງ 27.2%)* (ຄາດໝາຍ 32%) ;
5. ອັດຕາເລື່ອນຊັ້ນ-ຈົບຊັ້ນມັດທະຍົມຕອນຕົ້ນໄດ້ຫຼຸດລົງຈາກ 88.3% ສົກຮຽນ 2002-2003 ເປັນ 87.8% (ຍິງ 90%) ໃນສົກຮຽນນີ້, ຊັ້ນມັດທະຍົມຕອນປາຍເພີ່ມຂຶ້ນ ຈາກ 91% ສົກຮຽນ 2002-2003 ເປັນ 91.9%(ຍິງ 94.9) ໃນສົກຮຽນນີ້.
6. ອັດຕາການຄ້າງຫ້ອງຊັ້ນມັດທະຍົມຕົ້ນໄດ້ເພີ່ມຂຶ້ນຈາກ 2.2% ສົກຮຽນ 2002-2003 ເປັນ 3.2% (ຍິງ 1.7%) ແລະ ຊັ້ນມັດທະຍົມຕອນປາຍເພີ່ມຂຶ້ນ ຈາກ 1.3% ສົກຮຽນ 2002-2003 ເປັນ 1.7% (ຍິງ 0.8%) ໃນສົກຮຽນນີ້.
7. ອັດຕາການປະລະ ຊັ້ນມັດທະຍົມຕອນຕົ້ນໄດ້ເພີ່ມຂຶ້ນ ຈາກ 9% ສົກຮຽນ 2002-2003 ເປັນ 9.1% (ຍິງ 8.3%) ແລະ ຊັ້ນມັດທະຍົມຕອນປາຍຫລຸດລົງ ຈາກ 6.5% ສົກຮຽນ 2002-2003 ເປັນ 6.4%(ຍິງ 4.3%) ໃນສົກຮຽນນີ້.

*ຜົນການສອບເສັງເລື່ອນຊັ້ນ ເລື່ອນຂັ້ນຂອງນັກຮຽນຊັ້ນມັດທະຍົມສຶກສາ ຕອນຕົ້ນມີດັ່ງນີ້:*

| ຊັ້ນ | ນັກຮຽນເຂົ້າເສັງ | | ນັກຮຽນເສັງໄດ້ | | % ນັກຮຽນເສັງໄດ້ | |
|---|---|---|---|---|---|---|
| | ລວມ | ຍິງ | ລວມ | ຍິງ | ລວມ | ຍິງ |
| ມ.1 | 84,981 | 37,671 | 78,973 | 35,808 | 93 | 95 |
| ມ.2 | 74,013 | 32,366 | 70,134 | 31,507 | 95 | 97 |
| ມ.3 | 67,185 | 28,946 | 61,097 | 26,785 | 91 | 93 |
| ລວມ | 226,179 | 98,983 | 210,204 | 94,100 | 93 | 95 |

| ຊັ້ນ | ນັກຮຽນເຂົ້າເສັງ | | ນັກຮຽນເສັງໄດ້ | | % ນັກຮຽນເສັງໄດ້ | |
|---|---|---|---|---|---|---|
| ມ.4 | 49,379 | 20,521 | 46,959 | 20,005 | 95 | 97 |
| ມ.5 | 41,468 | 17,394 | 39,849 | 17,014 | 96 | 98 |
| ມ.6 | 34,565 | 14,383 | 33,194 | 13,949 | 96 | 97 |
| ລວມ | 125,412 | 52,298 | 120,002 | 50,965 | 96 | 97 |

ຄຽງຄູ່ກັບຜົນງານທີ່ຍາດມາໄດ້ຍັງມີບາງບັນຫາອ່ອນ ແລະ ຄ້າງຄາດ້ານການເຂົ້າຮຽນ ຄື :

- ນັກຮຽນລ້ຽງເດັກ-ອະນຸບານຂະຫຍາຍຕົວບໍ່ສະໝ່ຳສະເໝີ, ການເພີ່ມຂຶ້ນຂອງຈຳນວນນັກຮຽນຊັກຊ້າ, ມີການຂະຫຍາຍຕົວສະເພາະແຕ່ເຂດຕົວເມືອງ, ຍັງມີບາງແຂວງອັດຕາເຂົ້າຮຽນຫຼຸດລົງ; ແຕ່ນັກຮຽນພາກເອກະຊົນເພີ່ມຂຶ້ນ 15.8% ; ການທົດລອງຂະຫຍາຍຫ້ອງຮຽນອະນຸບານໃຫຍ່ຕິດກັບໂຮງຮຽນປະຖົມເປັນພຽງໜໍ່ແໜງ ແລະ ມີຂອບເຂດຈຳກັດ.

- ການເພີ່ມຂຶ້ນຂອງຫ້ອງຮຽນອະນຸບານຍັງຈຳກັດ ຍ້ອນການຕອບສະໜອງອາຄານຮຽນ, ການປະກອບຄູສອນ, ອຸປະກອນການສອນ-ການຮຽນບໍ່ທັນໄດ້ຕາມຄວາມຈຳເປັນ, ອາຄານໂຮງຮຽນທີ່ມີຢູ່ກໍ່ຕົກຢູ່ໃນສະພາບຊຸດໂຊມ, ບໍ່ໄດ້ມາດຖານ ແລະ ບໍ່ຮັບປະກັນຄວາມປອດໄພ, ຂາດມາດຖານຄວາມສະອາດ ( ບໍ່ມີວິດຖ່າຍ, ຂາດນ້ຳໃຊ້) ການຂະຫຍາຍຂອງພາກເອກະຊົນສ່ວນຫຼາຍແມ່ນຢູ່ແຕ່ຕົວເມືອງໃຫຍ່ ແລະ ຄ່າຮຽນຊໍ້າ ພັດສູງ ພໍ່ແມ່ຈະຕ້ອງ ໄດ້ຈ່າຍຄ່າອາຫານ ແລະ ກິດຈະກຳອື່ນໆ ເພີ່ມອີກ.

- ນັກຮຽນປະຖົມເກືອບວ່າບໍ່ເພີ່ມຍັງມີບາງແຂວງຫຼຸດລົງຊໍ້າ, ອັດຕາເຂົ້າຮຽນໃໝ່ສຸດທິຂັ້ນ (ປ1) ເພີ່ມຂຶ້ນພຽງ 0.4% ເທົ່ານັ້ນ.

- ນັກຮຽນຊັ້ນມັດທະຍົມຕົ້ນເພີ່ມຂຶ້ນ 4.3% ແລະ ມັດທະຍົມຕອນປາຍເພີ່ມຂຶ້ນ 11.5% ນັບວ່າ ຂະຫຍາຍຕົວແຮງ ແລະ ເປັນຜົນກະທົບເຖິງຄຸນນະພາບຍ້ອນ : ຂາດຫ້ອງຮຽນ, ໂຮງຮຽນສ່ວນຫຼາຍ ເປັນໂຮງຮຽນເຄິ່ງຖາວອນ, ຊົ່ວຄາວ ແລະ ຊຸດໂຊມ, ການລົງທຶນປຸກສ້າງ ສ່ວນໃຫຍ່ແມ່ນ ທົດແທນອາຄານ ເກົ່າທີ່ຊຸດໂຊມ; ໂຮງຮຽນໃນເຂດຊົນນະບົດສ່ວນໃຫຍ່ຕັ້ງຢູ່ໄກບ້ານ, ເຮັດໃຫ້ນັກຮຽນຈຳນວນຫຼາຍລົມຄວນ ບໍ່ມີເງື່ອນໄຂສືບຕໍ່ຮຽນ. ສ່ວນຢູ່ໃນຕົວເມືອງໃຫຍ່ ຫຼາຍບ່ອນມີອາຄານຖາວອນ ແຕ່ກໍ່ຍັງບໍ່ພຽງພໍກັບຈຳນວນນັກຮຽນທີ່ມີການເພີ່ມຂຶ້ນໄວຫຼາຍ.

## *2. ວຽກງານສ້າງຄູ.*

ໃນສົກຮຽນ 2003-2004 ໂຮງຮຽນສ້າງຄູມີທັງໝົດ 11 ແຫ່ງ (ນັບທັງຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ) ມີວິທະຍາໄລຄູ 5 ແຫ່ງ, ໂຮງຮຽນສ້າງຄູປະຖົມ ແລະ ອະນຸບານ 3 ແຫ່ງ, ສ້າງຄູສິລະປະ 1 ແຫ່ງ, ແລະ ສ້າງຄູພະລະສຶກສາ 1 ແຫ່ງ;

ຈຳນວນຄູ-ອາຈານໃນສະຖາບັນສ້າງຄູທັງໝົດ 854 ຄົນ/ຍິງ431ຄົນ(50.47%) ໃນນີ້ຄູ-ອາຈານໃນຄະນະສຶກສາສາດມີ 185 ຄົນ/ຍິງ 133 ຄົນ(71.89%); ຄູສອນໃນລະບົບ (11+3) ທັງໝົດມີ 463 ຄົນ /ຍິງ 195 ຄົນ(42.12%), ລະບົບ (11+1) ທັງໝົດມີ 38 ຄົນ/ຍິງ 22 ຄົນ(57.8%) ແລະ ລະບົບ (8+3) ທັງໝົດມີ158 ຄົນ/ຍິງ 51 ຄົນ(32.28%);

ນັກຮຽນຄູທັງໝົດມີ 13,622 ຄົນ/ຍິງ 6,324 ຄົນ(46.42%), ໃນນີ້ ນັກຮຽນຄູມັດທະຍົມຕອນປາຍລະບົບ (11+5) ທັງໝົດມີ 2,042 ຄົນ/ຍິງ 877 ຄົນ(42.95%); ນັກຮຽນຄູມັດທະຍົມຕອນຕົ້ນລະບົບ (11+3) ມີ 8,528 ຄົນ/ຍິງ 3,732 ຄົນ(43.76%) (ໃນນີ້ ນັກຮຽນຄູພະລະສຶກສາມີ 258 ຄົນ/ຍິງ39 ຄົນ

(15.12%); ນັກຮຽນຄູລະບົບ (11+1) ມີທັງໝົດ 1,768 ຄົນ/ຍິງ 962 ຄົນ(54.41%), ໃນນີ້ ນັກຮຽນຄູລ້ຽງເດັກ - ອະນຸບານ ມີ 313 ຄົນ/ຍິງ 313 ຄົນ; ນັກຮຽນຄູ ລະບົບ (8+3) ມີ 1,284 ຄົນ/ຍິງ 753 ຄົນ(58.64%) (ນັກຮຽນສ້າງຄູຊົນເຜົ່າມີ 383 ຄົນ/ຍິງ 273 ຄົນ(71.28%), ນັກຮຽນຄູສິລະປະສຶກສາ ມີ 199 ຄົນ/ຍິງ 138 ຄົນ(69.35%); ພ້ອມກັນນີ້ ວິທະຍາໄລຄູ ແລະ ໂຮງຮຽນສ້າງຄູ 7 ແຫ່ງ ຍັງໄດ້ເປີດການສິດສອນພາສາອັງກິດ ລະບົບພິເສດພາກບ່າຍ ແລະ ພາກຄ່ຳ ເພື່ອຮັບໃຊ້ສັງຄົມທົ່ວໄປ, ປັດຈຸບັນມີນັກຮຽນທັງໝົດ 2,907 ຄົນ/ຍິງ 1,229 ຄົນ(42.28%), ໃນນີ້ນັກຮຽນປີສຸດທ້າຍມີທັງໝົດ 705 ຄົນ/ຍິງ 274 ຄົນ(38.87%).

ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຄູໃນຊັ້ນຮຽນຕ່າງໆໃນທົ່ວປະເທດ ກະຊວງສຶກສາທິການ ໄດ້ມີການສ້າງຄູລະບົບຕ່າງໆ ເປັນຕົ້ນການກໍ່ສ້າງຄູປະຖົມໃນ 3 ລະບົບຄືລະບົບສ້າງຄູ (11+1) ຮັບໃຊ້ໃຫ້ແກ່ເຂດຕົວເມືອງ ແລະ ທົ່ງພຽງ, ລະບົບ (8+3) ສຳລັບເຂດຫ່າງໄກສອກຫລີກ ແລະ ພິເສດຍັງໄດ້ສ້າງລະບົບຄູປະຖົມເດັກຍິງຊົນເຜົ່າ (8+3) ຫລື (5+4) ເພື່ອສະໜອງຄູໃຫ້ແກ່ເຂດຊົນເຜົ່າທີ່ດ້ອຍໂອກາດ. ໃນສົກຮຽນນີ້ ນັກຮຽນຄູເຂົ້າໃໝ່ (ນັບທັງຄະນະສຶກສາສາດ ແລະ ພາສາອັງກິດພິເສດ) ມີ 6,724 ຄົນ/ຍິງ 3,270 ຄົນ(48.63%), ທຽບໃສ່ແຜນການ ປະຕິບັດໄດ້ລື່ນຄາດໝາຍ 27% ໃນນີ້ ເຂົ້າຮຽນໃນລະບົບ (11+1) ມີ 1,768 ຄົນ/ຍິງ 962 ຄົນ(54.41%), ທຽບໃສ່ແຜນຮັບ ໄດ້ລື່ນຄາດໝາຍ 37% (ເຂົ້າຮຽນຄູລ້ຽງເດັກ - ອະນຸບານລະບົບ (11+1) ມີ 313 ຄົນ/ຍິງ 313 ຄົນ ລື່ນແຜນຮັບ 12%, ເຂົ້າຮຽນຄູປະຖົມລະບົບ (8+3) ມີ 502 ຄົນ/ຍິງ 282 ຄົນ(56.1%) ລື່ນແຜນຮັບ 37%. ໃນນີ້ ເຂົ້າຮຽນສ້າງຄູປະຖົມເດັກຍິງຊົນເຜົ່າມີ 149 ຄົນ/ຍິງ 99 ຄົນ(66.4%), ທຽບໃສ່ແຜນຮັບ ປະຕິບັດໄດ້ 100%, ເຂົ້າຮຽນຄູສິລະປະສຶກສາ ມີ 65 ຄົນ/ຍິງ 47 ຄົນ(72.3%), ທຽບໃສ່ແຜນຮັບ ປະຕິບັດໄດ້ 93%; ເຂົ້າຮຽນຄູມັດທະຍົມຕອນຕົ້ນ ລະບົບ (11+3) ມີ 1,863 ຄົນ/ຍິງ 729 ຄົນ(39.13%), ທຽບໃສ່ແຜນຮັບ ປະຕິບັດໄດ້ ລື່ນຄາດໝາຍ 73%, ເຂົ້າຮຽນຄູພະລະສຶກສາມີ 77 ຄົນ/ຍິງ 11 ຄົນ(14.29%), ນອກນີ້ ວິທະຍາໄລຄູ 5 ແຫ່ງ ແລະ ໂຮງຮຽນສ້າງຄູ 2 ແຫ່ງ ຍັງໄດ້ຮັບນັກສຶກສາເຂົ້າໃຫມ່ຮຽນພາສາອັງກິດລະບົບພິເສດພາກຄ່ຳ ມີ 510 ຄົນ/ຍິງ 239 ຄົນ(46.86%).

ໃນສົກຮຽນນີ້ ຄູທີ່ສ້າງອອກໃໝ່ທັງໝົດ (ນັບທັງຄະນະສຶກສາສາດ) ມີ 3,364 ຄົນ/ຍິງ 1,742 ຄົນ( 51.7%), ໃນນີ້ ນັກຮຽນຈົບສ້າງຄູອະນຸບານ (11+1) ຈຳນວນ 313 ຄົນ/ຍິງ 313 ຄົນ(100%), ຈົບສ້າງຄູປະຖົມລະບົບ (11+1) ມີ 1,430 ຄົນ/ຍິງ 639 ຄົນ(44.68%), ຈົບສ້າງຄູປະຖົມລະບົບ 8+3ມີ 184 ຄົນ/ຍິງ 127 ຄົນ(69.02%); ຈົບສ້າງຄູເດັກຍິງຊົນເຜົ່າ ລະບົບ 8+3 ມີ 70 ຄົນ/ຍິງ 43 ຄົນ(61.4%). ຈົບສ້າງຄູມັດທະຍົມຕົ້ນ ລະບົບ (11+3) ມີ 1,102 ຄົນ/ຍິງ 517 ຄົນ(46.9%); ຈົບສ້າງຄູມັດທະຍົມປາຍ ລະບົບ (11+5) ມີ 138 ຄົນ/ຍິງ 52 ຄົນ(37.6%); ຈົບສ້າງຄູພະລະສຶກສາ ລະບົບ (11+3) ມີ 73 ຄົນ/ຍິງ 11 ຄົນ(15.16%) ແລະ ຈົບສ້າງຄູສິລະປະສຶກສາລະບົບ 8+3 ມີ 54 ຄົນ/ຍິງ 40 ຄົນ(74.07%).

*3. ວຽກງານການສຶກສານອກລະບົບໂຮງຮຽນ.*

ການປະຕິບັດແຜນການລຶບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນໃນກຸ່ມເປົ້າໝາຍ (15-40)ປີ ໄດ້ເຮັດ ໃຫ້ອັດຕາການລຶບລ້າງຄວາມບໍ່ຮູ້ໜັງສືໃນສົກຮຽນ 2003-04 ແມ່ນ 77,5% ; ຈຳນວນຜູ້ລຶບລ້າງຄວາມບໍ່ຮູ້ໜັງສືໄດ້ທັງໝົດມີ 39,344 ຄົນ/ຍິງ 21,909 ຄົນ (54.7%) ທຽບໃສ່ແຜນການປີ ປະຕິບັດໄດ້ 98,36% (ແຜນການ 40.000 ຄົນ) ; ສຳລັບກຸ່ມເປົ້າໝາຍ 15 ຂຶ້ນໄປ, ອັດຕາການລຶບລ້າງຄວາມບໍ່ຮູ້ໜັງສືແມ່ນ 75.4% ; ຈຳນວນຜູ້ລຶບລ້າງຄວາມບໍ່ຮູ້ໜັງໄດ້ 40,504 ຄົນ/ຍິງ 22,062 ຄົນ (54.33%) ທຽບໃສ່ແຜນ ການປະຕິບັດໄດ້ 81% (ແຜນການປີ 50.000 ຄົນ).

- ບຳລຸງ ຈົບຊັ້ນປະຖົມໄດ້ 23,193 ຄົນ/ຍິງ 12,214 ຄົນ(51.65%) ທຽບໃສ່ແຜນການ ປະຕິບັດໄດ້ 77,31% (ແຜນການປີ 30.000 ຄົນ).
- ບຳລຸງ ຈົບມັດທະຍົມຕອນຕົ້ນ(ມ3)ໄດ້ 1,028 ຄົນ/ຍິງ 312 ຄົນ(30.35%) ທຽບໃສ່ແຜນການປະຕິບັດໄດ້ 102.8% (ແຜນການ 1,000 ຄົນ) ; ບຳລຸງຈົບຊັ້ນມັດທະຍົມປາຍ(ມ6)ໄດ້ 2,601 ຄົນ/ຍິງ 605 ຄົນ(23.5%) ທຽບໃສ່ແຜນການປະຕິບັດ ໄດ້ 130% (ແຜນການ 2,000 ຄົນ).

ປະຈຸບັນໃນທົ່ວປະເທດມີສູນການສຶກສາຊຸມຊົນ 300 ແຫ່ງ ໃນນັ້ນສູນທີ່ເປັນອາຄານຖາວອນມີ 29 ສູນ ; ສູນທີ່ເປັນອາຄານເຄິ່ງຖາວອນມີ 224 ສູນ ; ສູນທີ່ສ້າງຕັ້ງຂຶ້ນຊົ່ວຄາວ ມີ 46 ສູນ ແລະ ສູນທີ່ຖືກເປເພມີ 1 ສູນ (ລາຍລະອຽດຂອງແຕ່ລະສູນມີຕາຕະລາງຂັດຕິດ)

ນອກຈາກນັ້ນ ຍັງມີໂຮງຮຽນບຳລຸງວັດທະນະທຳຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍທີ່ຂຶ້ນກັບພະແນກສຶກສາແຂວງ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບເປັນຜູ້ຄຸ້ມຄອງລວມທັງໝົດມີ 13 ແຫ່ງ, ພ້ອມນັ້ນ ຍັງມີສູນພັດທະນາ 1 ແຫ່ງ; ສູນການສຶກສານອກລະບົບໂຮງຮຽນປະຈຳພາກ 2 ແຫ່ງ ແລະ ສູນຝຶກອົບຮົມວິຊາຊີບ 9 ແຫ່ງທີ່ໄດ້ປະຕິບັດວຽກງານນີ້ .

ວຽກງານລຶບລ້າງຄວາມບໍ່ຮູ້ໜັງສືໄດ້ຮັບເງິນອຸດໜູນໃຫ້ຄູອາສາສະໝັກ 1 ຕື້ກີບ (ໂດຍຄິດໄລ່ເປັນເດືອນ ຜູ້ໜຶ່ງ 50,000 ກີບ (ໃນ 4 ເດືອນຕົ້ນປີໄດ້ໂອນໃຫ້ທ້ອງຖິ່ນໄປຈັດຕັ້ງປະຕິບັດ 100% ແລ້ວ). ສຳລັບຄູສອນ ໄດ້ນຳໃຊ້ຄູສອນໃນໂຮງຮຽນສາມັນ, ຄູຢູ່ໂຮງຮຽນບຳລຸງຂອງແຂວງ, ຄູຈາກກຳລັງປ້ອງກັນຊາດ ແລະ ພະນັກງານທ້ອງຖິ່ນ ໂດຍມີຄ່າຕອບແທນຕາມສະພາບການຕົວຈິງຂອງແຕ່ລະເມືອງ.

ສັງລວມແລ້ວເຫັນວ່າພະນັກງານ, ອຳນາດການປົກຄອງ ແລະ ປະຊາຊົນ, ອົງການຈັດຕັ້ງພາກລັດ, ເອກະຊົນ, ອົງການຈັດຕັ້ງສາກົນ, ອົງການບໍ່ຂຶ້ນກັບລັດຖະບານໄດ້ໃຫ້ການຮ່ວມມືປະກອບສ່ວນທາງດ້ານວັດຖຸ, ອຸປະກອນຮັບໃຊ້ ແລະ ອຳນວຍຄວາມສະດວກໃນການປະຕິບັດວຽກງານດັ່ງກ່າວ.

## *4. ວຽກງານອາຊີວະສຶກສາ ແລະ ການສຶກສາຊັ້ນສູງ*

### *4.1 ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ*

ໃນສົກຮຽນ 2003 - 2004 ນີ້, ທົ່ວປະເທດ ມີໂຮງຮຽນເຕັກນິກ-ວິຊາຊີບ 34 ແຫ່ງ, ໃນນີ້ມີໂຮງຮຽນ ພາກເອກະຊົນ ມີ 07 ແຫ່ງ ແລະ ມີ14 ແຫ່ງ ຂຶ້ນກັບກະຊວງອື່ນໆ. ຖ້າທຽບໃສ່ສົກຮຽນຜ່ານມາ ໄດ້ເພີ່ມຂຶ້ນ 4 ແຫ່ງ ( ພາກເອກະຊົນ ເພີ່ມຂຶ້ນ 2 ແຫ່ງ ) . ໂຮງຮຽນແຫ່ງຕ່າງໆ ໄດ້ດຳເນີນການຮຽນ-ການສອນ ຕາມ 3 ລະດັບ ຄື: ປະກາດສະນີຍະບັດຊ່າງເຕັກນິກ ຊັ້ນກາງລະບົບ (11+3) ແລະ (11+2) ປະກາດສະນີຍະບັດວິຊາຊີບ ຊຳນານງານ ຊັ້ນຕົ້ນລະບົບ (8+3) ແລະ ຫຼັກສູດຊັ້ນສູງ (ເປີດໃໝ່) ໃນຂະແໜງວິຊາ ສຳຫລວດວັດແທກທີ່ດິນຢູ່ໂຮງຮຽນເຕັກນິກສັບພະວິຊາ ແລະ ຫລັກສູດສ້າງຄູອາຊີວະສຶກສາຊັ້ນສູງຢູ່ສູນພັດ ທະນາອາຊີວະສຶກສາ.

ປັດຈຸບັນ ມີນັກຮຽນຢູ່ໂຮງຮຽນເຕັກນິກ-ວິຊາຊີບ ໃນທົ່ວປະເທດ ທັງໝົດ 24,632 ຄົນ/ຍິງ 9,516 ຄົນ (38,6%) ໃນນັ້ນ ມີນັກຮຽນພາກເອກະຊົນ 1,728 ຄົນ/ຍິງ 979 ຄົນ (56,65%) ແລະ ນັກຮຽນສາຍພິເສດ 5,610 ຄົນ/ຍິງ 2,739 ຄົນ(48,8%), ( ລາຍລະອຽດຢູ່ໃນຕາຕະລາງຄັດຕິດ ).

ນັກຮຽນຮັບເຂົ້າໃຫມ່ປີທີ1 ໃນສົກຮຽນ 2003-04 ທັງໝົດມີ 7,071 ຄົນ/ຍິງ 2,317 ຄົນ(32,8%) , ຖ້າທຽບກັບ ນັກຮຽນ ທີ່ຮຽນຈົບມັດທະຍົມຕອນປາຍ ໃນສົກຮຽນ 2002-03 ເທົ່າກັບ 24%. ໃນນັ້ນ ມີນັກຮຽນ (ປີ 1) ພາກເອກະຊົນ : 930 ຄົນ/ຍິງ 529 ຄົນ(56,9%).

ຄູ-ອາຈານ, ພະນັກງານໂຮງຮຽນເຕັກນິກ-ວິຊາຊີບ ທັງພາກລັດ ແລະ ເອກະຊົນ ມີ: 2,512 ຄົນ/ຍິງ 964 ຄົນ(38,4%), ຄູສອນຕົວຈິງ ມີ 1,021 ຄົນ/ຍິງ 363 ຄົນ (35,6%) ແລະ ພະນັກງານບໍລິຫານມີ 237 ຄົນ/ຍິງ 120 ຄົນ(50,6%).

ໄດ້ສ້າງຕັ້ງໂຮງຮຽນເຕັກນິກ-ວິຊາຊີບເພີ່ມຂຶ້ນ 2 ແຫ່ງ ຄື: ຢູ່ແຂວງ ໄຊຍະບູລີ ແລະ ແຂວງ ບໍ່ແກ້ວ ແລະ ໄດ້ສຳເລັດການກະກຽມຂັ້ນພື້ນຖານໃນການສ້າງຕັ້ງໂຮງຮຽນເຕັກນິກ-ວິຊາຊີບຢູ່ແຂວງຊຽງຂວາງ, ຫົວ ພັນ ແລະ ນະຄອນຫຼວງ ວຽງຈັນ ຊຶ່ງຈະເລີ່ມເປີດ ການຮຽນ-ການສອນ ໃນສົກຮຽນ 2004-05 ນີ້.

ໄດ້ລົງສຳຫຼວດເກັບກຳຂໍ້ມູນເບື້ອງຕົ້ນ ເພື່ອກະກຽມການສ້າງຕັ້ງ ໂຮງຮຽນເຕັກນິກ-ວິຊາຊີບ ຢູ່ແຂວງ ອຸດົມໄຊ, ສາລະວັນ, ເຊກອງ ແລະ ແຂວງ ອັດຕະປື.

### *4.2 ວຽກງານການສຶກສາຊັ້ນສູງແລະມະຫາວິທະຍາໄລ*

ໃນສົກຮຽນ 2003-2004 ນີ້, ທົ່ວປະເທດ ມີ ມະຫາວິທະຍາໄລ ແລະ ວິທະຍາໄລ 22 ແຫ່ງ, ໃນນີ້ເປັນວິທະຍາໄລ ພາກເອກະຊົນ ມີ 19 ແຫ່ງ.

ນັກສຶກສາທົ່ວປະເທດ ທີ່ກຳລັງສຶກສາໃນລະດັບມະຫາວິທະຍາໄລ ແລະ ວິທະຍາໄລທັງພາກລັດ ແລະ ເອກະຊົນທັງໝົດ ມີ 29,041 ຄົນ/ຍິງ 10,653 ຄົນ(36,7%), ໃນນັ້ນ ມີນັກສຶກສາທີ່ຮຽນຢູ່ວິທະຍາ

ໄລພາກເອກະຊົນມີ 5,666 ຄົນ/ຍິງ 2,688 ຄົນ(47,4%), ນັກສຶກສາ ປະລິນຍາໂທ ມີ 121 ຄົນ/ຍິງ 27 ຄົນ(22,3%), ປະລິນຍາຕີ 17,551 ຄົນ/ຍິງ 7,064 ຄົນ(40,2%) ແລະ ຊັ້ນສູງ 11,490 ຄົນ/ຍິງ 3,589 ຄົນ(31,2%).

ນອກຈາກລະບົບປົກກະຕິແລ້ວ ຍັງມີລະບົບຊັ້ນສູງ ແລະ ປະລິນຍາຕີ ພິເສດ ( ຈ້າງຮຽນ ພາກຄ່ຳ) ຢູ່ໃນຄະນະຕ່າງໆຂອງມະຫາວິທະຍາໄລແຫ່ງຊາດ ຊຶ່ງມີນັກສຶກສາທັງຫມົດ 11,360 ຄົນ/ຍິງ 6,633 ຄົນ (58,4%); ຕົວເລກດັ່ງກ່າວນີ້ ແມ່ນບໍ່ໄດ້ນັບເຂົ້າຢູ່ໃນຕົວເລກລວມຂອງພາກປົກກະຕິ ເນື່ອງຈາກວ່າສ່ວນໜຶ່ງຂອງນັກສຶກສາໃນລະບົບພິເສດ ມາຈາກພາກປົກກະຕິ.

1. ມະຫາວິທະຍາໄລແຫ່ງຊາດ ມີນັກສຶກສາທັງຫມົດ 19,675 ຄົນ/ຍິງ 6,576 ຄົນ(33,4%) ຊຶ່ງໃນນີ້, ນັກສຶກສາລະບົບພິເສດມີ 10,903 ຄົນ/ຍິງ 6,622 ຄົນ(60,7%).
2. ມະຫາວິທະຍາໄລຈຳປາສັກ ນັກສຶກສາທັງໝົດມີ 1,147 ຄົນ/ຍິງ445 ຄົນ(38,7%) ລະບົບພິເສດ ມີ 290 ຄົນ.
3. ມະຫາວິທະຍາໄລສຸພານຸວົງມີນັກສຶກສາທັງຫມົດ 548 ຄົນ/ຍິງ 205 ຄົນ(37,4%).
4. ໂຮງຮຽນເຕັກນິກສັບພະວິຊາ ( ຫຼັກສູດວັດແທກທີ່ດິນຊັ້ນສູງ ) ມີນັກສຶກສາທັງຫມົດ 120 ຄົນ/ຍິງ 44 ຄົນ(36,7%); ລະບົບພິເສດ 42 ຄົນ/ຍິງ 11 ຄົນ(26,2%).
5. ສູນພັດທະນາອາຊີວະສຶກສາ ( ຫຼັກສູດສ້າງຄູອາຊີວະສຶກສາຊັ້ນສູງ ) ມີນັກສຶກສາ 47 ຄົນ/ຍິງ 13 ຄົນ(27,7%).

ໄດ້ສຶກສາຄົ້ນຄວ້າ ຄວາມເປັນໄປໄດ້ ໃນການສ້າງຕັ້ງ ການສຶກສາທາງໄກ ແລະ ການສຶກສາຕະຫຼອດຊີວິດຢູ່ບາງຄະນະວິຊາທີ່ມີເງື່ອນໄຂ ຂອງມະຫາວິທະຍາໄລແຫ່ງຊາດ.

ນັກສຶກສາປີທີ I ລະດັບປະລິນຍາຕີ ທັງໝົດມີ 9,213 ຄົນ/ຍິງ 3,380 ຄົນ(36,7%), ຖ້າທຽບໃສ່ນັກຮຽນຈົບມັດທະຍົມຕອນປາຍ ( ມ.6) ໃນປີ 2002-2003 ເທົ່າກັບ 31% ( ຍິງ 11% ).

ອັດຕາສ່ວນຈຳນວນນັກສຶກສາຕໍ່ປະຊາກອນ ໄດ້ເພີ່ມຂຶ້ນ ເປັນ 647/100,000 ຄົນໃນປີ 2004. (ຄາດໝາຍໃນປີ 2005 ແມ່ນ 410/100,000 ຄົນ) ປະຕິບັດໄດ້ລື່ນຄາດມາຍ 237 ຄົນ/100,000 ຄົນ

ຄູ-ອາຈານ ມີ 2,013 ຄົນ/ຍິງ 631 ຄົນ, ພະນັກງານບໍລິຫານ 239 ຄົນ/ຍິງ 142 ຄົນ(49,4%) ເອກກະຊົນ ມີ 428 ຄົນ/ຍິງ 101 ຄົນ(23.59%).

ນອກຈາກການກໍ່ສ້າງຢູ່ພາຍໃນປະເທດແລ້ວຍັງໄດ້ສົ່ງພະນັກງານ ແລະ ນັກສຶກສາໄປສຶກສາຕໍ່ຢູ່ຕ່າງປະເທດມີ 923 ຄົນ/ຍິງ 263 ຄົນ(28,5%) ລື່ນປີກາຍ 219 ຄົນ/ຍິງ 68 ຄົນ(31,1%), ລະດັບປະລິນຍາເອກ 26 ຄົນ/ຍິງ 1 ຄົນ; ປະລິນຍາໂທ 266 ຄົນ/ຍິງ 63 ຄົນ(23,7%), ປະລິນຍາຕີ 434 ຄົນ/ຍິງ 132 ຄົນ(30,4%), ຊັ້ນສູງ 45 ຄົນ/ຍິງ 12 ຄົນ(26,7%), ລະດັບເຕັກນິກ-ວິຊາຊີບ 31 ຄົນ/ຍິງ 8 ຄົນ(25,8%). ຝຶກງານ 23 ຄົນ/ຍິງ 9 ຄົນ(39,1%), ໃນນີ້ໄປຮຽນ ດ້ວຍທຶນສ່ວນຕົວໃນລະດັບຮຽນຕ່າງໆມີ 97 ຄົນ/ຍິງ 38 ຄົນ(39,2%) ຈຳນວນນັກສຶກສາທີ່ຈົບຈາກຕ່າງປະເທດ ມີ 88 ຄົນ/ຍິງ18 ຄົນ(20,5%) ແລະ ບໍ່ຈົບມາຈາກຕ່າງປະເທດ ມີ 17 ຄົນ/ຍິງ 4 ຄົນ (23,5%).

ໃນສົກຮຽນ 2003-04 ນີ້ໄດ້ຮັບທຶນການສຶກສາ ຈາກປະເທດຕ່າງໆ ແລະ ອົງການຈັດຕັ້ງສາກົນ ລວມທັງໝົດ 218 ທຶນ.

ຄຽງຄູ່ກັບຜົນສຳເລັດໃນວຽກງານສ້າງຄູ ການສຶກສານອກລະບົບໂຮງຮຽນ ແລະ ວຽກງານອາຊີວະສຶກສາ ແລະ ການສຶກສາຊັ້ນສູງນັ້ນ ຍັງມີບາງບັນຫາທີ່ຍັງຄ້າງຄາເຊັ່ນ :

ຜ່ານການວິໄຈ ເຫັນວ່າໃນສົກຮຽນຜ່ານມາ ແຂວງຕ່າງໆ ຍັງ ໄດ້ປະສົບກັບບັນຫາການຂາດເຂີນຄູເປັນຈຳນວນຫລວງຫລາຍ ຍ້ອນຄູເກົ່າອອກຫຼາຍ ຄູເຂົ້າໃໝ່ໜ້ອຍ ແຕ່ນັກຮຽນໄດ້ເພີ່ມຂຶ້ນຫຼາຍ. ໃນຕົວຈິງການສ້າງຄູອອກໃໝ່ໃນສົກຮຽນຜ່ານມາ ມີຈຳນວນ 3,364 ຄົນ ແຕ່ຕົວເລກໂກຕາທີ່ໄດ້ຮັບອານຸມັດທັງໝົດມີພຽງແຕ່ 1,550 ຄົນເທົ່ານັ້ນ. ສະຫລຸບໄດ້ວ່າການບັນຈຸຄູໃໝ່ຕາມຈຳນວນຄູທີ່ຜະລິດອອກແມ່ນຕ່ຳກ່ວາ 50%. ແຕ່ໃຫ້ເຂົ້າໃຈວ່າຄູທີ່ຖືກບັນຈຸເຂົ້າໃໝ່ນີ້ບໍ່ແມ່ນເປັນຄູສອນໝົດ ເພາະຍັງມີພາກສ່ວນເຂົ້າຮັບໃຊ້ຂົງເຂດບໍລິຫານອີກດ້ວຍ. ສ່ວນນັກສຶກສາຄູທີ່ບໍ່ຖືກສັບຊ້ອນເຂົ້າເປັນຄູໄດ້ອອກໄປຊອກ ວຽກງານໃໝ່, ຊຶ່ງເປັນສາຍເຫດໃຫ້ເກີດມີການຂາດຄູທີ່ມີຄຸນນະພາບ ແລະ ໃນທີ່ສຸດແຂວງຕ່າງໆຈຳເປັນຕ້ອງໄດ້ເຮັດສັນຍາຈ້າງກັບຄູທີ່ບໍ່ໄດ້ມາດຖານເຂົ້າໄປສອນທົດແທນ. ຄູທີ່ຈົບຈາກຄະນະສຶກສາສາດສ່ວນຫລາຍບໍ່ໄດ້ຖືກສັບຊ້ອນ
ໄປເປັນຄູ, ຄູມັດທະຍົມຕອນຕົ້ນຈຳນວນຫຼາຍໄດ້ຖືກສັບຊ້ອນເຂົ້າສອນມັດທະຍົມປາຍ ແລະ ໃນເວລາດຽວກັນຄູປະຖົມລະບົບ (11+1) ແລະ (8+3) ຈຳນວນຫລາຍສົມຄວນໄດ້ຖືກເລື່ອນຂຶ້ນສອນມັດທະຍົມຕອນຕົ້ນໃນແຕ່ລະປີ. ປັດຈຸບັນຄູບໍ່ໄດ້ມາດຖານໃນຊັ້ນປະຖົມມີເຖິງ 5,308 ຄົນ/ຍິງ 1,410 ຄົນ(26.56%), ຊຶ່ງກວມອັດຕາສ່ວນ19.21% ຂອງຄູສອນໃນຊັ້ນປະຖົມທັງໝົດ. ຄູມັດທະຍົມທີ່ບໍ່ໄດ້ມາດຖານກວມ 52.58% (ຄູມັດທະຍົມທັງໝົດມີ 13,979 ຄົນ).

ຜົນການວິໄຈນີ້ໄດ້ ຊີ້ໃຫ້ເຫັນວ່າ ຖ້າຢາກປັບປຸງຄຸນນະພາບການຮຽນ-ການສອນໃນຊັ້ນປະຖົມ ແລະ ມັດທະຍົມຕ້ອງຫຼຸດຜ່ອນຈຳນວນຄູສັນຍາຈ້າງລົງ ແລະ ສັບຊ້ອນຄູໃຫ້ຖືກຕາມຊັ້ນທີ່ໄດ້ຮຽນຜ່ານມາ. ອີກດ້ານໜຶ່ງ ຖ້າບໍ່ປັບປຸງລະບົບການສັບຊ້ອນຄູທີ່ຜະລິດອອກໃຫ້ໝົດ, ຈະເປັນການລົງທຶນໂດຍບໍ່ມີປະສິດທິ ຜົນ .

ແຜນການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາຊັ້ນປະຖົມ ແລະ ຊັ້ນມັດ ທະຍົມບໍ່ໄດ້ບັນລຸຕາມລະດັບຄາດຫມາຍ ແລະ ຄຸນນະພາບບໍ່ທັນສູງ. ການລົງທຶນຂອງ ລັດໃສ່ວຽກງານນີ້ຍັງຕ່ຳ; ເງິນອຸດໜູນຄູອາສາສະມັກໜ້ອຍຢູ່ແລ້ວ ແຕ່ການເບີກຈ່າຍຊ້ຳພັດແກ່ຍາວ, ບາງບ່ອນ 6-7 ເດືອນຈຶ່ງໄດ້. ການຄຸ້ມຄອງ ແລະ ການບໍລິຫານສູນການສຶກສາຊຸມຊົນບໍ່ທັນທົ່ວເຖິງ, ຮູບແບບການສ້າງສູນບໍ່ທັນໄດ້ມາດຕະຖານ, ການດຳເນີນກິດຈະກຳຕ່າງໆຍັງບໍ່ໄດ້ຕໍ່ເນື່ອງ ບາງສູນບໍ່ໄດ້ດຳເນີນການສອນໃຊ້ເປັນຫ້ອງປະຊຸມ ຫຼື ຫ້ອງການບ້ານເທົ່ານັ້ນ, ການຈັດຕັ້ງສອບເສັງຈົບຊັ້ນ ມ3 ແລະ ມ6 ຫຼາຍບ່ອນປະຕິບັດລະບຽບການ ສອບເສັງບໍ່ເຂັ້ມງວດ, ການເກັບກຳຂໍ້ມູນ ແລະ ສະຖິຕິຕ່າງໆ ບໍ່ທັນຊັດເຈນ ເປັນຕົ້ນແມ່ນຕົວເລກການລຶບ ລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຊັ້ນປະຖົມໃຫ້ປະຊາຊົນ.

ສ່ວນວຽກງານອາຊີວະ ແລະ ການສຶກສາຊັ້ນສູງ ຖ້າທຽບໃສ່ສາຍສາມັນ, ສາຍສ້າງຄູ ແລະ ນອກລະ ບົບໂຮງຮຽນແລ້ວເຫັນວ່າຂະຫຍາຍຕົວແຮງທາງດ້ານປະລິມານ ແຕ່ຄຸນນະພາບຂອງຄູ ແລະ ຄຸນນະພາບ ຂອງນັກຮຽນທີ່ຮຽນຈົບຍັງຕ່ຳ, ຍັງຂາດການວິໄຈຢ່າງລະອຽດໃນການສ້າງຕັ້ງໂຮງຮຽນອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ຊຶ່ງເຮັດໃຫ້ໂຮງຮຽນ ທີ່ເປີດໃໝ່ ເຊັ່ນ: ໂຮງຮຽນເຕັກນິກບວິຊາຊີບແຂວງບໍ່ແກ້ວ, ໄຊຍະ ບູລີ ແລະ ແຂວງບໍລິຄຳໄຊ ບໍ່ສາມາດຮັບເອົານັກຮຽນໃນສົກ 2004-05 ນີ້ໄດ້ອີກຍ້ອນບໍ່ມີທຶນ ບໍ່ມີຄູພຽງພໍ).

## *II. ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ*

ປັດໄຈຊຸກຍູ້ຄຸນນະພາບ ແລະ ຄວາມສອດຄ່ອງ ຂອງການສຶກສາມີດັ່ງນີ້ :

1. ການບຳລຸງຄູ :

ໄປຄຽງຄູ່ກັບການກໍ່ສ້າງຄູ, ໂຄງການບຳລຸງຄູບໍ່ໄດ້ມາດຖານ ຊຶ່ງໄດ້ຮັບການອຸປະຖຳຈາກອົງການ ອຸຍນີເຊັບ ແລະ ບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ໄດ້ສືບຕໍ່ການອົບຮົມຍົກລະດັບຄູບໍ່ໄດ້ມາດ ຖານຢູ່ໃນ 17 ແຂວງ ຊຶ່ງມີຄູເຂົ້າຮຽນທັງໝົດ 2,829 ຄົນ/ຍິງ 468 ຄົນ(16.54%). ໃນນີ້ເສັງຈົບໄດ້ທັງໝົດ 977 ຄົນ/ຍິງ 275 ຄົນ(28.14%). ພິເສດສົກຮຽນ 2003-2004 ນີ້ ມີສອງແຂວງສາມາດລົບລ້າງຄູ ບໍ່ໄດ້ມາດຖານທີ່ສັງກັດລັດໄດ້ 100% ຄື :ແຂວງຊຽງຂວາງ ແລະ ສາລະວັນ. ນອກຈາກການບຳລຸງຄູບໍ່ໄດ້ ມາດຖານແລ້ວຍັງໄດ້ບຳລຸງຄູປະຈຳການໂດຍເລັ່ງໃສ່ການບຳລຸງ 3 ວິຊາຫລັກຄື ຄະນິດສາດ, ພາສາລາວ ແລະ ໂລກອ້ອມຕົວການບຳລຸງການສອນຫ້ອງຄວບ ຊຶ່ງມີຄູເຂົ້າອົບຮົມທັງໝົດ 635 ຄົນ,ໄດ້ສ້າງໂຄງການ ທົດລອງກ່ຽວກັບການວິໄຈພາກປະຕິບັດ ແບບມີສ່ວນຮ່ວມໃຫ້ຄູຝຶກ ແລະ ຄູບຳລຸງຢູ່ແຂວງຫລວງພະບາງ. ໄດ້ຝຶກອົບຮົມຄູ-ອາຈານໃນສະຖາບັນສ້າງຄູກ່ຽວກັບວິຊາຄະນິດສາດ-ວິທະຍາສາດ. ນອກຈາກການບຳລຸງຄູ ທາງດ້ານວິຊາສະເພາະແລ້ວ ກະຊວງສຶກສາທິການຍັງໄດ້ຮ່ວມມືກັບກະຊວງສາທາລະນະສຸກ ປະຕິບັດໂຄງ ຝຶກອົບຮົມກ່ຽວກັບວຽກງານສຸຂະສຶກສາ ແລະ ປັບປຸງສະພາບແວດລ້ອມຂອງໂຮງຮຽນໃນຊັ້ນປະຖົມ ແລະ ໄດ້ ເລີ້ມ ເອົາແນວຄວາມຄິດສົ່ງເສີມສຸຂະອະນາໄມໃນໂຮງຮຽນເຂົ້າສູ່ບັນດາຄູ-ອາຈານໃນສະຖາບັນສ້າງຄູ ໂດຍ ສະເພາະ ແມ່ນເລັ່ງໃສ່ນັກຮຽນຄູປີສຸດທ້າຍທີ່ຈະອອກໄປສິດສອນ. ໄດ້ຝຶກອົບຮົມຄູອາສາສະມັກຊາວ ບ້ານ, ຝຶກອົບຮົມຄູຝຶກວິຊາຊີບຂັ້ນພື້ນຖານນອກລະບົບໂຮງຮຽນ ແລະ ຜູ້ບໍລິຫານສູນສຶກສາຊຸມຊົນໂດຍ ການ ຮ່ວມມືກັບອົງການຈັດຕັ້ງສາກົນ.

2. ການພັດທະນາຫຼັກສູດ:

- ໄດ້ທົດລອງຫຼັກສູດຫ້ອງຮຽນອະນຸບານຕິດກັບໂຮງຮຽນປະຖົມ ພ້ອມທັງຄົ້ນຄວ້າວິທີການສິດສອນລະຫວ່າງຫ້ອງຮຽນອະນຸບານ 3 ກັບ ຂັ້ນ ( ປ.1) ໃຫ້ມີຄວາມສອດຄ່ອງ ແລະ ສ້າງຫຼັກສູດບຳລຸງຄູ ອະນຸບານ 18 ອາທິດ.

- ພັດທະນາຫລັກສູດ ແລະ ຄົ້ນຄວ້າປື້ມແບບຮຽນ ໃນທຸກຊັ້ນ ທຸກສາຍ ທັງໃນລະບົບ ແລະ ນອກລະບົບ ເຊັ່ນ: ສຳເລັດການປັບປຸງຫຼັກສູດສະມັດຕະພາບຂັ້ນພື້ນຖານຊັ້ນປະຖົມ( ປ1-ປ5), ປັບປຸງຫຼັກສູດສ້າງຄູປະ ຖົມຊົນເຜົ່າປີທີ 3, ຫຼັກສູດວິຊາ ຄຸນສົມບັດ ຊັ້ນປະຖົມສຶກສາ (ປ1-ປ5), ສ້າງຕົ້ນສະບັບປື້ມແບບຮຽນວິຊາ ໂລກອ້ອມຕົວ (ປ1-ປ3).

- ປັບປຸງການເຄື່ອນໄຫວເສີມຫລັກສູດ ແລະ ນອກຫລັກສູດ : ປະຊາກອນສຶກສາ, ສຸຂະສຶກສາ, ສິລະປະ-ວັນນະຄະດີ, ກິລາ-ກາຍະກຳ ແລະ ຂະບວນການຕ້ານຢາ ເສບຕິດໃນໂຮງຮຽນ.

- ສຳເລັດການສ້າງຫຼັກສູດມັດທະຍົມຕອນປາຍແບບແບ່ງສາຍກຸ່ມເຂົ້າສາຍວິຊາຊີບແລະສາຍມະຫາວິທະ ຍາໄລ.

- ປັບປຸງໂຄງຮ່າງ ຫຼັກສູດສາຍບຳລຸງມັດທະຍົມຕອນຕົ້ນ ແລະ ບຳລຸງມັດທະຍົມຕອນປາຍ; ຫຼັກສູດຝຶກອົບຮົມວິຊາຊີບຂັ້ນພື້ນຖານນອກລະບົບໂຮງຮຽນໃນ 5 ສາຂາວິຊາ ເພື່ອນຳໃຊ້ໃນຂອບເຂດທົ່ວປະເທດ .

- ສ້າງຫຼັກສູດຍົກລະດັບໂຮງຮຽນສ້າງຄູ ພະລະສຶກສາເປັນ ວິທະຍາໄລພະລະສຶກສາ.

- ປັບປຸງຄືນຫລັກສູດ (8+3), (11+2) ແລະ (11+3) ຂອງ ອາຊີວະສຶກສາໃຫ້ມີຄວາມສອດຄ່ອງ ແລະ ມີການ ຕໍ່ເນື່ອງ ເພື່ອສາມາດເຊື່ອມຕໍ່ໃສ່ ຫລັກສູດຊັ້ນສູງ ແລະ ປະລິນຍາຕີໄດ້ ; ຄົ້ນຄວ້າຫລັກສູດປະລິນຍາຕີ ລະບົບ (2+3) ມາເປັນ (1+4), ປັບປຸງຫລັກສູດຄະນະສຶກສາສາດ ແລະ ພາສາສາດ ມາເປັນຫລັກສູດ (0+5) ; ຄົ້ນຄວ້າ ສ້າງຫລັກສູດ ປະລິນຍາຕີ ສ້າງຄູ ອານຸບານ ແລະ ສ້າງຄູ ປະຖົມ.

- ທົດລອງເອົາໂຮງຮຽນວິຊາຊີບ ແຂວງໄຊຍະບູລີທີ່ເປີດໃໝ່ເປັນໂຮງຮຽນແບບປະສົມ ປະສານ, ຊຸກຍູ້ການສ້າງມາດຕະຖານຫຼັກສູດວິຊາຊີບແຫ່ງຊາດສຳລັບ 4 ຂະແໜງ: ຊ່າງຕໍ່າຫູກ, ຊ່າງຄຸ້ມຄອງເຄື່ອງຈັກ, ພະ ນັກງານເສີບ ແລະ ຊ່າງຫຍິບ ຈັກອຸດສາຫະກຳ.

- ຄົ້ນຄວ້າ ແລະ ພັດທະນາ ຫຼັກສູດຕໍ່ເນື່ອງ ລະຫວ່າງສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ, ປະລິນຍາຕີ ຢ່າງເປັນ ຮູບປະທຳ. ກວດແກ້ ແລະ ຮັບຮອງ ຫຼັກສູດຊັ້ນສູງຂອງໂຮງຮຽນເອກະຊົນ 5 ແຫ່ງ, ປະລິນຍາຕີ 1 ແຫ່ງ.

- ທັນເອົາຫຼັກສູດກິລາປ້ອງກັນຊາດ ເຂົ້າສອນໃນໂຮງຮຽນມັດທະຍົມຕອນປາຍ, ອາຊີວະສຶກສາ, ວິທະຍາໄລຄູ, ໂຮງຮຽນສ້າງຄູ ແລະ ມະຫາວິທະຍາໄລທົ່ວປະເທດ.

- ຄົ້ນຄວ້າວິທີສິດສອນແບບໃຫມ່ໃຫ້ນັກຮຽນໄດ້ເປັນເຈົ້າການຄົ້ນຄິດໃນຊົ່ວໂມງຮຽນຫຼາຍຂື້ນ.

3. <u>ວຽກງານ ການຝຶກອົບຮົມ</u> :

- ຝຶກອົບຮົມກ່ຽວກັບການລ້ຽງ ແລະ ດູແລເດັກແບບພື້ນຖານຂັ້ນບ້ານ ໃນ 8 ແຂວງເປົ້າໝາຍ, ຈັດຕັ້ງສູນດູແລເດັກຂັ້ນບ້ານ 30 ແຫ່ງຢູ່ແຂວງຫຼວງພະບາງ, ບໍລິຄຳໄຊ ແລະ ເຂດພິເສດໄຊສົມບູນ.
- ສ້າງ ແລະ ຂະຫຍາຍກຸ່ມໂຮງຮຽນໃນໂຮງຮຽນປະຖົມ, ສ້າງລະບົບນິເທດການສຶກສາເພື່ອຊ່ວຍເຫລືອຕິດຕາມການສອນ-ການຮຽນ, ສົ່ງເສີມນັກຮຽນເກັ່ງ ໂດຍຈັດໃຫ້ມີຫ້ອງພອນສະຫວັນ, ຈັດຕັ້ງສອບເສັງນັກຮຽນເກັ່ງລະດັບໂຮງຮຽນ ແລະ ລະດັບແຂວງ.
- ສ້າງຫ້ອງທົດລອງໃນການຮຽນ-ການສອນຄອມພິວເຕີໃຫ້ແກ່ຄູ ແລະ ນັກຮຽນຊັ້ນມັດທະຍົມຕອນປາຍທີ່ໄດ້ຮັບການຊ່ວຍເຫລືອ ຈາກກຸ່ມວິຊາຊີບສາກົນແຫ່ງຣາຊະອານາຈັກໄທ ແລະ ຈາກ ບໍລິສັດພັດທະນາຂອງປະເທດມາເລເຊຍ.
- ເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການປ້ອງກັນເອດໃນໂຄງການພັດທະນາຊັບພະຍາກອນມະນຸດດ້ວຍການນຳເອົາເຕັກໂນໂລຊີສື່ສານ (ICT) ເຂົ້າໃນລະບົບການສຶກສາຮ່ວມກັບປະເທດໃນເຂດອ່າງແມ່ນ້ຳ ຂອງ (GMS) (ກຳປູເຈຍ, ມຽນມາ, ໄທ, ລາວ, ຫວຽດນາມ ແລະ ຈີນ (ຢຸນນານ)).
- ຝຶກອົບຮົມວິທີການສິດສອນວິທະຍາສາດພື້ນຖານໃຫ້ຄູ-ອາຈານ ຈຳນວນ 30 ຄົນຂອງມະຫາວິທະຍາໄລສຸພານຸວົງ,
- ຫັນໂຮງໝໍເສດຖາ ເປັນໂຮງໝໍຂອງມະຫາວິທະຍາໄລແຫ່ງຊາດ.
- ຖືເອົາການຮຽນໜັງສືຕິດພັນກັບການຝຶກອົບຮົມວິຊາຊີບທັງນີ້ກໍເພື່ອຍົກຄຸນນະພາບຊີວິດຂອງຜູ້ຮຽນ.
- ຈັດການຝຶກອົບຮົມວິຊາຊີບຂັ້ນພື້ນຖານນອກລະບົບໂຮງຮຽນໃຫ້ປະຊາຊົນ ແລະ ຊາວຫນຸ່ມ ລວມທັງໝົດ 2,765 ຄົນ/ຍິງ 2,107 ຄົນ (76.2%) ປະຕິບັດໄດ້ 92,1 %.(ແຜນການປີ 3,000 ຄົນ) ; ສູນຝຶກວິ

ຊາຊີບຂັ້ນພື້ນຖານນອກລະບົບໂຮງຮຽນແຕ່ລະແຫ່ງໄດ້ດຳເນີນການສອນ-ການຮຽນລົບລ້າງຄວາມບໍ່ຮູ້ໜັງສື, ບຳລຸງຍົກລະດັບຊັ້ນປະຖົມ-ມັດທະຍົມຕົ້ນ, ຫ້ອງສະຫມຸດ, ເຝິກອົບຮົມວິຊາຊີບຂັ້ນພື້ນຖານທີ່ຕິດພັນກັບຊີວິດການເປັນຢູ່ຂອງະຊາຊົນ, ໄດ້ຈັດກິດຈະ ກຳຕ່າງໆພາຍໃນສູນ. ພາຍຫຼັງຝຶກ ອົບຮົມວິຊາຊີບຂັ້ນພື້ນຖານແລ້ວ ກຸ່ມເປົ້າຫມາຍໄດ້ຮັບທຶນໝູນວຽນ ເພື່ອນຳໄປລ້ຽງສັດ, ປູກຝັງ, ຫັດຖະກຳ ແລະ ອື່ນໆ. ຝຶກອົບຮົມອາສາສະຫມັກຊາວບ້ານ ແລະ ອຳນາດການປົກຄອງບ້ານເປົ້າຫມາຍ. ຖືເອົາວຽກ ງານການຮຽນຫນັງສື ຕິດພັນກັບການ ຝຶກອົບຮົມວິຊາຊີບ ທັງນີ້ກໍເພື່ອຍົກຄຸນນະພາບຊີວິດ ຂອງຜູ້ຮຽນ.
- ໄດ້ປັບປຸງຄະນະກວດກາການ ແລະ ຈັດອົບຮົມການກວດກາ ປະເມີນຜົນໃຫ້ພະນັກງານວິຊາການ ກວດກາການສຶກສາຂັ້ນຕ່າງໆ
- ສຳເລັດການສ້າງຖານຂໍ້ມູນພ້ອມທັງພັດທະນາເຄືອຂ່າຍຄຸ້ມຄອງຂໍ້ມູນຂ່າວສານ(ICT) ແລະ ສຳເລັດການອົບຮົມ ການນຳໃຊ້ ເຄື່ອຄ່າຍນີ້ ໃຫ້ພະນັກງານຢູ່ສຳນັກກະຊວງສຶກສາທິການ.
- ເອົາໃຈໃສ່ວຽກງານພະລະສຶກສາ ແລະ ກິລາໃນໂຮງຮຽນຢ່າງເປັນຂະບວນແນ່ໃສ່ສົ່ງເສີມສຸຂະພາບທາງດ້ານຮ່າງກາຍຂອງນັກຮຽນໃຫ້ມີຄວາມສົມບູນແຂງແຮງ.

- ຈັດຊຸດອົບຮົມວຽກງານພະລະສຶກສາຢູ່ແຂວງສະຫັວນນະເຂດ ແລະ ວຽກງານກິລາປ້ອງກັນຊາດໃຫ້ 7 ແຂວງພາກກາງ - ພາກໃຕ້.

- ໄດ້ເອົາໃຈໃສ່ຕ້ານ ແລະ ສະກັດກັ້ນຢາເສບຕິດໃນໂຮງຮຽນ ດ້ວຍການປະຕິບັດກິດຈະກຳ ດ້ານການກິລາ ສິນລະປະຕ່າງໆ ພ້ອມທັງຝຶກອົບຮົມທັກສະ " ເພື່ອນຊ່ວຍເພື່ອນ " ໃຫ້ຄູ ແລະ ນັກຮຽນໃນໂຮງຮຽນສາມັນ ແລະ ວິທະຍາໄລຄູໃນ 9 ແຂວງ ( ຫຼວງພະບາງ, ຫຼວງນ້ຳທາ, ບໍ່ແກ້ວ, ວຽງຈັນ, ເຂດພິເສດໄຊສົມບູນ, ນະຄອນຫຼວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ ແລະ ສະຫັວນນະເຂດ ) .

4. <u>ການປັບປຸງນະໂຍບາຍ ແລະ ລະບຽບການຕ່າງໆ</u> :

- ປັບປຸງ ລະບຽບການ ແລະ ຈັດຕັ້ງການສອບເສັງແຕ່ລະຊັ້ນ, ແຕ່ລະສາຍໃຫ້ມີລະບຽບເຂັ້ມງວດ ແລະ ມີປະສິດພາບ ກວ່າເກົ່າ.

- ປັບປຸງລະບຽບການສອບເສັງ ລະບົບບຳລຸງຊັ້ນມັດທະຍົມຕອນຕົ້ນ(ມ3) ແລະ ຕອນປາຍ(ມ6),

- ຮ່າງລະບຽບການຝຶກອົບຮົມວິຊາຊີບຂັ້ນພື້ນຖານນອກລະບົບໂຮງຮຽນເພື່ອນຳໃຊ້ໃນທົ່ວປະເທດ,

- ກວດແກ້ກົດລະບຽບຂອງສະມາຄົມກິລານັກຮຽນ - ນັກສຶກສາແຫ່ງຊາດລາວ ແລະ ກວດແກ້ປື້ມຄູ່ມືຄູ ການ ຮຽນ - ການສອນ ວິຊາພະລະສຶກສາ,ວິຊາກິລາປ້ອງກັນຊາດ, ອຸປະກອນ ແລະ ຂະໜາດເດີ່ນກິລາ ແຕ່ລະປະເພດ ເພື່ອເຂົ້າພິມ.

- ສ້າງຂໍ້ກຳນົດກົດລະບຽບກ່ຽວກັບການຄຸ້ມຄອງໂຮງຮຽນ ວິຊາຊີບແບບປະສົມ ປະສານ (ອາຊີວະສຶກສາໃນ ແລະ ນອກລະບົບ); ຂໍ້ກຳນົດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການສະ ພາທີ່ປຶກສາອາ
ຊີວະສຶກສາແຫ່ງຊາດ; ຂໍ້ກຳນົດວ່າດ້ວຍການສ້າງຕັ້ງກອງທຶນເພື່ອການອົບຮົມວິຊາຊີບແຫ່ງຊາດ, ພາລະບົດບາດ ຂອງ ສູນ ພັດທະນາອາຊີວະສຶກສາ,

- ກວດກາ ແລະ ປະເມີນຜົນທາງດ້ານວິຊາການເປັນຕົ້ນ ກວດກາການຈັດຕັ້ງການຮຽນ-ການ ສອນ ການປະຕິບັດຫຼັກສູດໂຄງການ, ການຈັດການສອບເສັງເລື່ອນຊັ້ນ, ການເລື່ອນຂັ້ນຂອງທຸກຊັ້ນ ທຸກສາຍທັງໃນ ແລະ ນອກລະບົບໂຮງຮຽນ; ຊຶ່ງປີຜ່ານມາ ກວດກາໄດ້ທັງໝົດ 10 ແຂວງ 47 ເມືອງ ແລະ 224ໂຮງຮຽນ.

**5. <u>ການປະກອບວັດຖຸ ອຸປະກອນຮັບໃຊ້ການສອນ-ການຮຽນ :</u>**

- ບັນດາຫ້ອງການສຶກສາປະຈຳແຂວງ, ບັນດາກົມຢູ່ໃນກະຊວງລ້ວນແຕ່ໄດ້ນຳໃຊ້ເຄື່ອງຄອມພິວເຕີເຂົ້າໃນ ການດຳເນີນງານຊຶ່ງປັດຈຸບັນພວມຕິດຕັ້ງລະບົບເຄືອຂ່າຍອິນເຕີແນດ ເພື່ອຮັບໃຊ້ການຄຸ້ມຄອງຂະແໜງ ການສຶກສາ.

- ສະໜອງປຶ້ມແບບຮຽນ ປຶ້ມຄູ່ມືຄູ, ປຶ້ມອ່ານເສີມ ພ້ອມທັງອຸປະກອນຮັບໃຊ້ການສອນ-ການຮຽນໃຫ້ແຕ່ລະ ແຂວງ, ເມືອງ ແລະ ໂຮງຮຽນຕ່າງໆ ໄດ້ຈຳນວນໜຶ່ງ, ສະໜອງເຄື່ອງຄອມພິວເຕີ ເຂົ້າໃນໂຮງຮຽນວິຊາຊີບ - ມະຫາວິທະຍາໄລ ແລະ ໂຮງຮຽນສາມັນຈຳນວນຫນຶ່ງ.

- ແຈກຢາຍປຶ້ມແບບຮຽນຂັ້ນລຶບລ້າງ ແລະ ຄູ່ມື ລະດັບ 1, 2, 3 ໃຫ້ກຸ່ມເປົ້າຫມາຍ, ຜະລິດສື່ເສີມກ່ຽວກັບການປ້ອງກັນເຊື້ອເອສ ໂປດສະເຕີ 4 ເລື່ອງ, ປຶ້ມອ່ານເສີມ ແລະແຜ່ນພັບຈຳນວນໜຶ່ງ, ເຜີຍແຜ່ການນຳໃຊ້ປຶ້ມ ແລະ ກະແຊັດການປ້ອງກັນໂລກດັ່ງເອດໃຫ້ຄູອາສາສະມັກ.

- ລົງເກັບກຳຂໍ້ມູນໃນໂຮງຮຽນ, ສ້າງປ້າຍ ແລະ ໂປດສະເຕີຕ້ານຢາສູບ. ຈັດພິມແຜ່ນພັບຕ້ານຢາເສບຕິດ, ຈັດ ການແຂ່ງຂັນເລື້ອງສັ້ນ ແລະ ເຄື່ອນໄຫວຕ້ານຢາເສບຕິດໃນລະດັບຕ່າງໆ ເພື່ອເຮັດໃຫ້ນັກຮຽນມີຄວາມເຂົ້າໃຈຕໍ່ຜົນຮ້າຍຂອງຢາເສບຕິດ.

ສະຫຼຸບລວມແລ້ວ ວຽກງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງໄດ້ຈັດຕັ້ງປະຕິບັດ ຢ່າງມີໝາກຜົນໃນລະດັບສູນກາງ ແລະ ທ້ອງຖິ່ນ; ແຕ່ວ່າ ກໍ່ຍັງມີບາງບັນຫາທີ່ຄ້າງຄາ ເຊັ່ນ : ການກໍ່ສ້າງ ແລະ ບຳລຸງຄູຍັງຈຳກັດຢູ່ແຕ່ໃນໂຄງການຮ່ວມມືກັບຕ່າງປະເທດ, ຄຸນນະພາບຂອງຄູຍັງບໍ່ສູງເທົ່າທີ່ຄວນ; ການພັດທະນາຫຼັກສູດເຮັດສຳເລັດແລ້ວບໍ່ມີທຶນຈັດພິມ ແລະ ບໍ່ສາມາດໄປຈັດຕັ້ງອົບຮົມໃຫ້ຄູຜູ້ສອນຕົວຈິງ ໄດ້; ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູຍັງຂາດເຂີນຢ່າງໜັກໜ່ວງ ໂດຍສະເພາະແມ່ນຊັ້ນມັດທະຍົມຕອນປາຍ. ຄູອາຈານ ນອກຈາກຂາດວັດຖຸ ອຸປະກອນເຄື່ອງປະຈັກຕາໃນເວລາສິດສອນແລ້ວ, ຍັງຂາດທຶນເພື່ອໄປປົກປັກ ຮັກສາເຄື່ອງໃຊ້ທີ່ມີຢູ່ແລ້ວໃຫ້ມີຄວາມພ້ອມທີ່ຈະໃຊ້ງານຕໍ່ໄປໄດ້.

- ການປະຕິບັດລະບຽບການສອບເສັງຈົບລະບົບບຳລຸງ (ມ3) ແລະ (ມ6) ບໍ່ເຂັ້ມງວດ; ໄດ້ລົງທຶນເຂົ້າໃນວຽກ ງານພະລະສຶກສາ ແລະ ຕ້ານສິ່ງເສບຕິດ ແຕ່ຍັງບໍ່ທັນມີການຕີລາຄາ, ປະເມີນຜົນ ແລະ ຍັງບໍ່ທັນວາງແຜນຍຸດທະສາດເປັນແຕ່ລະໄລຍະ. ສະເພາະການປະຕິບັດຫຼັກສູດການຮຽນ- ການສອນວິຊາພະລະສຶກສາ ແລະວິຊາກິລາປ້ອງກັນຊາດຢູ່ທ້ອງຖິ່ນຍັງບໍ່ທັນເປັນພາກບັງຄັບ, ອຸປະກອນຮັບໃຊ້ວຽກງານດັ່ງກ່າວບໍ່ພຽງພໍ, ເນື່ອງຈາກງົບປະມານຮັບໃຊ້ບໍ່ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ, ການລົງຊຸກຍູ້ຕິດ ຕາມ, ປະເມີນຜົນການຮຽນ - ການສອນ ແລະ ການເຄື່ອນໄຫວກິລານອກຫຼັກສູດຍັງບໍ່ທັນເຮັດໄດ້ຢ່າງທົ່ວເຖິງ.

## *III. ແຜນງານຍົກລະດັບການບໍລິຫານ ແລະ ຄຸ້ມຄອງການສຶກສາ*

### *1. ວຽກງານປັບປຸງກົງຈັກ ແລະ ການຈັດຕັ້ງ :*

- ໄດ້ປັບປຸງກົງຈັກການບໍລິຫານການສຶກສາທຸກຂັ້ນໃຫ້ຄ່ອຍໆກ້າວເຂົ້າສູ່ລະບຽບແບບແຜນ ເຊັ່ນ: ໄດ້ສຳເລັດການກຳນົດຕຳແໜ່ງງານຂອງທຸກກົມພາຍໃນກະຊວງ, ຂອງພະແນກສຶກສາປະຈຳແຂວງທຸກແຂວງ ແລະ ຫ້ອງການສຶກສາປະຈຳເມືອງທຸກເມືອງ ແລະ ປັດຈຸບັນກຳລັງຈັດພິມເພື່ອແຈກຢາຍໃຫ້ທຸກໆກົມກອງ.

ນອກ ຈາກນີ້ແຕ່ລະແຂວງຍັງໄດ້ປະຕິບັດນະໂຍບາຍຕ່າງໆຕາມທີ່ລັດຖະບານໄດ້ວາງອອກເຊັ່ນ: ນະໂຍບາຍຄູສອນຫ້ອງຄວບ, ນະໂຍບາຍຕໍ່ຄູໄປສິດສອນຢູ່ເຂດຫ່າງໄກສອກຫລີກ ແລະ ອື່ນໆ.

- ຜັນຂະຫຍາຍເນື້ອໃນແຜນການຍຸດທະສາດ ແລະ ແຜນການ 5 ປີ (2001-2005 ) ພ້ອມທັງແຜນການລົງທຶນຂອງຂະແໜງການໃຫ້ສອດຄ່ອງກັບຄວາມສາມາດຕົວຈິງທາງດ້ານງົບປະມານ, ສຳເລັດ ການສ້າງແຜນຍຸດສາດການສຶກສາເພື່ອທຸກຄົນ(EFA) ແລະ ແຜນຍຸດທະສາດການລຶບລ້າງຄວາມທຸກຍາກ.

ສັງລວມແລ້ວເຖິງວ່າສະພາບເສດຖະກິດຍັງຫຍຸ້ງຍາກ, ຄ່າຄອງຊີບຝືດເຄືອງ, ແຕ່ລັດຖະກອນສຶກສາແລະ ຄູ-ອາຈານສ່ວນຫລາຍຍັງມີແນວຄິດອຸ່ນອ່ຽງ ຕັ້ງໜ້າປະຕິບັດວຽກງານຕ່າງໆຕາມໜ້າທີ່ ແລະພັນທະຂອງຕົນຕາມແນວທາງປ່ຽນແປງໃໝ່ຂອງພັກເປັນປົກກະຕິ.

## *2. ວຽກງານຄຸ້ມຄອງລັດຖະກອນ:*

- ຄົ້ນຄວ້າປະຕິບັດມະຕິຄຳສັ່ງ, ຜັນຂະຫຍາຍແຜນການ ແລະ ແນວທາງນະໂຍບາຍຂອງສູນກາງພັກໃນແຕ່ລະໄລຍະ, ຈັດຕັ້ງປະທະກະຖາ, ເລົ່າມູນເຊື້ອໃນວັນສຳຄັນຂອງຊາດ ແລະ ຂອງສາກົນເປັນຕົ້ນ: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ, ວັນຊາດທີ 2 ທັນວາ ແລະ ຈັດຕັ້ງເຜີຍແຜ່ເຫດການພົ້ນເດັ່ນທີ່ເກີດຂຶ້ນຢູ່ພາຍໃນ ແລະ ສາກົນ.

- ສົກຮຽນ 2003-2004 ໄດ້ຮັບອະນຸມັດຕົວເລກລັດຖະກອນໃໝ່ຈາກລັດຖະບານຈຳນວນ 1,550 ຄົນ ແລະ ບັນຈຸເຂົ້າເປັນລັດຖະກອນສຳເລັດ 100% . ປັດຈຸບັນມີລັດຖະກອນສຶກສາທັງໝົດ 50,773 ຄົນ /ຍິງ 22,041 ຄົນ(43.41%); ໃນນີ້ເປັນລັດຖະກອນບໍລິຫານມີ 5,206 ຄົນ/ຍິງ 1,239 ຄົນ(23.79%), ຄູສອນຕົວຈິງມີ 45,567 ຄົນ/ຍິງ 18,170 ຄົນ(39.87%). ມີລະດັບປະລິນຍາເອກທັງຫມົດ 56 ຄົນ/ຍິງ 7 ຄົນ(12.5%), ເໜືອປະລິນຍາໂທ 5 ຄົນ/ຍິງ 0 ຄົນ, ປະລິນຍາໂທ ມີ 309 ຄົນ/ຍິງ 80 ຄົນ(25.88), ເໜືອປະລິນຍາຕີ 99 ຄົນ/ຍິງ 39 ຄົນ(39.39%), ປະລິນຍາຕີ 4,707 ຄົນ/ຍິງ 1,820 ຄົນ(38.66), ຊັ້ນສູງ 5,425 ຄົນ/ຍິງ 2,265 ຄົນ(41.75%) ແລະ ຕ່ຳກວ່າຊັ້ນສູງ 40,172 ຄົນ/ຍິງ 17,830 ຄົນ(44.38). ຮັບອະນຸມັດຕຳແໜ່ງວິຊາການຂັ້ນສາດສະດາຈານ 9 ທ່ານ ແລະ ຮອງສາດສະດາຈານ 13 ທ່ານ ຢູ່ຂະແໜງສາທາລະນະສຸກ.

ໄດ້ສອບເສັງເລື່ອນຊັ້ນ-ເລື່ອນຂັ້ນເງິນເດືອນໃຫ້ແກ່ລັດຖະກອນສຶກສາທົ່ວປະເທດສຳເລັດຮອບທີ 1; ເລື່ອນຊັ້ນ-ຂັ້ນເງິນເດືອນໃຫ້ລັດຖະກອນສຶກສາ ແລະ ຄູ-ອາຈານທັງໝົດ 15,151 ຄົນ; ເລື່ອນຈາກລັດຖະ ກອນຝຶກງານຂຶ້ນເປັນລັດຖະກອນສົມບູນ 456 ຄົນ; ຍົກຍ້າຍລັດຖະກອນໄປປະຈຳການຢູ່ຂະແໜງການອື່ນ 176 ຄົນ. ໄດ້ພະຍາຍາມພັດທະນາຄວາມຮູ້ຄວາມສາມາດຂອງລັດຖະກອນ ແລະຄູ-ອາຈານ ດ້ວຍຮູບ ການຕ່າງໆ ເຊັ່ນ: ສົ່ງໄປຮຽນໄລຍະຍາວຢູ່ພາຍໃນ ແລະ ຕ່າງປະເທດຈຳນວນ 793 ຄົນ, ໃນນັ້ນ ຮຽນ ປະລິນຍາເອກ 7 ຄົນ, ປະລິນຍາໂທ 119 ຄົນ, ປະລິນຍາຕີ 190 ຄົນ, ຊັ້ນສູງ 237 ຄົນ ແລະ ຊັ້ນກາງ 240 ຄົນ, ສົ່ງໄປຝຶກອົບຮົມ ໄລຍະສັ້ນຢູ່ຕ່າງປະເທດ 112 ຄົນ ແລະ ພາຍໃນປະເທດ 138

ຄືນ. ສ້າງ ແຜນພັດທະນາ ຜູ້ບໍລິຫານການສຶກສາ ເພື່ອຕອບສະໜອງຕາມນະໂຍບາຍການແບ່ງຂັ້ນຄຸ້ມຄອງການສຶກ ສາສໍາເລັດໂດຍພື້ນຖານ ແລະ ສໍາເລັດການຂຽນຄູ່ມືການຝຶກອົບຮົມຜູ້ບໍລິຫານການສຶກສາໄດ້ 4 ວິຊາພ້ອມທັງຈັດພິມໄດ້ຈໍານວນ 4,000 ຫົວ.

ໄດ້ປະຕິບັດນະໂຍບາຍຕ່າງໆແກ່ລັດຖະກອນສຶກສາ ແລະ ຄູ-ອາຈານເຊັ່ນ: ຍ້ອງຍໍບຸກຄົນດີເດັ່ນ ຊຶ່ງ ມີຜູ້ໄດ້ຮັບຫລຽນໄຊອິດສະຫຼະຊັ້ນ III ມີ 6 ທ່ານ,ຫຼຽນກາແຮງງານ ມີ 6 ທ່ານ , ໃບຍ້ອງຍໍຂັ້ນລັດຖະບານມີ 8 ທ່ານ ແລະ ໃບຍ້ອງຍໍຂັ້ນກະຊວງສຶກສາມີ 250 ທ່ານ. ອະນຸມັດລາພັກໂດຍບໍ່ເອົາເງິນເດືອນ 23 ທ່ານ. ອະນຸມັດໃຫ້ອອກບໍານານມີ 216 ທ່ານ, ບໍາເນັດມີ 291 ທ່ານ , ເສຍກໍາລັງແຮງງານມີ 9 ທ່ານ.

- ຄຽງຄູ່ກັບນະໂຍບາຍຂອງລັດຖະບານແລ້ວ, ກະຊວງສຶກສາທິການຍັງມີກອງທຶນສະຫວັດດີການຄູແຫ່ງຊາດ ທີ່ໄດ້ຊ່ວຍຊູຍູ້ຫມູນຄູທີ່ເສຍຊີວິດ ແລະ ເຈັບເປັນໄດ້ເປັນຢ່າງດີ, ປັດຈຸບັນກອງທຶນດັ່ງກ່າວມີທຶນໝູນວຽນທັງ ໝົດ 200,000,000 ກີບ; ແຕ່ ກອງທຶນສະຫວັດ ດີການຄູແຫ່ງຊາດ ກໍ່ພົບຄວາມຫຍຸ້ງຍາກດ້ານລາຍຮັບຍ້ອນເກັບເງິນຄ່າບໍາລຸງຂອງສະມາຊິກໄດ້ຊ້າເກີນຄວນ ເພາະຄູໄດ້ຮັບເງິນເດືອນບໍ່ຖືກຕາມກໍານົດເວລາ.

### *3. ວຽກງານຄຸ້ມຄອງ ງົບປະມານ ການເງິນ:*

ສົກຮຽນ 2003 - 2004 ນີ້ ຂະແໜງການສຶກສາໄດ້ຮັບອະນຸມັດລາຍຈ່າຍງົບປະມານທັງຫມົດ 601.25 ຕື້ກີບ, ເທົ່າກັບ 10.70% ຂອງ ລາຍຈ່າຍລວມຂອງລັດຖະບານ ແລະ ເທົ່າກັບ 2.46 % ຂອງຍອດຜະລິດຕະພັນລວມພາຍໃນ (GDP), ໃນນີ້ ມີງົບປະມານບໍລິຫານປົກກະຕິ 230.30 ຕື້ກີບ (ແຍກເປັນເງິນເດືອນ ແລະເງິນນະໂຍບາຍ 160.51 ຕື້ກີບ, ເປັນເງິນບໍລິຫານ 16.95 ຕື້ກີບ ແລະ ເປັນເງິນດັດສົມ ແລະ ສິ່ງເສີມ 52.84 ຕື້ກີບ), ມີງົບປະມານລົງທຶນ ກໍ່ສ້າງພື້ນຖານ 370.95 ຕື້ກີບ (ແຍກເປັນ ງົບປະມານລົງທຶນພາຍໃນ 57.04 ຕື້ກີບ ແລະ ເປັນງົບປະມານ ລົງທຶນຕ່າງປະເທດ 313.93 ຕື້ກີບ.

ສູນກາງຄຸ້ມຄອງຈໍານວນ 265.25 ຕື້ກີບ, ໃນນັ້ນ ມີງົບບໍລິຫານປົກກະຕິ 20.79 ຕື້ກີບ ( 8.43%), (ແຍກເປັນເງິນເດືອນ ແລະ ເງິນນະໂຍບາຍ 7.36 ຕື້ກີບ, ເປັນເງິນບໍລິຫານ 5.54 ຕື້ກີບ ແລະ ເປັນເງິນດັດສົມ ສິ່ງເສີມ 7.89 ຕື້ກີບ. ມີງົບປະມານລົງທຶນ 244.46 ຕື້ກີບ ( 92,16) (ແຍກເປັນ ງົບປະມານ ລົງທຶນພາຍໃນ 10.00 ຕື້ກີບ ແລະ ງົບປະມານລົງທຶນຕ່າງປະເທດ 234.46 ຕື້ກີບ).

ທ້ອງຖິ່ນຄຸ້ມຄອງຈໍານວນ 336.00 ຕື້ກີບ, ໃນນັ້ນ ມີງົບປະມານບໍລິຫານປົກກະຕິ 11.41 ຕື້ກີບ ( ແຍກເປັນເງິນເດືອນ ແລະ ເງິນນະໂຍບາຍ 153.15 ຕື້ກີບ, ເປັນເງິນດັດສົມ ສິ່ງເສີມ 44.95 ຕື້ກີບ), ມີງົບປະມານລົງທຶນ 126.49 ຕື້ກີບ (ແຍກເປັນງົບປະມານ ລົງທຶນພາຍໃນ 47.03 ຕື້ກີບ ແລະ ເປັນງົບປະມານລົງທຶນຕ່າງປະເທດ 79.46 ຕື້ກີບ)

- ລາຍຮັບວິຊາການ ຂອງກະຊວງສຶກສາທິການ ທີ່ຈະໄດ້ມອບ ພັນທະ ມີເຖິງ 2.50 ຕື້ກີບ.

*4. ວຽກງານກວດກາການສຶກສາ :*

1. ໃຫ້ດຳເນີນການກວດກາການສຶກສາຮອບດ້ານເປັນຕົ້ນແມ່ນທາງດ້ານວິຊາການເຊັ່ນ :ກວດກາການຈັດການຮຽນ-ການສອນ, ການປະຕິບັດຫຼັກສູດໂຄງການ ແລະ ການສອບເສັງທຸກຊັ້ນທຸກສາຍທັງໃນ ແລະ ນອກລະບົບ, ຊຶ່ງກວມເອົາ 10 ແຂວງ 47 ເທື່ອເມືອງ ແລະ 224 ເທື່ອໂຮງຮຽນ.
2. ໄດ້ພົວພັນປະສານສົມທົບກັບບັນດາກົມ ແລະ ພາກສ່ວນກ່ຽວຂ້ອງດຳເນີນການກວດກາຕາມຄຳສັ່ງເຊັ່ນ : ກວດກາການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍທາງດ້ານງົບປະມານ, ລາຍຮັບ-ລາຍຈ່າຍທາງດ້ານວິຊາການ ແລະ ອື່ນໆໄດ້ 8 ເປົ້າໝາຍ.
3. ໄດ້ປັບປຸງຈັດຕັ້ງສັບຊ້ອນຄະນະກວດກາການສຶກສາທີ່ວກະຊວງ, ແຂວງ ໃຫ້ແທດເໝາະກັບຕົວຈິງ ແລະ ຊີ້ນຳໃຫ້ດຳເນີນການກວດກາຕາມພາລະບົດບາດຂອງຕົນ.

*5. ວຽກງານແຜນການ, ການຮ່ວມມືແລະ ພົວພັນກັບຕ່າງປະເທດ:*

1. ປະຕິບັດສັນຍາຮ່ວມມື 2 ຝ່າຍ ດ້ານການສຶກສາກັບກະຊວງສຶກສາກໍ່ສ້າງ ສ.ສ.ຫວຽດນາມ, ກັບ ສ.ປ. ຈີນ, ຍີ່ປຸ່ນ, ອິດສະຕາລີ, ມາເລເຊຍ, ເຢີລະມັນ, ມົງໂກນ, ຝຣັ່ງ, ແບນຊິກ, ລູກຊຳບວກ, ໂປໂລຍ, ກູບາ ແລະ ກັບປະເທດເພື່ອນບ້ານໃກ້ຄຽງກຳປູເຈຍ, ມຽນມາ, ໄທ. ນອກນັ້ນບັນດາແຂວງທີ່ມີຊາຍແດນຕິດກັບ ສ.ສ.ຫວຽດນາມກໍ່ຍັງ ໄດ້ຮ່ວມມື ແບບພິເສດ.
2. ປະຕິບັດສັນຍາຮ່ວມມືຫຼາຍຝ່າຍ ເຊັ່ນ: ກັບບັນດາປະເທດສະມາຊິກອາຊຽນ(ASEAN) 11 ປະເທດ ແລະ ບັນດາປະເທດໃນເຂດລຸ່ມແມ່ນ້ຳຂອງ(GMS)(ຈີນ(ແຂວງຢູນານ), ມຽນມາ, ລາວ, ໄທ, ກຳປູ ເຈຍ ແລະ ຫວຽດນາມ), ໄດ້ຮ່ວມມືທາງດ້ານວິຊາການກັບສະຖາບັນຕ່າງໆຂອງອົງການຊີແມວ(SEAMEO)
3. ຮ່ວມມືກັບບັນດາປະເທດເພື່ອນມິດຕ່າງໆ ຢູ່ໃນໂລກ ທີ່ຍັງບໍ່ທັນມີບົດບັນທຶກຊ່ວຍຈຳ ເຊັ່ນ : ສິງກະໂປ, ອິນເດຍ, ເກົາຫຼີ, ສະຫະລັດອາເມລິກາ, ປາກິດສະຖານ, ນິວຊີແລນ .... ແລະ ສືບຕໍ່ການຮ່ວມມືກັບ 29 ອົງການ ທີ່ບໍ່ຂຶ້ນກັບລັດຖະບານ (NGOs).
4. ຮ່ວມມືກັບບັນດາສະຖາບັນ ມະຫາວິທະຍາໄລຕ່າງປະເທດ ທີ່ມີສັນຍາຮ່ວມກັນ ໂດຍເລັ່ງໃສ່ການແລກປ່ຽນທາງດ້ານວິຊາການເຊັ່ນ: ການແລກປ່ຽນອາຈານ, ນັກສຶກສາ, ການຄົ້ນຄວ້າວິທະຍາສາດ ແລະ ການແລກປ່ຽນຂໍ້ມູນຂ່າວສານ.

5. ປະຕິບັດໂຄງການສຶກສາເພື່ອເດັກຍິງ (BEGP) ຮ່ວມກັບທະນາຄານພັດທະນາອາຊີ,ອົດສະຕາລີ ຊຶ່ງປັດຈຸບັນປະຕິບັດກິດຈະກຳຕົວຈິງຂອງໂຄງການ ໄດ້ 65% ; ແຕ່ໃຊ້ເວລາເຖິງ 82% ຊຶ່ງຈະປິດໂຄງການໃນປີ 2005 ນີ້.
6. ປະຕິບັດໂຄງການພັດທະນາຄຸນນະພາບການສຶກສາໄລຍະ II(EQIP II) ແມ່ນໜຶ່ງໃນໂຄງການຂອງກະຊວງສຶກສາທິການທີ່ແນໃສ່ປະກອບສ່ວນໃນການຫລຸດຜ່ອນຄວາມທຸກຍາກ ໂດຍສະໜອງການຮຽນ-ການສອນທີ່ມີຄຸນນະພາບທີ່ດີໃຫ້ແກ່ເດັກ.
ຜ່ານການປະຕິບັດໂຄງການມາເຖິງປັດຈຸບັນອົງປະກອບເງິນກູ້ຈາກADBໄດ້ສຳເລັດ ການອອກແບບ ແລະ ແຜນຄິດໄລ່ການສ້ອມແປງ ແລະ ຍົກລະດັບ ບັນດາສະຖາບັນສ້າງຄູ 8 ແຫ່ງ, ສຳເລັດການອອກແບບກໍ່ສ້າງ ແລະ ແຜນຄິດໄລ່ປະເມີນລາຄາຫ້ອງ ການສຶກສາເມືອງ ແລະ ໂຮງຮຽນປະຖົມ. ສຳເລັດການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດໃນການເກັບຂໍ້ມູນເພື່ອວາງແຜນປະຕິບັດໂຄງການໃຫ້ແກ່ຂັ້ນແຂວງ, ເມືອງ ແລະ ບ້ານກັບ ໂຮງຮຽນ.
7. ສ່ວນອົງປະກອບເງິນຊ່ວຍເຫຼືອລ້າຈາກອົງການ Sida, ທີ່ເອີ້ນວ່າໂຄງການ TTEST, ໄດ້ສຳເລັດການ ຮ່າງແຜນສ້າງຄູແຫ່ງຊາດ, ການທົບທວນໂຄງສ້າງຫຼັກສູດການກໍ່ສ້າງ ແລະ ບຳລຸງ, ໂຄງສ້າງລາຍວິຊາ ຮຽນຂອງສະຖາບັນສ້າງຄູໃນລະບົບປະຖົມ ແລະ ມັດທະຍົມ, ສຳເລັດການອອກແບບຫຼັກສູດປະລິນຍາ ໂທ ເພື່ອຍົກລະດັບໃຫ້ແກ່ຄູ-ອາຈານໃນສະຖາບັນສ້າງຄູ, ຊຶ່ງເປັນການຮ່ວມມືລະຫວ່າງຄະນະສຶກສາ ສາດ, ມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນ SIE ໄດ້ດຳເນີນການຝຶກ ອົບຮົມການພັດທະນາວິຊາຊີບຄູໃຫ້ແກ່ຄູຝຶກຫຼັກແຫຼ່ງໃນສະຖາບັນສ້າງຄູ 8 ແຫ່ງ ລວມມີ 32 ຄົນ, ໄດ້ສຳເລັດການວິໄຈ 3 ໃນ 6 ຫົວຂໍ້ທີ່ຕ້ອງໄດ້ທຳການວິໄຈຄື: ການວິໄຈການປະຕິບັດງານຂອງຄູ ປະຖົມ ແລະ ມັດທະຍົມ, ກຸ່ມໂຮງ ຮຽນ ແລະ ການປະຈຳການຂອງຄູ, ໄດ້ສຳເລັດການສຶກສາວິໄຈກ່ຽວກັບລາຍຮັບ ແລະ ເງິນເດືອນຂອງຄູ ພ້ອມທັງສະເໜີທາງເລືອກກ່ຽວກັບການປັບປຸງລາຍຮັບ ແລະ ເງິນເດືອນຂອງຄູ.
8. ສຳເລັດການສ້າງໂຄງການພັດທະນາການສຶກສາໄລຍະ 2 (EDP II) ຮ່ວມມືກັບທະນາຄານໂລກ, ໂຄງການຮ່ວມມືກັບ ຍີ່ປຸ່ນ (JICA) ປຸກສ້າງໂຮງຮຽນປະຖົມສຶກສາ, ໂຄງການຮຽນຮ່ວມ 2 ພາສາກັບ ປະເທດຝຣັ່ງ, ໂຄງການສຶກສາຂັ້ນພື້ນຖານ ຮ່ວມກັບ ສະຫະພາບເອີຣົບ (EU), ສຳເລັດການປະຕິບັດໂຄງການຊ່ວຍເຫລືອ ດ້ານເຕັກນິກໃນການແບ່ງຂັ້ນຄຸ້ມຄອງ (ADB/La 3871), ໂຄງການຊ່ວຍເຫລືອດ້ານເຕັກນິກ ແລະ ໂຄງການທົດລອງຢູ່ 2 ເມືອງ ( ເມືອງເຟືອງ, ເມືອງຊະນະຄາມ) ຢູ່ແຂວງ ວຽງຈັນຮ່ວມມືກັບກັບອົງການຊີດາ (SIDA)....

ຄຽງຄູ່ກັບຈຸດດີ ວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາຍັງມີບາງຈຸດທີ່ຄ້າງຄາ ເຊັ່ນ: ການຄຸ້ມຄອງສະຖິຕິພະນັກງານຄູ-ອາຈານຍັງບໍ່ທັນດີ, ລະດັບວິຊາສະເພາະ ຂອງພະນັກງານຍັງຈຳກັດ ຊຶ່ງສະແດງ

ອອກ ມີຄູອາຈານ 250 ຄົນ ປະລະໜ້າທີ່, 10 ຄົນຖືກວິໄນ ແລະ 291 ຄົນຂໍອອກບໍານານ. ນອກຈາກນັ້ນ ການສັບຊ້ອນ ແລະ ນໍາໃຊ້ຄູບໍ່ທັນດີ, ການປະຕິບັດ ລະບຽບ ລັດຖະກອນບໍ່ທັນເຂັ້ມງວດ, ການຈັດຊື້ ແລະ ການເບີກເງິນມີຄວາມຊັກຊ້າຫລາຍ ເພາະຕ້ອງໄດ້ຜ່ານ ຫຼາຍ ຂັ້ນຕອນ ກ່ອນຈະໄດ້ເງິນ ແລະ ວັດຖຸມາ ຮັບໃຊ້ໂຄງການ.ທຶນລົງທຶນຂອງລັດຖະບານປະຕິບັດໄດ້ໜ້ອຍທີ່ສຸດ. ການຮ່ວມມືກັບຕ່າງປະເທດຍັງບໍ່ມີ ແຜນຍຸດທະສາດ ແລະ ບໍ່ມີຈຸດສຸມໃນ ການຈັດຕັ້ງປະຕິບັດ.

- ການເບີກຈ່າຍເງິນເດືອນໃຫ້ພະນັກງານສຶກສາ, ຄູ-ອາຈານ ໃນທົ່ວປະເທດເຫັນວ່າຊັກຊ້າ, ຍ້ອນສະພາບ ທາງດ້ານການເງິນສັບສົນ ກົນໄກໃນການເບີກຈ່າຍບໍ່ຄ່ອງຕົວ.

- ສະເພາະການປະຕິບັດງົບປະມານ 6 ເດືອນຕົ້ນປີທີ່ສູນກາງຄຸ້ມຄອງຄວນປະຕິບັດໄດ້ 50% ຂອງງົບ ປະມານທັງໝົດ ແຕ່ເນື່ອງ ຈາກມີຂໍ້ຈໍາກັດທາງດ້ານການເງິນ ແລະ ເພດານແຕ່ລະງວດ ໃນ ການປະຕິບັດ ຕົວຈິງ ຂອງ ກະຊວງການເງິນວາງໄວ້ຄື: ງວດໜຶ່ງ 13%, ງວດ ສອງ 21%, ງວດສາມ 25% ແລະ ງວດສີ່ 41% ໃນງວດທີໜຶ່ງ 13% ສະເພາະເງິນເດືອນ, ເງິນນະໂຍບາຍ ແລະ ເບ້ຍລ້ຽງ ເທົ່ານັ້ນ ກໍ່ກວມເອົາ 10.39% ດັ່ງນັ້ນ, ຈຶ່ງເຮັດໃຫ້ພາກເງິນບໍລິຫານ ແລະ ລົງທຶນຂອງຫຼາຍກິດຈະກໍາບໍ່ໄດ້ປະຕິບັດ ຫຼື ປະຕິບັດ ຊັກຊ້າ; ໂດຍສະເພາະແມ່ນທຶນລົງທຶນໂຄງການໄດ້ເປັນຜົນສະທ້ອນໃນການປະຕິບັດໂຄງການ ຫຼື ເຮັດໃຫ້ ເຈົ້າຂອງທຶນຂາດຄວາມເຊື່ອໝັ້ນ ໃນການປະຕິບັດໂຄງການຮ່ວມມືກັບຕ່າງປະເທດແບບຍາວນານ.

- ການຂໍອະນຸມັດແຕ່ລະງວດໃນສົກນີ້ ຊັກຊ້າ; ເນື່ອງຈາກກະຊວງການເງິນໃຫ້ສັງລວມລາຍຈ່າຍ ຂອງທຸກ ຫົວໜ່ວຍການເງິນ ພ້ອມກັນ, ຊຶ່ງປັດຈຸບັນກະຊວງສຶກສາມີທັງໝົດ 29 ຫົວໜ່ວຍ ໃນນັ້ນມີ 15 ຫົວໜ່ວຍ ຕັ້ງຢູ່ຕ່າງແຂວງ. ການກໍານົດ ເພດານໃນແຕ່ລະງວດໃນພາກສ່ວນ 2 , ພາກສ່ວນ 6 ແລະ ບາງຮ່ວງຂອງ ພາກສ່ວນ 4 ; ເງິນເດືອນ, ເງິນນະໂຍບາຍ ແລະ ເງິນອູດໜູນ ຕ່າງໆ ນັ້ນ ຕ້ອງໄດ້ ຮັບໃນແຕ່ລະເດືອນ; ຕາມ ຫຼັກການແລ້ວ ເພດານເງິນໃນແຕ່ລະງວດ ຄວນແມ່ນ ກະຊວງ ກ່ຽວຂ້ອງ ເປັນຜູ້ ກໍານົດ; ເພາະຈະຮູ້ດີວ່າແຕ່ລະກິດຈະກໍາຈະດໍາເນີນເວລາໃດ ? ແລະ ຕ້ອງການເງິນເທົ່າໃດ?

- ໃນສົກງົບປະມານ 2003-04 ບັນດາກິດຈະກໍາ/ໂຄງການຕ່າງໆ ໃນພາກລົງທຶນໂດຍສະເພາະ ທີ່ເປັນທຶນ ຂອງລັດທັງໝົດນັ້ນ ເກືອບວ່າ ບໍ່ມີຫຍັງເໜັງຕີງເລີຍ, ໂຄງການ /ກິດຈະກໍາທີ່ສືບຕໍ່ນັ້ນບໍ່ມີຜູ້ສະໜອງໃດ ມາສືບຕໍ່ເນື່ອງຈາກວຽກທີ່ສໍາເລັດແລ້ວ ຜູ້ສະໜອງ ບໍ່ໄດ້ຮັບເງິນ ເຂົາເຈົ້າບໍ່ມີທຶນສືບຕໍ່ວຽກທີ່ຍັງຄ້າງ; ສ່ວນ ກິດຈະການ/ ໂຄງການໃໝ່ກໍ່ບໍ່ມີຜູ້ສົນໃຈ, ຖ້າສົນໃຈກໍ່ສະເໜີລາຄາສູງ, ບາງໂຄງການມີງົບປະມານແລ້ວ ແຕ່ບໍ່ມີແຜນວຽກແຜນງານລະອຽດເປັນເຫດໃຫ້ ການປະຕິບັດ ຊັກຊ້າ.

## *IV. ຕີລາຄາລວມ*

### 4.1 *ດ້ານດີ:*

1. ເຖິງວ່າສະພາບເສດຖະກິດ ຊີວິດການເປັນຢູ່ ຍັງພົບຄວາມຫຍຸ້ງຍາກ ແຕ່ພະນັກງານ, ຄູ- ອາຈານ ແລະ ນັກຮຽນ - ນັກສຶກສາກໍ່ຍັງມີແນວຄິດອຸ່ນອ່ຽນຕໍ່ໜ້າທີ່ວຽກງານເຊື່ອໝັ້ນ ຕໍ່ການນໍາພາຂອງ ພັກ-ລັດ ຕັດສິນໃຈຜ່ານຜ່າຂໍ້ຫຍຸ້ງຍາກ,
2. ການຈັດຕັ້ງຄຸ້ມຄອງໄດ້ຮັບການປັບປຸງເປັນເອກະພາບ ແຕ່ສູນກາງເຖິງທ້ອງຖິ່ນ ແລະ ມີລະບຽບ ແບບແຜນດີກວ່າເກົ່າ,
3. ການສຶກສາແຕ່ລະຊັ້ນ ແຕ່ລະສາຍ ທາງດ້ານປະລິມານ ແລະ ຄຸນນະພາບດີຂື້ນກວ່າເກົ່າເຊັ່ນ : ໄດ້ຂະຫຍາຍການສຶກສາໄປສູ່ເຂດ 47 ເມືອງທຸກກ່ວາໝູ່, ສະໜອງອຸປະກອນ ການຮຽນ-ການສອນ  ພັດທະນາຫຼັກສູດ, ພະນັກງານ ຄູ ອາຈານໄດ້ຮັບການອົບຮົມຫຼາຍສົມຄວນ,
4. ອໍານາດການປົກຄອງແຕ່ລະຂັ້ນ ແລະ ປະຊາຊົນບັນດາເຜົ່າເຫັນໄດ້ຄວາມໝາຍ ຄວາມສໍາຄັນຂອງ ການສຶກສາ ແລະ ໄດ້ໃຫ້ ຄວາມຮ່ວມມືໃນການພັດທະນາການສຶກສາ ນັບມື້ດີຂື້ນ ໂດຍສະເພາະໄດ້ ອໍານວຍຄວາມສະດວກໃຫ້ລູກຫຼານໄປໂຮງຮຽນ.

## 4.2 *ດ້ານອ່ອນ ແລະ ຂໍ້ຄົງຄ້າງ:*

ຄຽງຄູ່ກັບຈຸດດີ ແລະ ຜົນງານທີ່ໄດ້ກ່າວມາຂ້າງເທິງນັ້ນການພັດທະນາການສຶກສາໃນສົກຮຽນ 2003-2004 ຜ່ານມາກໍຍັງມີຈຸດອ່ອນ ແລະ ຂໍ້ຄົງຄ້າງບາງດ້ານເຊັ່ນວ່າ:

1. ພະນັກງານສຶກສາ, ຄູ-ອາຈານ ແລະ ນັກຮຽນ-ນັກສຶກສາຈໍານວນໜຶ່ງຍັງມີແນວຄິດທໍ້ ຖອຍຄ່ອງ ຄອຍງໍ້ງ່ຽງ, ມັກສົມທຽບຊັ່ງຊາ, ນໍ້າໃຈຮັບຜິດຊອບຕໍ່ໜ້າທີ່ວຽກງານຍັງບໍ່ທັນສູງ, ຄູປະລະໜ້າທີ່ກໍຍັງ ມີ, ນັກຮຽນ-ນັກສຶກສາຈໍານວນໜຶ່ງກໍຍັງມົ້ວສຸມກັບການເສບຢາບ້າ, ຫຼິ້ນກິນ ຟູມເຟືອຍ, ສ້າງເປັນ ກຸ່ມ ເປັນແກ້ງຂີ່ລົດໄວ, ຕີກັນໂດຍບໍ່ສົນໃຈຕໍ່ການຄົ້ນຄວ້າຮໍ່າຮຽນ.
2. ການສຶກສາຍັງແຕກໂຕນກັນຫຼາຍເກີນໄປລະຫ່ວາງຕົວເມືອງກັບຊົນນະບົດເດັກໃນເກນອາຍຸ 6-10 ປີ ຈໍານວນໜຶ່ງບໍ່ໄດ້ເຂົ້າໂຮງຮຽນ ແລະ ຄົນບໍ່ຮູ້ໜັງສືກໍຍັງມີຫຼາຍ.
3. ຄຸນນະພາບການສຶກສາເວົ້າລວມຍັງຕໍ່າ.

## 4.3 *ສາຍເຫດພາໃຫ້ມີຈຸດອ່ອນ.*

ຈຸດອ່ອນ ແລະ ຂໍ້ຄົງຄ້າງດັ່ງກ່າວແມ່ນມາຈາກຫຼາຍສາຍເຫດ ຊຶ່ງມີທັງສາຍເຫດໃນຕົວ ແລະ ນອກ ຕົວ ແຕ່ສາຍເຫດທີ່ມີລັກສະນະຕັດສິນກວ່າໝູ່ນັ້ນແມ່ນ:

1. ຍ້ອນເສດຖະກິດ ຊີວິດການເປັນຢູ່ຂອງພະນັກງານ ແລະ ປະຊາຊົນເຮົາຝືດເຄືອງ,
2. ຍ້ອນທີ່ຕັ້ງພູມລໍາເນົາຂອງປະຊາຊົນ ໂດຍສະເພາະຢູ່ເຂດຊົນນະບົດຍັງບໍ່ໝັ້ນຄົງ, ຢູ່ກະແຈກ ກະຈາຍ ແລະ ມັກຍົກຍ້າຍບ້ານໄປ-ມາ ເດັກບໍ່ມີໂອກາດໄດ້ເຂົ້າຮຽນເປັນປົກກະຕິ,

3. ຍ້ອນການລົງທຶນໃສ່ການສຶກສາ ຍັງບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງການ ແລະ ການນຳໃຊ້ທຶນ ຍັງມີຄວາມຫຍຸ້ງຍາກ,
4. ຍ້ອນການສົມທົບການສຶກສາໃນໂຮງຮຽນກັບການສຶກສາໃນຄອບຄົວ ແລະ ສັງຄົມຍັງບໍ່ທັນເຮັດ ໄດ້ດີ, ພໍ່ແມ່ ແລະ ຜູ້ປົກຄອງເດັກຈຳນວນໜຶ່ງຍັງບໍ່ເຫັນຄວາມສຳຄັນຂອງການສຶກສາ,
5. ຍ້ອນລະບຽບການ ແລະ ນະໂຍບາຍທີ່ວາງອອກຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດເທົ່າທີ່ຄວນ,
6. ຍ້ອນສິ່ງແວດລ້ອມທາງສັງຄົມບໍ່ເອື້ອອຳນວຍໃຫ້ຜູ້ສອນ-ຜູ້ຮຽນ,
7. ຄວາມຮູ້ຄວາມສາມາດຂອງພະນັກງານສຶກສາ, ຄູ-ອາຈານ ຈຳນວນໜຶ່ງຍັງຈຳກັດ, ຈຳນວນຄູກໍ ຍັງບໍ່ພຽງພໍ, ຄວາມຮັບຜິດຊອບຍັງບໍ່ທັນສູງ, ແບບແຜນວິທີເຮັດວຽກລວມທັງວິທີສິດສອນຄວາມຮູ້ຂອງ ຄູຍັງໄປຕາມຄວາມຊິນເຄີຍເກົ່າ ອັນສຳຄັນແມ່ນຄູບໍ່ຮັກສາອາຊີບຄູ.

## 4.4. *ຖອດຖອນບົດຮຽນ* :

ຜ່ານການຈັດຕັ້ງປະຕິບັດແຜນການພັດທະນາການສຶກສາສົກຮຽນ 2003-04 ສາມາດສັງລວມ ແລະ ວາງວິທີການແກ້ໄຂ ໄດ້ດັ່ງນີ້:

1. ເພີ່ມທະວີການສຶກສາ ອົບຮົມແນວຄິດ ໃນຖັນແຖວພະນັກງານ ຄູ-ອາຈານ, ນັກຮຽນ-ນັກສຶກສາຢ່າງ ກວ້າງຂວາງ ເລິກ ເຊິ່ງດ້ວຍຫຼາຍຮູບການ ທີ່ເໝາະສົມ.
2. ພັດທະນາຄູໃຫ້ມີຄວາມຮູ້-ຄວາມສາມາດ, ປະຕິບັດນະໂຍບາຍຕໍ່ຄູຢ່າງເໝາະສົມ, ສັບຊ້ອນ ແລະ ນຳໃຊ້ຄູໃຫ້ຖືກກັບຄວາມ ຕ້ອງການຕົວຈິງ.
3. ເຮັດໃຫ້ການສຶກສາເປັນພາລະກິດຂອງທົ່ວປວງຊົນ, ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ທຸກ ພາກສ່ວນເຂົ້າຮ່ວມພັດ ທະນາການສຶກສາ.
4. ມີນະໂຍບາຍ ແລະ ມາດຕະຖານອັນເໝາະສົມ ເພື່ອສືບຕໍ່ຂະຫຍາຍການສຶກສາໄປສູ່ເຂດພູດອຍ ຫ່າງ ໄກສອກຫຼີກ ແລະ ເຂດທຸກຍາກ.
5. ສືບຕໍ່ລົງທຶນໃສ່ການສຶກສາຢ່າງເໝາະສົມພ້ອມທັງປັບປຸງກົນໄກການນຳໃຊ້ທຶນຮອນໃຫ້ມີການຄ່ອງຕົວ ແລະ ມີປະສິດທິຜົນ.
6. ການພັດທະນາການສຶກສາຕ້ອງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ.
7. ເພີ່ມທະວີການນຳພາຂອງຄະນະພັກ, ອຳນາດການປົກຄອງລັດແຕ່ລະຂັ້ນຕໍ່ວຽກງານສຶກສາສູງກວ່າ ເກົ່າ.

**ແຜນງົບປະມານສຶກປີ 2004-2005** (ຫົວໜ່ວຍລ້ານກີບ)

| ລໍາດັບ | ລາຍການ | ແຜນການ | ແຜນ 2004-2005 | | |
|---|---|---|---|---|---|
| | | 2003-04 | ລວມ | ລັດ | ວິຊາການ |
| 1 | ສູນກາງຄຸ້ມຄອງ | 268.2 | 358.40 | 356.56 | 0.84 |
| 1.1 | - ລາຍຈ່າຍບໍລິຫານ | 24.26 | 63.50 | 62.66 | 0.84 |
| | ພາກ 10 ລາຍຈ່າຍຄ່າງເງິນເດືອນພະນັກງານ | 7.93 | 12.89 | 12.86 | 0.03 |
| | ພາກ 11 ລາຍຈ່າຍເງິນອຸດໜູນ, ເງິນນະໂຍບາຍ ແລະ ເບ້ຍລ້ຽງຕ່າງໆ | 10.29 | 14.73 | 14.73 | |
| | ພາກ 12 ລາຍຈ່າຍຮັບໃຊ້ກິງຈັກບໍລິຫານຂອງລັດ | 5.33 | 18.95 | 18.33 | 0.62 |
| | ພາກ 13 ລາຍຈ່າຍດັດສົມ ສົ່ງເສີມ, ຊ່ວຍໜູນ ແລະ ເງິນບໍານານ | 0.50 | 11.12 | 11.12 | |
| | ພາກ 16 ລາຍຈ່າຍຊື້, ເຊົ່າຊັບສົມບັດຄົງທີ່ຮັບໃຊ້ບໍລິຫານ | 0.21 | 5.81 | 5.62 | 0.19 |
| 1.2 | ພາກ 17 ລາຍຈ່າຍການລົງທຶນຂອງລັດ | 244.46 | 294.90 | 294.40 | 0.00 |
| 1.2.1 | + ທຶນພາຍໃນ | 10.00 | 5.50 | 5.50 | |
| 1.2.2 | + ທຶນຕ່າງປະເທດ | 234.64 | 289.40 | 289.40 | |
| 2 | ທ້ອງຖິ່ນຄຸ້ມຄອງທີ່ຂຶ້ນກັບສຶກສາ | 336.00 | 463.27 | | |
| 2.1 | - ລາຍຈ່າຍບໍລິຫານ | 209.51 | | | |
| | ພາກ 10 ລາຍຈ່າຍຄ່າງເງິນເດືອນພະນັກງານ | 153.15 | | | |
| | ພາກ 11 ລາຍຈ່າຍເງິນອຸດໜູນ, ເງິນນະໂຍບາຍ ແລະ ເບ້ຍລ້ຽງຕ່າງໆ | 11.41 | | | |
| | ພາກ 12 ລາຍຈ່າຍຮັບໃຊ້ກິງຈັກບໍລິຫານຂອງລັດ | 44.95 | | | |
| | ພາກ 13 ລາຍຈ່າຍດັດສົມ ສົ່ງເສີມ, ຊ່ວຍໜູນ ແລະ ເງິນບໍານານ | | | | |
| | ພາກ 16 ລາຍຈ່າຍຊື້, ເຊົ່າຊັບສົມບັດຄົງທີ່ຮັບໃຊ້ບໍລິຫານ | | | | |
| 2.2 | ພາກ 17 ລາຍຈ່າຍການລົງທຶນຂອງລັດ | 126.49 | | | |
| 2.2.1 | + ທຶນພາຍໃນ | 47.03 | | | |
| 2.2.2 | + ທຶນຕ່າງປະເທດ | 79.46 | | | |
| 3 | ລວມລາຍຈ່າຍສຶກສາ | 604.44 | 821.67 | | |
| 3.1 | - ລາຍຈ່າຍບໍລິຫານ | 233.49 | 314.72 | | |

| | | | | | |
|---|---|---|---|---|---|
| | ພາກ 10 ລາຍຈ່າຍຄັງເງິນເດືອນພະນັກງານ | 161.08 | 219.35 | | |
| | ພາກ 11 ລາຍຈ່າຍເງິນອຸດໜູນ, ເງິນນະໂຍບາຍ ແລະ ເບ້ຍລ້ຽງຕ່າງໆ | 16.95 | 32.16 | | |
| | ພາກ 12 ລາຍຈ່າຍຮັບໃຊ້ກົງຈັກບໍລິຫານຂອງລັດ | 55.46 | 72.21 | | |
| | ພາກ 13 ລາຍຈ່າຍດັດສົມ ສົ່ງເສີມ, ຊ່ວຍໜູນ ແລະ ເງິນບຳລຸງ | | | | |
| | ພາກ 16 ລາຍຈ່າຍຊື້, ເຊົ່າຊັບສົມບັດຄົງທີ່ຮັບໃຊ້ບໍລິຫານ | | | | |
| 3.2 | ພາກ 17 ລາຍຈ່າຍການລົງທຶນຂອງລັດ | 370.95 | 506.93 | | |
| 3.2.1 | + ທຶນພາຍໃນ | 57.03 | 77.94 | | |
| 3.2.2 | + ທຶນຕ່າງປະເທດ | 313.92 | 428.99 | | |
| | GDP | 24,464 | 29,770 | | |
| 4 | ລວມລາຍຈ່າຍຂອງລັດຖະບານ | 5,619.99 | 6,847.10 | | |
| 4.1 | - ລາຍຈ່າຍບໍລິຫານ | 2,677.19 | 3,261.75 | | |
| 4.2 | - ລາຍຈ່າຍລົງທຶນ | 2,942.80 | 3,585.35 | | |
| 4.2.1 | + ທຶນພາຍໃນ | 783.80 | 954.94 | | |
| 4.2.2 | + ທຶນຕ່າງປະເທດ | 2,159 | 2,630.41 | | |
| | - ງົບສຶກສາ/GDP | 2.47% | 2.76% | | |
| | - ງົບສຶກສາ/ງົບລັດຖະບານ | 10.76% | 12% | | |
| | - ບໍລິຫານສຶກສາ/ບໍລິຫານຂອງລັດຖະບານ | 8.72% | 9.65% | | |
| | - ລົງທຶນສຶກສາ/ລົງທຶນຂອງລັດຖະບານ | 12.61% | 14.14% | | |
| | - ພາຍໃນສຶກສາ/ພາຍໃນຂອງລັດຖະບານ | 7.28% | 8.16% | | |
| | - ຕ່າງປະເທດສຶກສາ/ຕ່າງປະເທດລັດຖະບານ | 14.54% | 16.13% | | |
| | - ບໍລິຫານປົກກະຕິຂອງສຶກສາ | 38.63% | 38.30% | | |
| | - ລົງທຶນສຶກສາ | 61.37% | 61.70% | | |
| | ລວມ | 100% | 100% | | |

## ພາກທີສອງ
## ແຜນພັດທະນາການສຶກສາປະຈຳສົກຮຽນ 2004-2005

ແຜນພັດທະນາການສຶກສາສົກຮຽນ 2004-2005 ຊຶ່ງແມ່ນພາກສ່ວນໜຶ່ງທີ່ສຳຄັນຂອງແຜນພັດທະນາ ຊັບພະຍາກອນມະນຸດ ທີ່ເປັນປີສຸດທ້າຍໃນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ 5 ປີ ຄັ້ງທີ V . ສະເພາະສົກຮຽນ 2004-05 ນີ້ ການພັດທະນາການສຶກສາຍັງສືບຕໍ່ປະຕິບັດຕາມ 3 ແຜນງານດັ່ງນີ້ :

1-ແຜນງານຂະຫຍາຍໂອກາດການເຂົ້າຮຽນ

2-ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ

3-ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ

### *1. ທິດທາງໜ້າທີ່ ແລະ ລະດັບຄາດໝາຍລວມ*

ເພື່ອເຮັດໃຫ້ ການຈັດຕັ້ງປະຕິບັດແຜນຍຸດທະສາດການສຶກສາ ຮອດປີ 2020 ສຳເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້ ສຳລັບປີ 2005. ໃນ ສົກຮຽນ 2004-2005 ຂະແໜງການສຶກສາຈະດຳເນີນຕາມທິດທາງໜ້າທີ່ ແລະ ຄາດໝາຍລວມ ດັ່ງຕໍ່ໄປນີ້:

### *1.1 ທິດທາງ ໜ້າທີ່ລວມ*

1. ພັດທະນາການສຶກສາໃຫ້ສອດຄ່ອງ ແລະ ຕິດພັນກັບການພັດທະນາເສດຖະກິດ-ສັງຄົມຂອງຊາດ ໂດຍສະເພາະໃຫ້ສອດຄ່ອງກັບແຜນພັດທະນາການສຶກສາເພື່ອທຸກຄົນ, ແຜນງານການລົບລ້າງຄວາມທຸກຍາກຂອງຊາດ ແລະ ທັງສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ.
2. ສ້າງເງື່ອນໄຂໃຫ້ ທຸກຄົນມີໂອກາດໄດ້ຮັບການສຶກສາຕະຫຼອດຊີວິດ ແລະ ໄປຕາມທ່າອ່ຽງຂອງຍຸກສະໄໝ ແລະ ມາດຕະຖານລວມຂອງສາກົນ.
3. ພັດທະນາການສຶກສາໃຫ້ເປັນລະບົບຕໍ່ເນື່ອງໃນທຸກຊັ້ນ ທຸກສາຍ ແລະ ຮອບດ້ານ: ຄຸນສົມບັດສຶກສາ , ປັນຍາສຶກສາ, ພະລະສຶກສາ, ສິລະປະສຶກສາ ແລະ ການສຶກສາອອກແຮງງານ, ໂດຍສະເພາະປະຕິ ບັດການປະຖົມສຶກສາພາກບັງຄັບ ແລະ ການສຶກສາ ເພື່ອໝົດທຸກຄົນ
4. ສົ່ງເສີມໃຫ້ເອກະຊົນໄດ້ເຂົ້າຮ່ວມໃນການພັດທະນາການສຶກສາເພື່ອເຮັດໃຫ້ການສຶກສາກາຍເປັນພາລະກິດຂອງທົ່ວປວງຊົນ.

### *1.2 ລະດັບຄາດໝາຍລວມ*

1. ເຮັດໃຫ້ເດັກໃນເກນອາຍຸ 3-5 ປີ ໄດ້ເຂົ້າຮຽນໃນໂຮງຮຽນອະນຸບານ 9%.
2. ເພີ່ມອັດຕາເຂົ້າຮຽນສຸດທິ ຂອງເດັກໃນຊັ້ນປະຖົມຂື້ນ ເປັນ 84%.
3. ຫຼຸດຜ່ອນອັດຕາການຄ້າງຫ້ອງລົງ 1% ແລະ ຫຼຸດຜ່ອນອັດຕາການປະລະລົງ 1% ຂອງປີ ປັດຈຸບັນ
4. ເພີ່ມອັດຕາເຂົ້າຮຽນລວມຂອງຊັ້ນມັດທະຍົມຕອນຕົ້ນໃຫ້ເປັນ 58% ແລະ ຊັ້ນມັດທະຍົມຕອນປາຍ ເປັນ 35% .
5. ລົບລ້າງ ຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນ ໃນກຸ່ມເປົ້າໝາຍອາຍຸແຕ່ 15-40 ປີ ໃຫ້ໄດ້ 78% ແລະ ກຸ່ມ 15 ປີ ຂຶ້ນໄປໃຫ້ໄດ້ 73%.
6. ເພີ່ມອັດຕາສ່ວນນັກສຶກສາໃຫ້ໄດ້ 680 ຕໍ່ພົນລະເມືອງ 100,000 ຄົນ(ນັບທັງພາກລັດ - ເອກະຊົນ).

## *2. ແຜນງານພັດທະນາການສຶກສາ*

### *2.1 ແຜນງານຂະຫຍາຍໂອກາດການເຂົ້າຮຽນ*

1. ປັບປຸງ ແລະ ຂະຫຍາຍຫ້ອງຮຽນຂອງທຸກຊັ້ນ ທຸກສາຍ ໂດຍສະເພາະໂຮງລ້ຽງເດັກ - ໂຮງຮຽນອະນຸບານ ຕິດກັບໂຮງຮຽນປະຖົມໃຫ້ຫລາຍຂຶ້ນ, ສ້າງຕັ້ງໂຮງຮຽນປະຖົມໃນເຂດຫ່າງໄກສອກຫລີກ ແລະ ເຂດທຸກຍາກດ້ວຍຫລາຍຮູບການ.
2. ຂະຫຍາຍໂຮງຮຽນປະຖົມທີ່ບໍ່ສົມບູນ ໃຫ້ເປັນໂຮງຮຽນປະຖົມສົມບູນ ໃນບ່ອນທີ່ມີເງື່ອນໄຂ ດ້ວຍທຶນ ກູ້ຢືມ(ໂຄງການເດັກຍິງມີ 93 ຫຼັງ) ; ດ້ວຍທຶນຊ່ວຍເຫຼືອລ້າ ຈາກທະນາຄານໂລກ (ໂຄງການພັດທະນາການສຶກສາໄລຍະ II ຈຳນວນ 35 ຫຼັງ) ແລະ ຈາກອົງການໄຈກາ ຈຳນວນ 66 ຫຼັງ.
3. ລະດົມໃຫ້ອຳນາດການປົກຄອງ ແລະ ປະຊາຊົນປະກອບສ່ວນສ້າງ ແລະ ປົກປັກຮັກສາໂຮງຮຽນ, ບ່ອນໃດມີຄວາມຈຳເປັນ ກໍ່ສ້າງຫໍພັກໃກ້ໂຮງຮຽນ.
4. ສັບຊ້ອນ ແລະ ຈັດວາງຄູໃຫ້ພຽງພໍ ດ້ວຍຮູບການ ຈັດຕັ້ງການສອນຫ້ອງຄວບ ໃນເຂດທີ່ມີຈຳນວນນັກຮຽນໜ້ອຍ ຫຼື ຫ້ອງຮຽນບໍ່ພຽງພໍ.
5. ປຸກສ້າງໂຮງຮຽນກິນນອນຊົນເຜົ່າດ້ວຍທຶນຊ່ວຍ ເຫຼືອຂອງລັດຖະບານຫວຽດນາມ ຢູ່ແຂວງ ທົ່ວພັນ ແລະ ຊຽງຂວາງ.
6. ຊຸກຍູ້ສົ່ງເສີມໃຫ້ເອກະຊົນສ້າງໂຮງຮຽນ ແລະ ສົ່ງລູກຫຼານໄປຮຽນດ້ວຍທຶນສ່ວນຕົວໃຫ້ນັບມື້ຫລາຍຂຶ້ນ.
7. ປະເມີນຜົນການຮຽນຮ່ວມ 2 ພາສາ ລາວ-ຝຣັ່ງ ເພື່ອປັບປຸງການສອນ-ການຮຽນໃຫ້ດີຂຶ້ນ.

8. ສືບຕໍ່ ສົ່ງເສີມການຮຽນຮ່ວມລະຫວ່າງເດັກປົກກະຕິ ແລະ ເດັກພິການໃຫ້ຂະຫຍາຍຕົວດີກວ່າເກົ່າ.
9. ສົ່ງເສີມຮູບແບບການສຶກສາທາງໄກເພື່ອສ້າງໂອກາດໃຫ້ປະຊາຊົນຢູ່ເຂດຫ່າງໄກສອກຫລີກໄດ້ຮຽນ
10. ສືບຕໍ່ປະຕິບັດໂຄງການພັດທະນາການສຶກສາຂັ້ນພື້ນຖານຢູ່ເມືອງເຟືອງ ແລະ ເມືອງຊະນະຄາມ ຂອງແຂວງ ວຽງຈັນດ້ວຍທຶນຊ່ວຍເຫຼືອລ້າຈາກອົງການ ຊີດາ.
11. ສືບຕໍ່ປະຕິບັດໂຄງການທົດລອງ ສະໜອງອາຫານກາງເວັນ ຮ່ວມກັບອົງການອາຫານໂລກໃນໂຮງຮຽນສາມັນສຶກສາ ຢູ່ 9 ເມືອງຂອງ 3 ແຂວງ ພາກເໜືອ ( ອຸດົມໄຊ, ຫລວງນ້ຳທາ ແລະ ຜົ້ງສາລີ).
12. ສືບຕໍ່ມີນະໂຍບາຍໃຫ້ເບັ້ຽລ້ຽງແກ່ນັກຮຽນເກັ່ງ ແຕ່ທຸກຍາກ ທີ່ກຳລັງຮຽນໃນໂຮງຮຽນສາມັນ ແລະ ສະຖາບັນການສຶກສາແຫ່ງຕ່າງໆ ດ້ວຍທຶນສົ່ງເສີມຂອງລັດ, ສ່ວນບຸກຄົນ ແລະ ຂອງອົງການຈັດຕັ້ງຕ່າງໆ ນັບທັງພາຍໃນ ແລະ ຕ່າງປະ ເທດ ຕາມລະບຽບທີ່ໄດ້ກຳນົດໄວ້.
13. ປັບປຸງ ສູນປະຈຳພາກ,ໂຮງຮຽນບຳລຸງທີ່ມີຄວາມຈຳເປັນ, ສູນຝຶກອົບຮົມວິຊາຊີບ ແລະ ສູນສຶກສາຊຸມຊົນ ໃຫ້ໄດ້ເຄື່ອນໄຫວ ເປັນປົກກະຕິ.
14. ແນະແນວວິຊາຊີບໃຫ້ນັກຮຽນ-ນັກສຶກສາ ມີຄວາມຮູ້ ຄວາມສາມາດເພື່ອເລືອກວິຊາຮຽນຕໍ່ຢູ່ພາຍໃນ ແລະ ຕ່າງປະເທດ.
15. ສົ່ງເສີມການຈັດຕັ້ງຮຳຮຽນ ສາຍພິເສດ (ພາກບ່າຍ-ພາກຄ່ຳ ຫຼື ວັນເສົາ ແລະ ອາທິດ) ໃນໂຮງຮຽນອາຊີວະສຶກສາ ແລະ ການສຶກສາຊັ້ນສູງ.
16. ສ້າງຕັ້ງໂຮງຮຽນວິຊາຊີບ 3 ແຫ່ງ ຢູ່ແຂວງຊຽງຂວາງ, ຫົວພັນ ແລະ ນະຄອນຫຼວງວຽງຈັນ, ສ້າງຕັ້ງໂຮງຮຽນກຽມນັກສຶກສາຊົນເຜົ່າ ແລະ ນັກຮຽນທີ່ມີພອນສະຫວັນຢູ່ ມະຫາວິທະຍາໄລແຫ່ງຊາດ, ແລະ ສ້າງແຜນແມ່ບົດການສ້າງຕັ້ງໂຮງຮຽນ ອາຊີວະສຶກສາ ຢູ່ເຊກອງ, ອັດຕະປື ແລະ ອຸດົມໄຊ.
17. ສືບຕໍ່ພັດທະນາມະຫາວິທະຍາໄລ ສຸພານຸວົງ(ທີ່ ຫລວງພະບາງ), ມະຫາວິທະຍາໄລ ຈຳປາສັກ(ທີ່ຈຳປາສັກ) ໃຫ້ສາມາດຮອງຮັບນັກຮຽນເຂົ້າໃຫມ່ໄດ້ຕາມແຜນການ ແລະ ຄົ້ນຄວ້າເງື່ອນໄຂໃນການ ສ້າງວິທະຍາໄລເຕັກນິກ ຢູ່ແຂວງສະຫວັນນະເຂດ.
18. ສ້າງຕັ້ງ ຄະນະວິຊາສະຖາປັດ ແລະ ພາກວິຊາໃໝ່ ຄື:

- - ການພົວພັນຕ່າງປະເທດຢູ່ຄະນະນິຕິສາດ-ລັດຖະສາດ,
- - ການທ່ອງທ່ຽວຢູ່ຄະນະເສດຖະສາດ-ການຄຸ້ມຄອງ,
- - ຄອມພິວເຕີຢູ່ຄະນະວິທະຍາສາດ-ທຳມະຊາດ,
- - ການປຸງແຕ່ງອາຫານ ຢູ່ຄະນະກະເສດສາດ,
- - ສູນສິ່ງແວດລ້ອມ ຢູ່ໃນຄະນະວິທະຍາສາດສັງຄົມ.

19. ສ້າງຕັ້ງ 4 ພະແນກໃໝ່ຄື : ພາສາເກົາຫຼີ, ພາສາຍີ່ປຸ່ນ, ພາສາຈີນ ແລະ ພະແນກສິ່ມວນຊົນ.

20. ເຂົ້າຮ່ວມແຂ່ງຂັນມະຫາກຳກິລາແຫ່ງຊາດ ຄັ້ງທີ VII ທີ່ແຂວງສະຫວັນນະເຂດ.

21. ຊຸກຍູ້ການເຄື່ອນໄຫວຝຶກແອບ ແລະ ແຂ່ງຂັນກິລາໃນໂຮງຮຽນ, ມີການຈັດຕັ້ງສະໂມສອນກິລາຢູ່ທຸກຂັ້ນ ພ້ອມທັງມີການຈັດຕັ້ງ ເຄື່ອນໄຫວຢ່າງຕໍ່ເນື່ອງ ເພື່ອກະກຽມໃຫ້ງານມະຫາກຳກິລານັກຮຽນ ມັດທະຍົມ ທົ່ວປະເທດຄັ້ງທີ III ປີ 2006 ທີ່ແຂວງຫຼວງພະບາງ.
22. ສ້າງຕັ້ງຄະນະກຳມະການຮັບຜິດຊອບເຄື່ອນໄຫວເພື່ອສະໜັບສະໜູນເອົາປີ 2005 ເປັນປີ ສາກົນແຫ່ງການກິລາ ແລະ ພະລະສຶກສາ.
23. ສ້າງຕັ້ງພະແນກຕິດຕາມ ແລະ ປະເມີນຜົນຢູ່ສູນພັດທະນາຄູ ແລະ ໂຮງຮຽນສ້າງຄູ.

### *2.2 ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ :*

1. ປັບປຸງຫລັກສູດ, ປຶ້ມແບບຮຽນທຸກຊັ້ນທຸກສາຍທັງໃນລະບົບ ແລະ ນອກລະບົບໂຮງຮຽນໃຫ້ເໝາະສົມ ກວ່າເກົ່າຍົກຄຸນນະພາບ ຂອງການສຶກສາໃຫ້ດີຂຶ້ນ.
2. ສຸມໃສ່ ປັບປຸງຫລັກສູດວິຊາຄະນິດສາດ ແລະ ວິຊາຄຸນສົມບັດໂດຍແຍກວິຊາຄຸນສົມບັດເປັນວິຊາໜຶ່ງ ຕ່າງຫາກ ສຳລັບຊັ້ນປະຖົມສຶກສາ.
3. ຄົ້ນຄວ້າສ້າງຫລັກສູດປະລິນຍາຕີສາຍສ້າງຄູອະນຸບານ ແລະ ຄູປະຖົມ.
4. ສະໜອງປຶ້ມແບບຮຽນ ປຶ້ມຄູ່ມືຄູ, ປຶ້ມອ່ານເສີມ ພ້ອມທັງອຸປະກອນຮັບໃຊ້ການສອນ ການຮຽນໃຫ້ພຽງພໍກັບຄວາມຕ້ອງການອັນຈຳເປັນ.
5. ຄົ້ນຄວ້າສ້າງໂຄງການສິດສອນພາສາອັງກິດຢູ່ຊັ້ນປະຖົມສຶກສາ.
6. ຄົ້ນຄວ້າກ່ຽວກັບການເພີ່ມປີຮຽນ 1 ປີ ໃນຫລັກສູດ ຊັ້ນມັດທະຍົມສຶກສາ.
7. ປັບປຸງຫຼັກສູດການເຄື່ອນໄຫວເສີມຫລັກສູດ ແລະ ນອກຫລັກສູດເຊັ່ນ : ສອບເສັງນັກຮຽນເກັ່ງ, ປະຊາກອນສຶກສາ, ກິລາ, ສິລະປະສຶກສາ, ເອດສຶກສາ, ສຸຂະສຶກສາ, ເຕັກໂນໂລຊີຂ່າວສານ (ICT) ແລະ ການຕ້ານສິ່ງເສບຕິດໃນໂຮງຮຽນ.
8. ຊຸກຍູ້ການສ້າງຫລັກສູດທ້ອງຖິ່ນ 20% ໃຫ້ໄດ້.
9. ຄົ້ນຄວ້າ ຫລັກສູດແບ່ງສາຍ ໃນຊັ້ນມັດທະຍົມຕອນປາຍ.
10. ປັບປຸງ ແລະ ສົ່ງເສີມການສ້າງກຸ່ມໂຮງຮຽນ ແລະ ການສ້າງຄູນິເທດໃຫ້ພຽງພໍຕາມຄວາມຕ້ອງການ ໃນແຕ່ ລະຊັ້ນ ແຕ່ລະສາຍ.
11. ຄົ້ນຄວ້າ ປັບປຸງຄືນຫລັກສູດ (8+3), (11+2), (11+3) ຂອງອາຊີວະສຶກສາໃຫ້ມີຄວາມສອດຄ່ອງ ແລະ ມີການຕໍ່ເນື່ອງ ເພື່ອສາມາດ ເຊື່ອມຕໍ່ໃສ່ຫລັກສູດຊັ້ນສູງ ແລະ ປະລິນຍາຕີໄດ້.

12. ຈັດຕັ້ງປະຕິບັດຫລັກສູດປະລິນຍາຕີລະບົບ (1+4),(0+5) ແລະ ໂຄງການຫຼັກສູດລະດັບປະລິນຍາໂທ ຢູ່ 6 ຄະນະວິຊາ ຄື: ວິທະຍາສາດແພດສາດ, ເສດຖະສາດ-ການຄຸ້ມຄອງ, ວິທະຍາສາດ-ທຳມະຊາດ, ສຶກສາສາດ, ວິສະວະກຳສາດ ແລະ ຄະນະປ່າໄມ້.
13. ຈັດຕັ້ງອົບຮົມຫຼັກສູດໃໝ່ໃຫ້ພະນັກງານຄູຢູ່ໂຮງຮຽນພະລະສຶກສາເພື່ອກະກຽມຍົກລະດັບໂຮງຮຽນຊັ້ນກາງ ເປັນວິທະຍາໄລ ພະລະສຶກສາ (ຊັ້ນສູງ) ໃນ ປີ 2006.
14. ຮຽບຮຽງຫລັກສູດການຝຶກອົບຮົມຜູ້ບໍລິຫານການສຶກສາຄືນໃຫມ່.

## *1. ການປັບປຸງວິທີການສອນຂອງຄູ*

1. ສືບຕໍ່ ບຳລຸງຄູທີ່ບໍ່ໄດ້ມາດຖານໃນໂຄງການຮ່ວມມືກັບອົງການຈັດຕັ້ງສາກົນ ປີທີ 1 ຈຳນວນ 620 ຄົນ ແລະ ປີທີ 2ຈຳນວນ 768 ຄົນ, ປີທີ 3 ຈຳນວນ 63 ຄົນ.
2. ບຳລຸງຄູປະຈຳການ 1,113 ຄົນໃນ 3 ວິຊາ: ວິຊາເລກ, ພາສາລາວ ແລະ ໂລກອ້ອມຕົວໃນຊັ້ນປະຖົມ.
3. ຈັດຕັ້ງ ການບຳລຸງຄູແບບ ເຮັ່ງຮີບໃຫ້ ແຂວງຜົ້ງສາລີຈຳນວນ 30 ຄົນ.
4. ສືບຕໍ່ກໍ່ສ້າງຄູ ຊົນເຜົ່າໃຫ້ເຂດຊົນເຜົ່າ ຫ່າງໄກສອກຫຼີກ.
5. ເອົາໃຈໃສ່ປະຕິບັດນະໂຍບາຍຕ່າງໆ ທີ່ມີແລ້ວຕໍ່ຄູໃຫ້ຄົບຖ້ວນ ເຊັ່ນ: ເງິນເດືອນ, ເງິນນະໂຍບາຍເຂດພູດອຍ, ສອນຫ້ອງຄວບ, ເງິນຄູອາສາສະໝັກ ແລະ ອື່ນໆ.
6. ສືບຕໍ່ອົບຮົມວິທີສິດສອນຫ້ອງຄວບໃນຊັ້ນປະຖົມສຶກສາ ແລະ ວິທີສິດສອນແບບໃໝ່ໃຫ້ຄູທຸກຊັ້ນທຸກສາຍ ທັງພາກລັດ ພາກເອກະຊົນ
7. ສືບຕໍ່ວິທີສິດສອນພາສາລາວໃຫ້ເດັກຊົນເຜົ່າໃນເຂດພູດອຍ ຫ່າງໄກ ສອກຫຼີກ.
8. ເຝິກອົບຮົມຄູຝຶກວິຊາຊີບໃຫ້ພະນັກງານ ແລະ ພູມປັນຍາໃນທ້ອງຖິ່ນເພື່ອສືບຕໍ່ເຜີຍແຜ່ຄວາມຮູ້ດ້ານ ອາຊີບໃຫ້ປະຊາຊົນເພື່ອພັດທະນາຄຸນນະພາບຊີວິດເຂົາເຈົ້າ.

## *2. ການກວດກາການສຶກສາ*

1. ດຳເນີນການກວດກາ ແລະ ປະເມີນຜົນການສຶກສາທາງດ້ານວິຊາການ ເຊັ່ນ: ການຈັດການຮຽນການສອນ, ການປະຕິບັດຫຼັກສູດໂຄງການ ນັບທັງການສອບເສັງເລື່ອນຊັ້ນ-ເລື່ອນຂັ້ນ ໃນທຸກຊັ້ນ, ທຸກສາຍ ແລະ ທຸກລະບົບຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ.
2. ກວດກາ ການຈັດຕັ້ງ ປະຕິບັດບັນດາມະຕິ ຄຳສັ່ງ, ລະບຽບຫລັກການ ແລະ ກົດໝາຍຂອງລັດໃຫ້ເປັນລະບົບ ຕໍ່ເນື່ອງ ພ້ອມທັງສະຫຼຸບ ລາຍງານຜົນຂອງການກວດກາໃຫ້ຂັ້ນເທິງຢ່າງເປັນປົກກະຕິ.
3. ຈັດຕັ້ງຝຶກອົບຮົມວຽກງານກວດກາການສຶກສາໃຫ້ວິຊາການ ແລະ ູກວດກາການສຶກສາຂັ້ນແຂວງ.

4. ພົວພັນ ປະສານສົມທົບກັບບັນດາກົມທີ່ກ່ຽວຂ້ອງ ເພື່ອດຳເນີນການກວດກາການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍທາງດ້ານງົບປະມານ, ໂຄງການ ແລະ ລາຍຮັບ ວິຊາການ ຕາມສະຖາບັນການສຶກສາຕ່າງໆ
5. ປັບປຸງ ບັນດາເອກະສານວິຊາການຕ່າງໆ ເພື່ອແຈກຢາຍໃຫ້ຄະນະກວດກາການສຶກສາຂັ້ນແຂວງ.

### *2.3. ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ*

#### *2.3.1 ການຄຸ້ມຄອງການເມືອງແນວຄິດ:*

1. ຕິດຕາມ ເກັບກຳສະຖິຕິ ສະພາບແນວຄິດ ຈິດໃຈ ແລະ ການເຄື່ອນໄຫວວຽກງານຂອງພະນັກງານ, ຄູ ອາຈານ, ນັກຮຽນ-ນັກສຶກສາ ໃນຂອບເຂດຕົນຮັບຜິດຊອບໃຫ້ແໜ້ນ ຖືກຕ້ອງ ຊັດເຈນ,
2. ເອົາໃຈໃສ່ສຶກສາອົບຮົມແນວຄິດການເມືອງດ້ວຍຫຼາຍຮູບແບບ ເລິກເຊິ່ງ ແລະ ເຮັດຢ່າງລຽນຕິດເຂົ້າໃນທຸກກິດຈະກຳເຊັ່ນ : ການສອນ-ການຮຽນ, ການປາທະກະຖາໃນວັນສຳຄັນຂອງຊາດ, ການ ໂຮມ ຊຸມນຸມ ຕ່າງໆ, ການສຳຫຼວດກວດກາປະຈຳອາທິດ, ປະຈຳເດືອນ, ປະຈຳປີ ...
3. ຊຸກຍູ້ໃຫ້ອົງການຈັດຕັ້ງມະຫາຊົນຕ່າງໆເຊັ່ນ : ສະຫະພັນແມ່ຍິງ,ຊາວໜຸ່ມ ແລະ ກຳມະບານໃຫ້ເຄື່ອນ ໄຫວເປັນຂະບວນເພື່ອສ້າງຜົນງານຂໍ່ານັບຮັບຕ້ອນວັນຄູແຫ່ງຊາດ ແລະ ວັນສຳຄັນອື່ນໆ.
4. ອົງການຈັດຕັ້ງ ບໍລິຫານເຈົ້າການ ຈັດຕັ້ງເຜີຍແຜ່ມະຕິ ຄຳສັ່ງ ຂໍ້ກຳນົດ ກົດລະບຽບຂອງພັກ ແລະ ລັດໃຫ້ພະນັກງານ, ຄູ-ອາຈານ, ນັກຮຽນ-ນັກສຶກສາໄດ້ເຂົ້າໃຈຢ່າງເລິກເຊິ່ງ ເຖິງຖອງ ແລະ ສາມາດ ເອົາໄປຈັດຕັ້ງ ປະຕິບັດຢ່າງມີໝາກຜົນໄດ້.
5. ການສຶກສາແນວຄິດການເມືອງ ຄຸນສົມບັດ ສິນທຳປະຕິວັດ ຕ້ອງຕິດພັນກັບຕົວຈິງ ແລະ ນະໂຍບາຍ ເພື່ອແກ້ໄຂຊີວິດການເປັນຢູ່ຂອງພະນັກງານ, ຄູ-ອາຈານ, ນັກຮຽນ-ນັກສຶກສາຢ່າງແທ້ຈິງ.

#### *2.3.2 ວຽກງານຄຸ້ມຄອງລັດຖະກອນ:*

1. ປັບປຸງວິທີການຄຸ້ມຄອງສະຖິຕິລັດຖະກອນໃຫ້ດີຂຶ້ນ ໂດຍໃຫ້ລວມສູນສຳນວນປະຫວັດລັດຖະກອນ ແລະ ຖານຂໍ້ມູນຄຸ້ມຄອງລັດຖະກອນເຂົ້າກັນ. ຈັດລຽງສຳນວນລັດຖະກອນແຕ່ລະຄົນໃຫ້ຖືກ ຕ້ອງຕາມຫລັກ ການ ແລະ ປັບຂໍ້ມູນປະຫວັດໃຫ້ທັນເວລາ.
2. ເລື່ອນຊັ້ນ-ເລື່ອນຂັ້ນເງິນເດືອນໃຫ້ຄູ-ອາຈານແຕ່ລະຄົນໃຫ້ຖືກຕ້ອງຕາມປີ ແລະ ຕາມງວດ. ຈັດການສອບເສັງເລື່ອນຊັ້ນ ແລະ ເລື່ອນຂັ້ນໃຫ້ຄູ-ອາຈານເປັນຮອບທີ 2.
3. ເອົາໃຈໃສ່ ພັດທະນາຜູ້ບໍລິຫານການສຶກສາດ້ວຍການສົ່ງໄປຮຽນ ແລະ ຝຶກອົບຮົມຢູ່ພາຍໃນ ແລະ ຕ່າງປະເທດ.

4. ສະເໜີຄວາມຕ້ອງການພະນັກງານ, ຄູ-ອາຈານທົ່ວຂະແໜງການສຶກສາທັງໝົດ 7,867 ຄົນ, ໃນນັ້ນ ຄູ-ອາຈານທັງໝົດ 6,872 ຄົນ(ຄູອະນຸບານ: 390 ຄົນ; ຄູປະຖົມ: 3,029 ຄົນ; ຄູມັດທະຍົມ ອາຊີວະສຶກສາ ແລະ ມະຫາວິທະຍາໄລ: 3,408 ຄົນ; ພະນັກງານ: 805 ຄົນ ແລະ ພະນັກງານ ສັນຍາຈ້າງ 235 ຄົນ).
5. ສ້າງຕັ້ງສູນພັດທະນາຜູ້ບໍລິຫານການສຶກສາ 3 ແຫ່ງຄື : ພາກເໜືອຢູ່ວິທະຍາໄລຄູຫລວງພະບາງ, ພາກໃຕ້ຢູ່ວິທະຍາໄລຄູຈຳປາສັກ ແລະ ພາກກາງຢູ່ສູນພັດທະນາຄູນະຄອນຫຼວງວຽງຈັນ ແລະ ກໍ່ສ້າງຄູຝຶກ ແລະ ຜູ້ຮັບຜິດຊອບການຈັດການຝຶກອົບຮົມ.
6. ປະຕິບັດນະໂຍບາຍທີ່ມີແລ້ວໃຫ້ດີກວ່າເກົ່າ, ສ້າງນະໂຍບາຍໃໝ່ເປັນຕົ້ນ: ນາມມະຍົດ ຄູດີເດັ່ນ
7. ຈັດຕັ້ງ ສະເຫລີມສະຫລອງວັນຄູແຫ່ງຊາດ ຄົບຮອບ 10 ປີໃຫ້ມີເນື້ອໃນ ແລະ ມີບັນຍາກາດເປັນຂະບວນ ຟົດຟື້ນທົ່ວປະເທດ.
8. ເອົາໃຈໃສ່ປະຕິບັດນະໂຍບາຍຕ່າງໆ ທີ່ມີແລ້ວຕໍ່ຄູໃຫ້ຄົບ ຖ້ວນ ເຊັ່ນ: ເງິນເດືອນ, ເງິນນະໂຍບາຍເຂດພູດອຍ, ນະໂຍບາຍສອນຫ້ອງຄວບ, ເງິນຄູອາສາສະໝັກ ແລະ ອື່ນໆ.
9. ຄົ້ນຄວ້າ ນະໂຍບາຍໃຫມ່ກ່ຽວກັບການຈັດຊັ້ນ ແລະ ຂັ້ນເງິນເດືອນຂອງຄູສະເໜີຕໍ່ລັດຖະບານ.
10. ເກັບກຳຈຳນວນຄູ-ອາຈານແລະພະນັກງານສຶກສາໃຫ້ໄດ້ຄົບຖ້ວນຊັດເຈນໃນແຕ່ລະຊັ້ນແຕ່ສາຍ.

### *2.3.3 ການປັບປຸງກົງຈັກການຈັດຕັ້ງ :*

1. ສຶກສາຄວາມເປັນໄປໄດ້ໃນການສ້າງກົມລ້ຽງເດັກ ແລະ ອະນຸບານຄືນໃຫມ່
2. ຊຸກຍູ້ໃຫ້ແຕ່ລະກົມ, ພະແນກສຶກສາປະຈຳແຂວງ, ຫ້ອງການສຶກສາປະຈຳເມືອງ ປັບປຸງການຈັດຕັ້ງ ແລະ ວິທີການເຮັດວຽກໃຫ້ສອດຄ່ອງກັບປຶ້ມຄູ່ມືວິທີເຮັດວຽກ ແລະການກຳນົດຕຳແຫນ່ງງານທີ່ໄດ້ວາງອອກ. ທັງນີ້ເພື່ອທັນກົມຕ່າງໆໃນກະຊວງໃຫ້ເຮັດບົດບາດຄຸ້ມຄອງມະຫາພາກ, ພະແນກສຶກ ສາແຂວງແລະຫ້ອງການສຶກສາເມືອງ ມີບົດບາດຄຸ້ມຄອງວຽກງານຈຸລະພາກຕາມການແບ່ງຂັ້ນຄຸ້ມຄອງການສຶກສາ.
3. ປັບປຸງກົງຈັກການຈັດຕັ້ງຢູ່ບາງຄະນະຂອງມະຫາວິທະຍາໄລແຫ່ງຊາດໃຫ້ເຫມາະສົມກວ່າເກົ່າ.
4. ປັບປຸງວຽກງານຂ່າວສານການສຶກສາໃຫ້ເປັນເອກະພາບ, ວ່ອງໄວ, ຊັດເຈນ ແລະ ທັນການ, ນຳໃຊ້ ເຄືອຄ່າຍອິນຕຣາແນັດຢູ່ສຳນັກກະຊວງສຶກສາທິການ ເພື່ອປັບປຸງແບບແຜນວິທີການຄຸ້ມຄອງໃນແຕ່ລະຂັ້ນໃຫ້ວ່ອງໄວ ເປັນເອກະພາບ ແລະ ມີປະສິດທິຜົນ ພ້ອມນັ້ນກໍ່ຂະຫຍາຍເຄືອຄ່າຍນີ້ໄປ ບ່ອນທີ່ມີເງື່ອນໄຂ.
5. ຕິດຕາມກວດກາ ແລະ ຊຸກຍູ້ການປະຕິບັດລາຍຮັບ-ລາຍຈ່າຍງົບປະມານ ໃນຂົງເຂດທີ່ຕົນຮັບຜິດຊອບໃຫ້ຖືກຕ້ອງຕາມ ລະບຽບຫລັກການ ແລະ ທັນເວລາ, ໂດຍ ສະເພາະແມ່ນການເບີກຈ່າຍເງິນເດືອນ, ເງິນນະໂຍບາຍໃຫ້ແກ່ຄູ-ອາຈານ.

6. ຂົນຂວາຍ ຍາດແຍ່ງການຊ່ວຍເຫລືອຈາກພາຍໃນ ແລະ ຕ່າງປະເທດ, ພ້ອມກັນນັ້ນກໍ່ຈັດຕັ້ງປະຕິບັດບັນດາສັນຍາໂຄງການຮ່ວມມື ທີ່ໄດ້ເຊັນກັນແລ້ວໃຫ້ເຂັ້ມງວດ.
7. ຄົ້ນຄວ້າ ສ້າງຕັ້ງຄະນະກຳມະການປຽບທຽບປະກາສະນີຍະບັດຂະແໜງການສຶກສາ

*2.3.4. ການປັບປຸງລະບຽບການປົກຄອງ ແລະ ຄຸ້ມຄອງ :*

1. ເຜີຍແຜ່ກົດໝາຍການສຶກສາໃຫ້ທຸກພາກສ່ວນໄດ້ຮັບຊາບ ແລະ ສະເໜີໃຫ້ລັດຖະບານອອກດຳລັດວ່າ ດ້ວຍການຈັດຕັ້ງ ປະຕິບັດກົດໝາຍການສຶກສາ.
2. ດັດແກ້ລະບຽບການຄຸ້ມຄອງການສຶກສາຈຳນວນທີ່ບໍ່ສອດຄ່ອງກັບສະພາບການໃຫມ່ເຊັ່ນ: ລະບຽບການຄຸ້ມຄອງລັດຖະກອນສຶກສາ, ພາລະບົດບາດຂອງບາງກົມກອງທີ່ຍັງບໍ່ທັນສອດຄ່ອງ, ບາງເນື້ອໃນຂອງລະ ບຽບ ວ່າດ້ວຍກອງທຶນຄູແຫ່ງຊາດ, ລະບຽບວ່າດ້ວຍ ການໃຫ້ເບັ້ຽລ້ຽງແກ່ນັກຮຽນ-ນັກສຶກສາ ແລະອື່ນໆ.
3. ສ້າງລະບຽບການປະເມີນຜົນ ແລະ ຕີລາຄາເພື່ອຈັດປະເພດລັດຖະກອນ ແລະ ອື່ນໆ
4. ຄົ້ນຄວ້າ ຮ່າງແຜນພັດທະນາຂະແໜງການ(Sector Development Program) ແລະ ແຜນພັດທະນາຂະແໜງການແບບຄົບຊຸດ(Sector Wide Approach).
5. ກວດກາ ປັບປຸງ ແລະ ສ້າງແຜນການຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ກັບອົງການທີ່ບໍ່ຂຶ້ນກັບລັດຖະບານ ເພື່ອນຳຜົນປະໂຫຍດມາໃຫ້ປະເທດຊາດ.
6. ຕັ້ງໜ້າປະຕິບັດບັນດາໂຄງການລົງທຶນຂອງລັດໃຫ້ສຳເລັດຜົນ ໂດຍສະເພາະໂຄງການທີ່ມີການຮ່ວມມືກັບຕ່າງປະເທດໃຫ້ແທດເໝາະຖືກຕາມລະບຽບ ຫຼັກການ ແລະ ໄດ້ຮັບຜົນປະໂຫຍດສູງສຸດ.

## ວິທີການ ຈັດຕັ້ງປະຕິບັດ

ເພື່ອເຮັດໃຫ້ແຜນການສົກຮຽນ 2004-05 ໄດ້ຮັບການຈັດຕັ້ງປະຕິບັດຢ່າງສຳເລັດຜົນ ຈຶ່ງຄວນເອົາໃຈໃສ່ບາງວິທີການດັ່ງລຸ່ມນີ້ :

1. ຈັດຕັ້ງເຜີຍແຜ່ແຜນການນີ້ໃຫ້ພະນັກງານ, ຄູ-ອາຈານ-ນັກຮຽນ ນັກສຶກສາໃຫ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ສາມາດເອົາໄປຈັດຕັ້ງປະຕິບັດໃຫ້ມີໝາກຜົນໄດ້.
2. ແຕ່ລະພາກສ່ວນນຳເອົາແຜນການນີ້ເປັນບ່ອນອີງໃນການຜັນຂະຫຍາຍເປັນແຜນການລະອຽດ ນຳໄປຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບສະພາບການຕົວຈິງ ຂອງທ້ອງຖິ່ນຕົນ.

3. ເອົາໃຈໃສ່ຍາດແຍ່ງການຊີ້ນໍາ ນໍາພາຈາກອໍານາດການປົກຄອງ ແຕ່ລະຂັ້ນພ້ອມທັງຂົນຂວາຍເອົາການຮ່ວມມືກັບພາກສ່ວນຕ່າງໆ. ໃນສັງຄົມທັງພາຍໃນ ແລະ ຕ່າງປະເທດ.
4. ຜູ້ບໍລິຫານການສຶກສາແຕ່ລະຂັ້ນຕ້ອງຊີ້ນໍາ ນໍາພາຕິດຕາມ, ກວດກາ ແລະ ພ້ອມກັນນັ້ນ ຕ້ອງສະຫລຸບລາຍງານໃຫ້ເປັນລະບົບປົກກະຕິ.

## ຈຳນວນໂຮງຮຽນ,ຫ້ອງຮຽນ,ຄູສອນ ແລະນັກຮຽນ ລ້ຽງເດັກ-ອະນຸບານ ຕາມແຂວງ ( ລັດ ແລະ ເອກະຊົນ )

ຕາຕະລາງ ທີ 01

ສົກຮຽນ 2003-2004

| ລະຫັດແຂວງ | ຊື່ແຂວງ | ຈຳນວນໂຮງຮຽນ | ຈຳນວນຫ້ອງຮຽນ | ຈຳນວນຄູສອນ | | ລ້ຽງເດັກ | | ອະນຸບານ | | | ລ້ຽງເດັກ-ອະນຸບານ | | | ປະຊາກອນ 3-5 ປີ | | | ອັດຕາເຂົ້າຮຽນລວມ | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | ລວມ | ຍິງ | ລວມ | ຍິງ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| 01 | ນະຄອນຫຼວງ | 132 | 415 | 597 | 589 | 1,204 | 571 | 9,689 | 4,903 | 4,786 | 10,893 | 5,474 | 5,419 | 43,413 | 21,419 | 21,994 | 22.3 | 22.9 | 21.8 |
| 02 | ຜົ້ງສາລີ | 19 | 28 | 44 | 44 | 17 | 11 | 595 | 271 | 324 | 612 | 282 | 330 | 15,416 | 7,409 | 8,007 | 3.9 | 3.7 | 4.0 |
| 03 | ຫລວງນ້ຳທາ | 28 | 37 | 61 | 61 | 7 | 5 | 853 | 421 | 432 | 860 | 426 | 434 | 12,343 | 6,079 | 6,264 | 6.9 | 6.9 | 6.9 |
| 04 | ອຸດົມໄຊ | 10 | 24 | 37 | 37 | 20 | 8 | 543 | 273 | 270 | 563 | 281 | 282 | 26,555 | 13,090 | 13,465 | 2.0 | 2.1 | 2.0 |
| 05 | ບໍ່ແກ້ວ | 30 | 43 | 51 | 51 | 13 | 5 | 1,048 | 522 | 526 | 1,061 | 527 | 534 | 11,076 | 5,483 | 5,593 | 9.5 | 9.5 | 9.4 |
| 06 | ຫລວງພະບາງ | 57 | 85 | 140 | 139 | 54 | 28 | 2,275 | 1,149 | 1,126 | 2,329 | 1,177 | 1,152 | 36,070 | 17,778 | 18,292 | 6.3 | 6.5 | 6.2 |
| 07 | ຫົວພັນ | 22 | 58 | 70 | 70 | 61 | 26 | 1,317 | 671 | 646 | 1,378 | 697 | 681 | 29,679 | 14,583 | 15,096 | 4.4 | 4.6 | 4.3 |
| 08 | ໄຊຍະບູລີ | 72 | 130 | 198 | 198 | 107 | 41 | 2,453 | 1,259 | 1,194 | 2,560 | 1,300 | 1,260 | 23,116 | 11,353 | 11,763 | 10.6 | 11.1 | 10.2 |
| 09 | ຊຽງຂວາງ | 15 | 35 | 47 | 47 | 12 | 2 | 748 | 361 | 387 | 760 | 363 | 397 | 20,835 | 10,220 | 10,615 | 3.6 | 3.5 | 3.6 |
| 10 | ວຽງຈັນ | 89 | 141 | 204 | 200 | 185 | 83 | 3,019 | 1,454 | 1,565 | 3,204 | 1,537 | 1,667 | 28,407 | 13,854 | 14,553 | 10.6 | 10.5 | 10.8 |
| 11 | ບໍລິຄຳໄຊ | 22 | 52 | 85 | 85 | 66 | 31 | 1,051 | 527 | 524 | 1,117 | 558 | 559 | 16,891 | 8,263 | 8,628 | 6.2 | 6.4 | 6.1 |
| 12 | ຄຳມ່ວນ | 35 | 73 | 148 | 148 | 207 | 107 | 1,925 | 963 | 962 | 2,132 | 1,070 | 1,062 | 31,532 | 15,574 | 15,958 | 6.1 | 6.2 | 6.0 |
| 13 | ສະຫວັນນະເຂດ | 192 | 302 | 425 | 425 | 442 | 216 | 7,966 | 4,123 | 3,843 | 8,408 | 4,339 | 4,069 | 74,520 | 36,914 | 37,606 | 10.7 | 11.2 | 10.2 |
| 14 | ສາລະວັນ | 17 | 25 | 37 | 37 | 12 | 7 | 696 | 352 | 344 | 708 | 359 | 349 | 30,458 | 15,045 | 15,413 | 2.3 | 2.3 | 2.2 |
| 15 | ເຊກອງ | 6 | 13 | 30 | 30 | 62 | 30 | 260 | 129 | 131 | 322 | 159 | 163 | 8,492 | 4,174 | 4,318 | 3.1 | 3.1 | 3.0 |
| 16 | ຈຳປາສັກ | 110 | 193 | 285 | 285 | 345 | 164 | 3,886 | 1,980 | 1,906 | 4,231 | 2,144 | 2,087 | 52,695 | 25,941 | 26,754 | 7.4 | 7.6 | 7.1 |
| 17 | ອັດຕະປື | 9 | 17 | 38 | 38 | 30 | 11 | 316 | 179 | 137 | 346 | 190 | 156 | 10,469 | 5,144 | 5,325 | 3.0 | 3.5 | 2.6 |
| 18 | ເຂດພິເສດໄຊສົມບູນ | 2 | 5 | 10 | 10 | 10 | 6 | 130 | 85 | 45 | 140 | 91 | 49 | 5,445 | 2,671 | 2,774 | 2.4 | 3.2 | 1.6 |
| | ລວມທົ່ວປະເທດ | 867 | 1,676 | 2,507 | 2,494 | 2,854 | 1,352 | 38,770 | 19,622 | 19,148 | 41,624 | 20,974 | 20,650 | 477,412 | 234,994 | 242,418 | 8.1 | 8.4 | 7.9 |

ຈຳນວນໂຮງຮຽນ,ຫ້ອງຮຽນ,ຄູສອນ ແລະນັກຮຽນ ລ້ຽງເດັກ-ອະນຸບານ ຕາມແຂວງ (ພາກເອກະຊົນ) ຕາຕະລາງ ທີ 02

ສົກຮຽນ 2003-2004

| ລະຫັດ ແຂວງ | ຊື່ແຂວງ | ຈຳນວນ ໂຮງຮຽນ | ຈຳນວນ ຫ້ອງຮຽນ | ຈຳນວນຄູສອນ | | ລ້ຽງເດັກ | | | ອະນຸບານ | | | ລ້ຽງເດັກ-ອະນຸບານ | | |
|---|---|---|---|---|---|---|---|---|---|---|---|---|---|---|
| | | | | ລວມ | ຍິງ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| 01 | ນະຄອນຫຼວງ | 91 | 281 | 400 | 393 | 775 | 364 | 411 | 6,556 | 3,266 | 3,290 | 7,331 | 3,630 | 3,701 |
| 02 | ຜົ້ງສາລີ | - | - | - | - | - | - | - | - | - | - | - | - | - |
| 03 | ຫລວງນ້ຳທາ | 1 | 3 | 6 | 6 | 7 | 5 | 2 | 22 | 5 | 17 | 29 | 10 | 19 |
| 04 | ອຸດົມໄຊ | - | - | - | - | - | - | - | - | - | - | - | - | - |
| 05 | ບໍ່ແກ້ວ | 1 | 3 | 3 | 3 | - | - | - | 74 | 34 | 40 | 74 | 34 | 40 |
| 06 | ຫລວງພະບາງ | 4 | 10 | 30 | 29 | 2 | 1 | 1 | 358 | 168 | 190 | 360 | 169 | 191 |
| 07 | ຫົວພັນ | - | - | - | - | - | - | - | - | - | - | - | - | - |
| 08 | ໄຊຍະບູລີ | - | - | - | - | - | - | - | - | - | - | - | - | - |
| 09 | ຊຽງຂວາງ | - | - | - | - | - | - | - | - | - | - | - | - | - |
| 10 | ວຽງຈັນ | 3 | 9 | 15 | 15 | 32 | 15 | 17 | 182 | 80 | 102 | 214 | 95 | 119 |
| 11 | ບໍລິຄຳໄຊ | 4 | 10 | 12 | 12 | 37 | 18 | 19 | 138 | 57 | 81 | 175 | 75 | 100 |
| 12 | ຄຳມ່ວນ | 5 | 14 | 26 | 26 | 127 | 68 | 59 | 407 | 183 | 224 | 534 | 251 | 283 |
| 13 | ສະຫວັນນະເຂດ | 6 | 15 | 16 | 16 | 50 | 32 | 18 | 408 | 188 | 220 | 458 | 220 | 238 |
| 14 | ສາລະວັນ | - | - | - | - | - | - | - | - | - | - | - | - | - |
| 15 | ເຊກອງ | - | - | - | - | - | - | - | - | - | - | - | - | - |
| 16 | ຈຳປາສັກ | 8 | 23 | 29 | 29 | 17 | 9 | 8 | 622 | 312 | 310 | 639 | 321 | 318 |
| 17 | ອັດຕະປື | - | - | - | - | - | - | - | - | - | - | - | - | - |
| 18 | ເຂດພິເສດໄຊສົມບູນ | - | - | - | - | - | - | - | - | - | - | - | - | - |
| | ລວມທົ່ວປະເທດ | 123 | 368 | 537 | 529 | 1,047 | 512 | 535 | 8,767 | 4,293 | 4,474 | 9,814 | 4,805 | 5,009 |

# ຈຳນວນໂຮງຮຽນ,ຫ້ອງຮຽນ, ແລະ ຄູສອນ ຊັ້ນປະຖົມຕາມແຂວງ

ຕາຕະລາງ ທີ 03

| ສົກຮຽນ 2003-2004 | | ລັດ ແລະ ເອກະຊົນ | | | | | | | | | ສະເພາະ ເອກະຊົນ | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ລະຫັດ ແຂວງ | ຊື່ແຂວງ | ຈຳນວນໂຮງຮຽນ | | | ຈຳນວນຫ້ອງຮຽນ | | | ຈຳນວນຄູສອນ | | | ຈຳນວນໂຮງຮຽນ | | | ຈຳນວນຫ້ອງຮຽນ | | | ຈຳນວນຄູສອນ | | |
| | | ລວມ | ສົມບູນ | % | ລວມ | ຫ້ອງຄວບ | % | ລວມ | ຍິງ | % | ລວມ | ສົມບູນ | % | ລວມ | ຫ້ອງຄວບ | % | ລວມ | ຍິງ | % |
| 01 | ນະຄອນຫຼວງ | 470 | 413 | 87.9 | 2,745 | 90 | 3.3 | 2,840 | 1,862 | 65.6 | 57 | 50 | 87.7 | 364 | 11 | 3.0 | 444 | 351 | 79.1 |
| 02 | ຜົ້ງສາລີ | 459 | 87 | 19.0 | 914 | 430 | 47.0 | 933 | 580 | 62.2 | - | - | | - | - | | - | - | |
| 03 | ຫລວງນ້ຳທາ | 323 | 88 | 27.2 | 850 | 236 | 27.8 | 748 | 342 | 45.7 | - | - | | - | - | | - | - | |
| 04 | ອຸດົມໄຊ | 494 | 136 | 27.5 | 1,191 | 305 | 25.6 | 1,228 | 285 | 23.2 | 3 | 3 | 100.0 | 18 | - | 0.0 | 18 | 11 | 61.1 |
| 05 | ບໍ່ແກ້ວ | 259 | 85 | 32.8 | 760 | 208 | 27.4 | 757 | 238 | 31.4 | 1 | - | 0.0 | 6 | - | 0.0 | 6 | 6 | 100.0 |
| 06 | ຫລວງພະບາງ | 757 | 296 | 39.1 | 1,926 | 734 | 38.1 | 1,975 | 745 | 37.7 | 4 | 3 | 75.0 | 25 | 1 | 4.0 | 38 | 29 | 76.3 |
| 07 | ຫົວພັນ | 711 | 195 | 27.4 | 1,578 | 645 | 40.9 | 1,594 | 444 | 27.9 | - | - | | - | - | | - | - | |
| 08 | ໄຊຍະບູລີ | 444 | 323 | 72.7 | 2,001 | 371 | 18.5 | 1,982 | 733 | 37.0 | - | - | | - | - | | - | - | |
| 09 | ຊຽງຂວາງ | 395 | 136 | 34.4 | 1,298 | 254 | 19.6 | 1,324 | 628 | 47.4 | - | - | | - | - | | - | - | |
| 10 | ວຽງຈັນ | 470 | 282 | 60.0 | 2,372 | 241 | 10.2 | 2,416 | 897 | 37.1 | 1 | - | 0.0 | 5 | - | 0.0 | 4 | 3 | 75.0 |
| 11 | ບໍລິຄຳໄຊ | 309 | 172 | 55.7 | 1,158 | 317 | 27.4 | 1,118 | 508 | 45.4 | 2 | 2 | 100.0 | 9 | 1 | 11.1 | 9 | 9 | 100.0 |
| 12 | ຄຳມ່ວນ | 606 | 271 | 44.7 | 1,737 | 534 | 30.7 | 1,681 | 670 | 39.9 | 7 | 3 | 42.9 | 38 | 3 | 7.9 | 39 | 30 | 76.9 |
| 13 | ສະຫວັນນະເຂດ | 1,127 | 466 | 41.3 | 3,664 | 843 | 23.0 | 3,801 | 1,885 | 49.6 | 6 | 4 | 66.7 | 38 | 1 | 2.6 | 48 | 39 | 81.3 |
| 14 | ສາລະວັນ | 487 | 137 | 28.1 | 1,129 | 477 | 42.2 | 1,131 | 437 | 38.6 | - | - | | - | - | | - | - | |
| 15 | ເຊກອງ | 179 | 68 | 38.0 | 411 | 207 | 50.4 | 438 | 164 | 37.4 | - | - | | - | - | | - | - | |
| 16 | ຈຳປາສັກ | 760 | 387 | 50.9 | 2,805 | 561 | 20.0 | 2,822 | 1,701 | 60.3 | 6 | 4 | 66.7 | 33 | 2 | 6.1 | 48 | 33 | 68.8 |
| 17 | ອັດຕະປື | 209 | 73 | 34.9 | 611 | 171 | 28.0 | 609 | 244 | 40.1 | - | - | | - | - | | - | - | |
| 18 | ເຂດພິເສດໄຊສົມບູນ | 70 | 36 | 51.4 | 278 | 42 | 15.1 | 287 | 50 | 17.4 | - | - | | - | - | | - | - | |
| | ລວມທົ່ວປະເທດ | 8,529 | 3,651 | 42.8 | 27,428 | 6,666 | 24.3 | 27,684 | 12,413 | 44.8 | 87 | 69 | 79.3 | 536 | 19 | 3.5 | 654 | 511 | 78.1 |

## ຈຳນວນນັກຮຽນ ຊັ້ນປະຖົມຕາມແຂວງ ( ລັດ ແລະ ເອກະຊົນ)

ຕາຕະລາງ ທີ 04

ສົກຮຽນ 2003-2004

| ລະຫັດ ແຂວງ | ຊື່ແຂວງ | ນັກຮຽນ ປ.1 | | | ນັກຮຽນ ປ.2 | | | ນັກຮຽນ ປ.3 | | | ນັກຮຽນ ປ.4 | | | ນັກຮຽນ ປ.5 | | | ນັກຮຽນ ປ.1-ປ.5 | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ລວມ | ຍິງ | % ຍິງ | ລວມ | ຍິງ | % ຍິງ | ລວມ | ຍິງ | % ຍິງ | ລວມ | ຍິງ | % ຍິງ | ລວມ | ຍິງ | % ຍິງ | ລວມ | ຍິງ | % ຍິງ |
| 01 | ນະຄອນຫຼວງ | 19,621 | 9,274 | 47.3 | 16,920 | 7,881 | 46.6 | 16,376 | 7,567 | 46.2 | 15,654 | 7,544 | 48.2 | 14,555 | 7,016 | 48.2 | 83,126 | 39,282 | 47.3 |
| 02 | ຜົ້ງສາລີ | 9,329 | 3,922 | 42.0 | 5,336 | 2,166 | 40.6 | 3,687 | 1,513 | 41.0 | 2,915 | 1,240 | 42.5 | 2,615 | 1,146 | 43.8 | 23,882 | 9,987 | 41.8 |
| 03 | ຫລວງນ້ຳທາ | 9,322 | 4,436 | 47.6 | 4,784 | 2,128 | 44.5 | 3,518 | 1,488 | 42.3 | 2,798 | 1,184 | 42.3 | 2,437 | 995 | 40.8 | 22,859 | 10,231 | 44.8 |
| 04 | ອຸດົມໄຊ | 21,381 | 10,363 | 48.5 | 9,905 | 4,323 | 43.6 | 7,170 | 3,057 | 42.6 | 5,527 | 2,261 | 40.9 | 4,710 | 1,875 | 39.8 | 48,693 | 21,879 | 44.9 |
| 05 | ບໍ່ແກ້ວ | 8,372 | 3,808 | 45.5 | 5,113 | 2,245 | 43.9 | 3,939 | 1,730 | 43.9 | 3,037 | 1,284 | 42.3 | 2,754 | 1,136 | 41.2 | 23,215 | 10,203 | 44.0 |
| 06 | ຫລວງພະບາງ | 24,755 | 11,390 | 46.0 | 15,429 | 7,014 | 45.5 | 11,453 | 5,057 | 44.2 | 8,979 | 4,014 | 44.7 | 7,694 | 3,288 | 42.7 | 68,310 | 30,763 | 45.0 |
| 07 | ຫົວພັນ | 20,198 | 9,032 | 44.7 | 10,734 | 4,818 | 44.9 | 8,540 | 3,722 | 43.6 | 6,722 | 2,772 | 41.2 | 5,520 | 2,420 | 43.8 | 51,714 | 22,764 | 44.0 |
| 08 | ໄຊຍະບູລີ | 14,218 | 6,578 | 46.3 | 12,013 | 5,347 | 44.5 | 11,163 | 5,178 | 46.4 | 10,369 | 4,800 | 46.3 | 9,011 | 4,254 | 47.2 | 56,774 | 26,157 | 46.1 |
| 09 | ຊຽງຂວາງ | 13,429 | 6,101 | 45.4 | 9,849 | 4,477 | 45.5 | 8,455 | 3,747 | 44.3 | 7,172 | 3,238 | 45.1 | 6,643 | 3,041 | 45.8 | 45,548 | 20,604 | 45.2 |
| 10 | ວຽງຈັນ | 16,990 | 8,052 | 47.4 | 13,495 | 6,336 | 47.0 | 12,627 | 5,893 | 46.7 | 10,981 | 5,156 | 47.0 | 10,019 | 4,763 | 47.5 | 64,112 | 30,200 | 47.1 |
| 11 | ບໍລິຄຳໄຊ | 12,613 | 5,800 | 46.0 | 9,126 | 4,272 | 46.8 | 7,780 | 3,654 | 47.0 | 6,712 | 3,158 | 47.1 | 6,061 | 2,680 | 44.2 | 42,292 | 19,564 | 46.3 |
| 12 | ຄຳມ່ວນ | 18,239 | 8,684 | 47.6 | 12,078 | 5,675 | 47.0 | 10,305 | 4,739 | 46.0 | 8,824 | 4,100 | 46.5 | 7,845 | 3,624 | 46.2 | 57,291 | 26,822 | 46.8 |
| 13 | ສະຫວັນນະເຂດ | 43,068 | 19,742 | 45.8 | 27,453 | 12,536 | 45.7 | 21,338 | 9,771 | 45.8 | 16,679 | 8,019 | 48.1 | 13,559 | 6,295 | 46.4 | 122,097 | 56,363 | 46.2 |
| 14 | ສາລະວັນ | 17,799 | 8,052 | 45.2 | 10,643 | 4,734 | 44.5 | 7,948 | 3,495 | 44.0 | 6,222 | 2,707 | 43.5 | 4,871 | 2,062 | 42.3 | 47,483 | 21,050 | 44.3 |
| 15 | ເຊກອງ | 5,379 | 2,601 | 48.4 | 3,042 | 1,446 | 47.5 | 2,198 | 1,020 | 46.4 | 1,635 | 746 | 45.6 | 1,529 | 660 | 43.2 | 13,783 | 6,473 | 47.0 |
| 16 | ຈຳປາສັກ | 23,575 | 11,229 | 47.6 | 19,259 | 9,257 | 48.1 | 17,471 | 8,354 | 47.8 | 14,955 | 7,071 | 47.3 | 12,619 | 6,017 | 47.7 | 87,879 | 41,928 | 47.7 |
| 17 | ອັດຕະປື | 7,105 | 3,385 | 47.6 | 3,766 | 1,779 | 47.2 | 2,729 | 1,238 | 45.4 | 2,138 | 967 | 45.2 | 1,782 | 779 | 43.7 | 17,520 | 8,148 | 46.5 |
| 18 | ເຂດພິເສດໄຊສົມບູນ | 3,077 | 1,474 | 47.9 | 1,687 | 809 | 48.0 | 1,284 | 588 | 45.8 | 1,116 | 503 | 45.1 | 887 | 416 | 46.9 | 8,051 | 3,790 | 47.1 |
| | ລວມທົ່ວປະເທດ | 288,470 | 133,923 | 46.4 | 190,632 | 87,243 | 45.8 | 157,981 | 71,811 | 45.5 | 132,435 | 60,764 | 45.9 | 115,111 | 52,467 | 45.6 | 884,629 | 406,208 | 45.9 |

ຈຳນວນໂຮງຮຽນ,ຫ້ອງຮຽນ,ຄູສອນ ແລະນັກຮຽນ ຊັ້ນປະຖົມຕາມແຂວງ ( ພາກ ເອກະຊົນ) ຕາຕະລາງ ທີ 05

ສົກຮຽນ 2003-2004

| ລະຫັດ ແຂວງ | ຊື່ແຂວງ | ນັກຮຽນ ປ.1 | | | ນັກຮຽນ ປ.2 | | | ນັກຮຽນ ປ.3 | | | ນັກຮຽນ ປ.4 | | | ນັກຮຽນ ປ.5 | | | ນັກຮຽນ ປ.1-ປ.5 | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ລວມ | ຍິງ | % ຍິງ | ລວມ | ຍິງ | % ຍິງ | ລວມ | ຍິງ | % ຍິງ | ລວມ | ຍິງ | % ຍິງ | ລວມ | ຍິງ | % ຍິງ | ລວມ | ຍິງ | % ຍິງ |
| 01 | ນະຄອນຫຼວງ | 3,477 | 1,596 | 45.9 | 2,622 | 1,206 | 46.0 | 2,392 | 1,081 | 45.2 | 2,032 | 899 | 44.2 | 1,960 | 916 | 46.7 | 12,483 | 5,698 | 45.6 |
| 02 | ຜົ້ງສາລີ | - | - | | - | - | | - | - | | - | - | | - | - | | - | - | |
| 03 | ຫລວງນ້ຳທາ | - | - | | - | - | | - | - | | - | - | | - | - | | - | - | |
| 04 | ອຸດົມໄຊ | 202 | 80 | 39.6 | 115 | 48 | 41.7 | 110 | 59 | 53.6 | 101 | 49 | 48.5 | 99 | 43 | 43.4 | 627 | 279 | 44.5 |
| 05 | ບໍ່ແກ້ວ | 89 | 46 | 51.7 | 17 | 5 | 29.4 | 11 | 6 | 54.5 | - | - | | - | - | | 117 | 57 | 48.7 |
| 06 | ຫລວງພະບາງ | 201 | 93 | 46.3 | 177 | 84 | 47.5 | 181 | 95 | 52.5 | 160 | 74 | 46.3 | 189 | 82 | 43.4 | 908 | 428 | 47.1 |
| 07 | ຫົວພັນ | - | - | | - | - | | - | - | | - | - | | - | - | | - | - | |
| 08 | ໄຊຍະບູລີ | - | - | | - | - | | - | - | | - | - | | - | - | | - | - | |
| 09 | ຊຽງຂວາງ | - | - | | - | - | | - | - | | - | - | | - | - | | - | - | |
| 10 | ວຽງຈັນ | 31 | 18 | 58.1 | 12 | 5 | 41.7 | 15 | 5 | 33.3 | 10 | 2 | 20.0 | - | - | | 68 | 30 | 44.1 |
| 11 | ບໍລິຄຳໄຊ | 50 | 18 | 36.0 | 44 | 20 | 45.5 | 39 | 15 | 38.5 | 42 | 11 | 26.2 | 41 | 18 | 43.9 | 216 | 82 | 38.0 |
| 12 | ຄຳມ່ວນ | 407 | 216 | 53.1 | 281 | 127 | 45.2 | 250 | 119 | 47.6 | 205 | 95 | 46.3 | 268 | 143 | 53.4 | 1,411 | 700 | 49.6 |
| 13 | ສະຫວັນນະເຂດ | 348 | 155 | 44.5 | 273 | 143 | 52.4 | 211 | 104 | 49.3 | 200 | 97 | 48.5 | 122 | 62 | 50.8 | 1,154 | 561 | 48.6 |
| 14 | ສາລະວັນ | - | - | | - | - | | - | - | | - | - | | - | - | | - | - | |
| 15 | ເຊກອງ | - | - | | - | - | | - | - | | - | - | | - | - | | - | - | |
| 16 | ຈຳປາສັກ | 289 | 126 | 43.6 | 272 | 147 | 54.0 | 243 | 114 | 46.9 | 206 | 87 | 42.2 | 229 | 124 | 54.1 | 1,239 | 598 | 48.3 |
| 17 | ອັດຕະປື | - | - | | - | - | | - | - | | - | - | | - | - | | - | - | |
| 18 | ເຂດພິເສດໄຊສົມບູນ | - | - | | - | - | | - | - | | - | - | | - | - | | - | - | |
| | ລວມທົ່ວປະເທດ | 5,094 | 2,348 | 46.1 | 3,813 | 1,785 | 46.8 | 3,452 | 1,598 | 46.3 | 2,956 | 1,314 | 44.5 | 2,908 | 1,388 | 47.7 | 18,223 | 8,433 | 46.3 |

# ອັດຕາເຂົ້າໃໝ່ ປ 1ແຍກຕາມແຂວງ

ຕາຕະລາງ ທີ 06

ສົກຮຽນ 2003-2004

| ລະຫັດ ແຂວງ | ຊື່ແຂວງ | ເຂົ້າໃໝ່ ປ1 | | ປະຊາກອນ 6 ປີ | | ເຂົ້າໃໝ່ ປ1( 6 ປີ ) | | ອັດຕາເຂົ້າໃໝ່ລວມ (%) | | | ອັດຕາເຂົ້າໃໝ່ສຸດທິ (%) | | |
|---|---|---|---|---|---|---|---|---|---|---|---|---|---|
| | | ລວມ | ຍິງ | ລວມ | ຍິງ | ລວມ | ຍິງ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| 01 | ນະຄອນຫຼວງ | 14,643 | 7,088 | 15,579 | 7,665 | 12,204 | 6,015 | 94.0 | 92.5 | 95.5 | 78.3 | 78.5 | 78.2 |
| 02 | ຜົ້ງສາລີ | 6,456 | 2,730 | 4,870 | 2,396 | 1,357 | 692 | 132.6 | 113.9 | 150.6 | 27.9 | 28.9 | 26.9 |
| 03 | ຫລວງນ້ຳທາ | 5,393 | 2,630 | 3,877 | 1,909 | 1,969 | 1,068 | 139.1 | 137.8 | 140.4 | 50.8 | 55.9 | 45.8 |
| 04 | ອຸດົມໄຊ | 15,527 | 7,592 | 8,433 | 4,148 | 4,176 | 2,157 | 184.1 | 183.0 | 185.2 | 49.5 | 52.0 | 47.1 |
| 05 | ບໍ່ແກ້ວ | 5,237 | 2,474 | 3,936 | 1,946 | 2,419 | 1,183 | 133.1 | 127.1 | 138.8 | 61.5 | 60.8 | 62.1 |
